# ຄູ່ມືແນະນຳ ການລົງທຶນ ດ້ານກະສິກຳ ແລະ ປ່າໄມ້ ແບບມີຄວາມຮັບຜິດຊອບ ຢູ່ ສປປ ລາວ

ກໍລະນີສຶກສານັກລົງທຶນ ສປ ຈີນ
















2021

# ທີມງານພັດທະນາ ຄູ່ມືແນະນໍາ ການລົງທຶນດ້ານກະສິກໍາ ແລະ ປ່າໄມ້ ທີ່ມີຄວາມຮັບຜິດຊອບໃນ ສປປ ລາວ

## (ກໍລະນີສຶກສາຂອງນັກລົງທຶນ ສປ ຈີນ)

ປື້ມຄູ່ມືແນະນໍາ ການລົງທຶນດ້ານກະສິກໍາ ແລະ ປ່າໄມ້ ທີ່ມີຄວາມຮັບຜິດຊອບໃນ ສປປ ລາວ (ກໍລະນີສຶກສາຂອງນັກລົງທຶນ ສປ ຈີນ) ສະບັບນີ້ ແມ່ນພັດທະນາຂຶ້ນຮ່ວມກັນໂດຍທີມງານພັດທະນາຈາກຫຼາຍພາກສ່ວນ ທັງພາກລັດ, ອົງການຈັດຕັ້ງສາກົນ, ແລະ ຫົວໜ່ວຍທຸລະກິດ. ໃນນີ້ ສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດລາວ ແລະ ອົງການບ້ານຈຸດສຸມສາກົນ (VFI) ເປັນຫົວໜ່ວຍຫຼັກໃນການສ້າງຄູ່ມືແນະນໍາສະບັບນີ້ ໂດຍການມີສ່ວນຮ່ວມຈາກພາກລັດທີ່ກ່ຽວຂ້ອງ ຊຶ່ງລວມມີ: ກະຊວງ ກະສິກໍາ ແລະ ປ່າໄມ້ (ກົມປ່າໄມ້, ກົມປູກຝັງ, ກົມລ້ຽງສັດ ແລະ ການປະມົງ, ກົມແຜນການ ແລະ ການເງິນ, ກົມຄຸ້ມຄອງທີ່ດິນກະສິກໍາ, ກົມນະໂຍບາຍ ແລະ ນິຕິກໍາ), ກະຊວງ ຊັບພະຍາກອນ ທໍາມະຊາດ ແລະ ສິ່ງແວດລ້ອມ (ກົມທີ່ດິນ ແລະ ກົມສິ່ງແວດລ້ອມ), ກະຊວງ ແຜນການ ແລະ ການລົງທຶນ (ກົມສົ່ງເສີມການລົງທຶນ ແລະ ຄະນະກໍາມະການຮ່ວມມືລາວ-ຈີນ), ກະຊວງອຸດສາຫະກໍາ ແລະ ການຄ້າ (ກົມການຄ້າພາຍໃນ ແລະ ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ). ນອກຈາກນີ້ ຍັງມີອົງການຈັດຕັ້ງສາກົນ ແລະ ອົງການຈັດຕັ້ງທາງສັງຄົມທີ່ປະກອບຄໍາຄິດຄໍາເຫັນໃສ່ບົດດັ່ງກ່າວ ເຊັ່ນ: ໂຄງການບໍລິຫານກ່ຽວກັບທີ່ດິນປະຈໍາພາກພື້ນແມ່ນໍ້າຂອງ (MRLG), ອົງການ GIZ ປະຈໍາລາວ, ອົງການ Helvetas ປະຈໍາລາວ ແລະ ຕາງໜ້າພາກທຸລະກິດ (ບໍລິສັດ ຫຼືນສຸ່ຍ). ການພັດທະນາປື້ມຄູ່ມືດັ່ງກ່າວແມ່ນໄດ້ຮັບການສະໜັບສະໜູນຈາກ ອົງການອະນຸລັກສັດປ່າ (WCS) ປະຈໍາລາວ.

ເອກະສານສະບັບນີ້ແມ່ນໄດ້ຮັບທຶນຊ່ວຍເຫຼືອລ້າຈາກລັດຖະບານ ອັງກິດ; ເຖິງຢ່າງໃດກໍ່ຕາມ ແນວຄວາມຄິດທີ່ສະແດງໃນເອກະສານດັ່ງກ່າວ ບໍ່ຈໍາເປັນຕ້ອງສະທ້ອນເຖິງນະໂຍບາຍຂອງລັດຖະບານ ອັງກິດ.

# ສາລະບານ


1 ທີມງານພັດທະນາ ຄູ່ມືແນະນຳ ການລົງທຶນດ້ານກະສິກຳ ແລະ ປ່າໄມ້ ທີ່ມີຄວາມຮັບຜິດຊອບໃນ ສປປ ລາວ

2 ສາລະບານ

4 ອະທິບາຍຄຳສັບຫຍໍ້

5 ຄຳນຳ

6 ພາກທີ I. ພາກສະເໜີ

6 1. ຄວາມເປັນມາ
7 2. ຈຸດປະສົງ
8 3. ຜູ້ນຳໃຊ້
8 4. ການນຳໃຊ້
9 5. ກອບນິຕິກຳ ແລະ ບົດແນະນຳສາກົນທີ່ອ້າງເຖິງ

10 ພາກທີ II. ຫຼັກການ ສຳລັບການລົງທຶນທີ່ມີຄວາມຮັບຜິດຊອບໃນ ສປປ ລາວ

11 1. ການປຶກສາຫາລື ແລະ ສ່ວນຮ່ວມຂອງປະຊາຊົນ
12 2. ການເປີດເຜີຍຂໍ້ມູນ ແລະ ຄວາມໂປ່ງໃສ
13 3. ການເຄົາລົບສິດທິຂອງປະຊາຊົນໃນການນຳໃຊ້ທີ່ດິນ, ການປະມົງ, ປ່າໄມ້ ແລະ ແຫຼ່ງນ້ຳ
14 4. ການປະກອບສ່ວນເຂົ້າໃນການພັດທະນາສັງຄົມ
15 5. ການນຳໃຊ້ແຮງງານທ້ອງຖິ່ນ ແລະ ຄວາມປອດໄພຂອງແຮງງານ
16 6. ການຄວບຄຸມຄຸນນະພາບ ແລະ ຄວາມປອດໄພຂອງສິນຄ້າ
17 7. ການພັດທະນາສີຂຽວ ແລະ ການປົກປັກຮັກສາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ

19 ພາກທີ III. ການຈັດຕັ້ງປະຕິບັດ ການລົງທຶນດ້ານກະສິກຳ ແລະ ປ່າໄມ້ ແບບມີຄວາມຮັບຜິດຊອບ

23 1. ການກະກຽມ ແລະ ວາງແຜນການລົງທຶນ
1.1 ການເຂົ້າໃຈພາກສ່ວນທີ່ກ່ຽວຂ້ອງ ແລະ ຂັ້ນຕອນຂໍອະນຸມັດການລົງທຶນ
1.2 ການສຶກສາກອບລະບຽບກົດໝາຍ
1.3 ການປະເມີນຢ່າງຄົບຊຸດ
1.3.1 ການກຳນົດ ແລະ ປະເມີນສິດທີ່ດິນ ແລະ ການນຳໃຊ້ຊັບພະຍາກອນທຳມະຊາດຂອງຊຸມຊົນ
1.3.2 ການດຳເນີນການສຶກສາຄວາມເປັນໄປໄດ້
1.3.3 ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ (ESIA)
1.3.4 ການສຳຫຼວດ ແລະ ເກັບກູ້ລະເບີດທີ່ຍັງບໍ່ແຕກ (UXO) ອອກຈາກພື້ນທີ່ການລົງທຶນ

30 2. ການປຶກສາຫາລື ແລະ ການມີສ່ວນຮ່ວມຂອງປະຊາຊົນ
32 3. ການສ້າງກົນໄກການແກ້ໄຂຄຳຮ້ອງທຸກສຳລັບຜູ້ທີ່ຖືກຜົນກະທົບ
3.1 ການຮັບຟັງຄຳຮ້ອງທຸກ
3.2 ການແກ້ໄຂຂໍ້ສະເໜີ ແລະ ການແກ້ໄຂຂໍ້ຂັດແຍ່ງ
33 4. ການເຈລະຈາການເຮັດສັນຍາກັບປະຊາຊົນ
4.1 ການສ້າງຄວາມສະເໝີພາບໃນການເຈລະຈາ
4.2 ການຕົກລົງກ່ຽວກັບຂໍ້ກຳນົດທີ່ສຳຄັນໃນສັນຍາທີ່ເປັນລາຍລັກອັກສອນ
36 5. ການຊົດເຊີຍ ແລະ ຍົກຍ້າຍຈັດສັນ
5.1 ການຊົດເຊີຍ
5.2 ການຍົກຍ້າຍຈັດສັນ
38 6. ການພັດທະນາສັງຄົມ
6.1 ການແບ່ງປັນຜົນປະໂຫຍດກັບທ້ອງຖິ່ນ
6.2 ການສົ່ງເສີມການຈ້າງງານໃນທ້ອງຖິ່ນ ແລະ ຝຶກອົບຮົມໃຫ້ແກ່ພະນັກງານ
40 7. ການຫຼຸດຜ່ອນຜົນກະທົບດ້ານສິ່ງແວດລ້ອມ ແລະ ທຳມະຊາດ
7.1 ການປະເມີນ ແລະ ປົກປ້ອງຊີວະນາໆພັນ
7.2 ການຫຼຸດຜ່ອນຜົນກະທົບຈາກການນຳໃຊ້ສານເຄມີຂອງຢາຂ້າແມງໄມ້ ແລະ ຢາຂ້າຫຍ້າ
7.3 ການປະຕິບັດຕາມມາດຕະຖານຂອງການຄວບຄຸມມົນລະພິດ ແລະ ກຳຈັດສິ່ງເສດເຫຼືອ
7.4 ການຟື້ນຟູສະພາບສິ່ງແວດລ້ອມຫຼັງການລົງທຶນ
44 8. ການຮັບປະກັນຄຸນນະພາບຂອງຜະລິດຕະພັນກະສິກຳ ແລະ ປ່າໄມ້
8.1 ການຮັບປະກັນຄຸນນະພາບ ແລະ ຄວາມປອດໄພຂອງຜະລິດຕະພັນກະສິກຳ
8.2 ການຂຸດຄົ້ນໄມ້ ແລະ ເຄື່ອງປ່າຂອງດົງແບບຍືນຍົງ ແລະ ຖືກຕ້ອງ
46 9. ການຕິດຕາມ ແລະ ການກວດກາ
9.1 ການຕິດຕາມການລົງທຶນ ໃນແຕ່ລະໄລຍະ
9.2 ການເປີດເຜີຍຂໍ້ມູນການລົງທຶນ ແລະ ຜົນຂອງການຕິດຕາມ

48 ພາກທີ IV. ພາກສະຫຼຸບ

44 ພາກທີ V. ເອກະສານຊ້ອນທ້າຍ

52 ເອກະສານຊ້ອຍທ້າຍ I: ລາຍການກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງກັບການລົງທຶນດ້ານກະສິກຳ ແລະ ປ່າໄມ້
55 ເອກະສານຊ້ອຍທ້າຍ II: ບາງພາກສ່ວນທີ່ກ່ຽວຂ້ອງ ໃນການລົງທຶນດ້ານກະສິກຳ ແລະ ປ່າໄມ້ ຢູ່ ສປປ ລາວ

# ອະທິບາຍຄຳສັບຫຍໍ້

CAPIAC = China Association for the Promotion of International Agricultural Cooperation (ສະມາຄົມຈີນເພື່ອສົ່ງເສີມການຮ່ວມມືດ້ານກະສິກຳສາກົນ)

CFS = Committee on World Food Security (ຄະນະກຳມະການຄ້ຳປະກັນອາຫານໂລກ)

ECC = Environmental Compliance Certificate (ໃບຢັ້ງຢືນການປະຕິບັດຕາມຂໍ້ກຳນົດດ້ານສິ່ງແວດລ້ອມ)

EMMP = Environmental Management and Monitoring Plan (ການຈັດການສິ່ງແວດລ້ອມ ແລະ ແຜນການຕິດຕາມ)

ESIA = Environmental and Social Impact Assessment (ການປະເມີນຜົນກະທົບສິ່ງແວດລ້ອມ ແລະ ສັງຄົມ)

FAO = Food and Agriculture Organization (ອົງການອາຫານ ແລະ ການກະເສດ)

FPIC = Free, Prior, and Informed Consent (ການຍິນຍອມດ້ວຍຄວາມສະໝັກໃຈ ໂດຍໄດ້ຮັບຂໍ້ມູນລ່ວງໜ້າ ແລະ ພຽງພໍ)

GAP = Good Agricultural Practices (ການປະຕິບັດກະສິກຳທີ່ດີ)

IFAD = International Fund for Agricultural Development (ກອງທຶນສາກົນ ເພື່ອການພັດທະນາກະສິກຳ)

MOFCOM = Ministry of Commerce, China (ກະຊວງການຄ້າ, ສປ ຈີນ)

MOU = Memorandum of understanding (ບົດບັນທຶກຊ່ວຍຈຳ)

NFGA = National Forestry and Grassland Administration, China (ການບໍລິຫານປ່າໄມ້ ແລະ ທົ່ງຫຍ້າ ແຫ່ງຊາດ)

OA = Organic Agriculture (ກະສິກຳປອດສານພິດ)

OECD = Organisation for Economic Co-operation and Development (ອົງການການຮ່ວມມືດ້ານເສດຖະກິດ ແລະ ການພັດທະນາ)

UXO = Unexploded ordnance (ລະເບີດທີ່ຍັງບໍ່ທັນແຕກ)

VGGT = Voluntary Guidelines on the Responsible Governance of Tenure of Land, Fisheries and Forests in the Context of National Food Security (ພັນທະດ້ວຍຄວາມສະໝັກໃຈສຳລັບທຸລະກິດກະສິກຳທີ່ມີຄວາມຮັບຜິດຊອບໃນ ສປປ ລາວ)

# ຄຳນຳ

ໃນຊຸມປີຜ່ານມາລັດຖະບານ ສປປ ລາວ ໄດ້ໃຫ້ຄວາມສຳຄັນໃນການສົ່ງເສີມການດຶງດູດການລົງທຶນຈາກພາຍໃນ ແລະ ຕ່າງປະເທດ ເພື່ອການພັດທະນາເສດຖະກິດ-ສັງຄົມ ແລະ ປັບປຸງຊີວິດການເປັນຢູ່ປະຊາຊົນໃຫ້ນັບມື້ນັບດີຂຶ້ນ ການລົງທຶນທີ່ມີຄວາມຮັບຜິດຊອບຈຶ່ງເປັນສິ່ງທີ່ສຳຄັນ ແລະ ຈຳເປັນ ເພື່ອຈະກ້າວໄປສູ່ການພັດທະນາທີ່ຍືນຍົງ. ໃນປະຈຸບັນ, ໄດ້ມີນັກລົງທຶນຈາກຫຼາຍປະເທດເຂົ້າມາລົງທຶນຢູ່ ສປປ ລາວ, ໂດຍສະເພາະແມ່ນການລົງທຶນ ທີ່ມາຈາກ ສປ ຈີນ ຊຶ່ງເປັນອັນດັບທີ 1 ຂອງການລົງທຶນຕ່າງປະເທດຢູ່ ສປປ ລາວ. ໃນນັ້ນ, ຂະແໜງກະສິກຳ ແລະ ປ່າໄມ້ ແມ່ນໜຶ່ງໃນຂະແໜງການທີ່ໄດ້ຮັບຄວາມສົນໃຈຈາກນັກລົງທຶນຕ່າງປະເທດ. ອີງຕາມສະພາບການລົງທຶນໃນໄລຍະຜ່ານມາ, ຍັງມີຫຼາຍໆໂຄງການລົງທຶນທີ່ພົບພໍ້ບັນຫາ, ໂດຍສະເພາະແມ່ນການລົງທຶນທີ່ບໍ່ມີຄວາມຮັບຜິດຊອບ ຊຶ່ງສ້າງຜົນກະທົບສູງສົມຄວນຕໍ່ນັກລົງທຶນ ແລະ ປະເທດຊາດ. ເຖິງແມ່ນວ່າລັດຖະບານຈີນຈະມີບົດແນະນຳສຳລັບນັກລົງທຶນຈີນທີ່ໄປລົງທຶນຢູ່ຕ່າງປະເທດ ແລະ ມີບົດແນະນຳກ່ຽວກັບການລົງທຶນທີ່ມີຄວາມຮັບຜິດຊອບຈຳນວນໜຶ່ງໃນລະດັບສາກົນ, ແຕ່ໃນ ສປປ ລາວ ກໍຍັງບໍ່ທັນມີຄູ່ມືແນະນຳທີ່ມີຄວາມສະເພາະເຈາະຈົງ ເພື່ອໃຫ້ນັກລົງທຶນທີ່ເຂົ້າມາລົງທຶນໃນ ສປປ ລາວ ໂດຍສະເພາະໃນຂະແໜງກະສິກຳ ແລະ ປ່າໄມ້ ໃຫ້ເປັນແນວທາງໃນການຈັດຕັ້ງປະຕິບັດການລົງທຶນທີ່ມີຄວາມຮັບຜິດຊອບເພື່ອຫຼີກລ່ຽງຜົນເສຍຫາຍທີ່ບໍ່ຈຳເປັນໃຫ້ແກ່ນັກລົງທຶນເອງ ແລະ ປະເທດຊາດ.

ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ມີຈຸດປະສົງເພື່ອສົ່ງເສີມການລົງທຶນແບບມີຄວາມຮັບຜິດຊອບ ໃຫ້ກ້າວໄປສູ່ ການພັດທະນາແບບຍືນຍົງ ຕາມທິດທາງການພັດທະນາສີຂຽວ ແລະ ຍືນຍົງຂອງລັດຖະບານ ຊຶ່ງໄດ້ຮ່ວມມືກັບພາກສ່ວນທີ່ກ່ຽວຂ້ອງເຊັ່ນ: ກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງແຜນການ ແລະ ການລົງທຶນ, ກະຊວງກະສິກຳ ແລະ ປ່າໄມ້ ແລະ ກະຊວງຊັບພະຍາກອນ ທຳມະຊາດ ແລະ ສິ່ງແວດລ້ອມ ເພື່ອສຶກສາຄົ້ນຄວ້າໃນການສ້າງຄູ່ມືແນະນຳສະບັບນີ້ເພື່ອໃຫ້ເປັນແນວທາງໃນການຈັດຕັ້ງປະຕິບັດການລົງທຶນແກ່ນັກລົງທຶນ, ໂດຍເລີ່ມຕົ້ນຈາກການສຶກສາກໍລະນີຂອງ ນັກລົງທຶນຈາກ ສປ ຈີນ. ຊຶ່ງຄູ່ມືແນະນຳສະບັບນີ້ໄດ້ອີງຕາມກົດລະບຽບ, ຫຼັກການ ແລະ ກົດໝາຍທີ່ກ່ຽວຂ້ອງຂອງ ສປປ ລາວ, ສຶກສາລວມເອົາບັນດາຫຼັກການສາກົນທີ່ທົ່ວໂລກນຳໃຊ້ໃນວຽກງານການລົງທຶນ ແລະ ຫຼັກການຂອງອາຊຽນ ໃນວຽກງານການລົງທຶນ ແລະ ຍັງໄດ້ສຶກສາເອົາບົດແນະນຳຂອງລັດຖະບານ ສປ ຈີນ ສຳລັບການລົງທຶນໃນຂະແໜງກະສິກຳ ແລະ ປ່າໄມ້ ໃຫ້ມີຄວາມສະເພາະເຈາະຈົງ ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມຂອງ ສປປ ລາວ ເພື່ອເປັນແນວທາງໃຫ້ກັບນັກລົງທຶນ ໄດ້ນຳໄປຈັດຕັ້ງປະຕິບັດເພື່ອໃຫ້ເກີດມີຄວາມຍືນຍົງ. ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ຈະພັກດັນໂຄສະນາແນະນຳຄູ່ມືດັ່ງກ່າວນີ້ໃຫ້ແກ່ນັກລົງທຶນຕ່າງປະເທດເພື່ອສຶກສາ ໂດຍສະເພາະນັກລົງທຶນຈາກ ສປ ຈີນ ທີ່ຈະມາລົງທຶນຢູ່ ສປປ ລາວ ແລະ ເຊື່ອໝັ້ນວ່າຄູ່ມືແນະນຳສະບັບນີ້ຈະສາມາດສະໜອງຂໍ້ມູນທີ່ເປັນປະໂຫຍດ ແລະ ຄົບຊຸດໃຫ້ກັບນັກລົງທຶນ ເພື່ອດຶງດູດການລົງທຶນທີ່ມີປະສິດທິພາບ, ປະສິດທິຜົນ, ມີຄວາມຮັບຜິດຊອບ ແລະ ຍືນຍົງເຂົ້າມາໃນ ສປປ ລາວ ໃຫ້ນັບມື້ນັບຫຼາຍຂຶ້ນ ເພື່ອປະກອບສ່ວນສຳຄັນໃນການສ້າງສາພັດທະນາປະເທດຊາດໃຫ້ນັບມື້ນັບຂະຫຍາຍຕົວ. ຖ້າຫາກການສ້າງ, ເຜີຍແຜ່ ແລະ ນຳໃຊ້ກໍລະນີສຶກສານັກລົງທຶນຈາກ ສປ ຈີນ ນີ້ໄດ້ຮັບຜົນສຳເລັດຕາມເປົ້າໝາຍ, ໃນອະນາຄົດ ກໍຈະໄດ້ສືບຕໍ່ ສ້າງກໍລະນີສຶກສາຂອງນັກລົງທຶນ ຈາກປະເທດອື່ນໆເພີ່ມອີກ.

ຫວັງຢ່າງຍິ່ງວ່າ ຄູ່ມືແນະນຳສະບັບນີ້ຈະເປັນບ່ອນອີງໜຶ່ງທີ່ສ້າງຄວາມສະດວກ ແລະ ເປັນປະໂຫຍດໃຫ້ແກ່ບັນດານັກລົງທຶນຢູ່ ສປປ ລາວ.

ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ

ອຸເດດ ສຸວັນນະວົງ

# ພາກທີ I. ພາກສະເໜີ



## 1. ຄວາມເປັນມາ

ເນື່ອງຈາກວ່າ ສປປ ລາວ ເປັນປະເທດທີ່ຍັງດ້ອຍພັດທະນາ ແລະ ຖືເອົາການເຮັດກະສິກຳເປັນຫຼັກ, ການຂະຫຍາຍໂຕຂອງຂະແໜງກະສິກຳ ແລະ ປ່າໄມ້ ແມ່ນເປັນສິ່ງສຳຄັນຕໍ່ການພັດທະນາເສດຖະກິດ-ສັງຄົມ ແລະ ປັບປຸງຊີວິດການເປັນຢູ່ຂອງປະຊາຊົນລາວ. ນອກຈາກນີ້, ຍັງເປັນຂະແໜງການທີ່ດຶງດູດການລົງທຶນທັງພາຍໃນ ແລະ ຕ່າງປະເທດໄດ້ຢ່າງຫຼວງຫຼາຍ ຊຶ່ງປະກອບສ່ວນສຳຄັນໃນການສ້າງເສດຖະກິດຂອງ ສປປ ລາວ ໃຫ້ມີການຂະຫຍາຍຕົວຢ່າງວ່ອງໄວ. ແຕ່ວ່າການລົງທຶນດັ່ງກ່າວແມ່ນ ຍັງສ້າງຜົນກະທົບທາງດ້ານລົບແກ່ສັງຄົມ ແລະ ສິ່ງແວດລ້ອມເຊັ່ນກັນ. ຜົນກະທົບທາງດ້ານລົບໃນໄລຍະຜ່ານມາທີ່ສາມາດສັງເກດເຫັນໄດ້ ແມ່ນການບຸກລຸກພື້ນທີ່ປ່າໄມ້ທຳມະຊາດ, ການປ່ອຍສານເຄມີລົງສູ່ແຫຼ່ງນ້ຳທຳມະຊາດ, ການຍຶດຄອງທີ່ດິນຂອງປະຊາຊົນ ແລະ ການກົດຂີ່ທາງດ້ານແຮງງານ. ຜົນກະທົບດັ່ງກ່າວເກີດຂຶ້ນ ຍ້ອນຫຼາຍສາເຫດ ໂດຍສະເພາະແມ່ນຍ້ອນການລົງທຶນທີ່ຂາດຄວາມຮັບຜິດຊອບຂອງນັກລົງທຶນ ອາດເນື່ອງຈາກຂໍ້ຈຳກັດໃນການຕິດຕາມ, ກວດກາການລົງທຶນ ແລະ ການປະຕິບັດລະບຽບກົດໝາຍ ຂອງພາກສ່ວນທີ່ກ່ຽວຂ້ອງ ຍັງບໍ່ທົ່ວເຖິງ. ນັກລົງທຶນທີ່ມີຄວາມຕັ້ງໃຈຕໍ່ການລົງທຶນແບບມີຄວາມຮັບຜິດຊອບບໍ່ພຽງແຕ່ປະຕິບັດຕາມກົດໝາຍ ແລະ ນິຕິກຳຂອງ ສປປ ລາວ ເທົ່ານັ້ນ, ແຕ່ຍັງຕ້ອງປະຕິບັດຕາມມາດຕະຖານສາກົນ ເພື່ອຫຼີກລ່ຽງການສ້າງຜົນກະທົບຕໍ່ກັບສັງຄົມ ແລະ ສິ່ງແວດລ້ອມ.

ໃນສິບປີທີ່ຜ່ານມາ, ການນັກລົງທຶນ ສປ ຈີນ ຢູ່ ສປປ ລາວ ໄດ້ເພີ່ມຂຶ້ນຢ່າງຫຼາຍ ຊຶ່ງປະຈຸບັນຈີນແມ່ນນັກລົງທຶນຕ່າງປະເທດທີ່ໃຫຍ່ທີ່ສຸດໃນ ສປປ ລາວ ແລະ ມີທ່າອ່ຽງເພີ່ມຂຶ້ນ ໂດຍສະເພາະໃນຂະແໜງກະສິກຳ ແລະ ປ່າໄມ້, ຂະແໜງບໍ່ແຮ່ ແລະ ພະລັງງານໄຟຟ້າ. ເພື່ອຮັບປະກັນວ່ານັກລົງທຶນຈາກ ສປ ຈີນ ທີ່ດຳເນີນການລົງທຶນໃນຕ່າງປະເທດໃຫ້ມີຄວາມຍືນຍົງ, ລັດຖະບານຈີນ ໄດ້ພັດທະນາບົດແນະນຳຫຼາຍສະບັບຂຶ້ນເພື່ອເປັນແນວທາງໃຫ້ນັກລົງທຶນດັ່ງກ່າວ ໄດ້ປະຕິບັດຕາມມາດຕະຖານສາກົນເພື່ອຫຼຸດຜ່ອນຜົນກະທົບທາງລົບ. ເຖິງຢ່າງໃດກໍຕາມ,

ຫຼັກການເຫຼົ່ານີ້ເປັນພຽງແນວທາງທົ່ວໄປ ຊຶ່ງບໍ່ໄດ້ແນະນຳສຳລັບປະເທດໃດປະເທດໜຶ່ງເທົ່ານັ້ນ. ຄູ່ມືແນະນຳຂອງ ສປປ ລາວ ແມ່ນມີຄວາມສຳຄັນຫຼາຍ ເພື່ອຮັບປະກັນວ່ານັກລົງທຶນຈາກ ສປ ຈີນ ສາມາດເຂົ້າເຖິງຂໍ້ມູນເພື່ອຈັດຕັ້ງປະຕິບັດຕາມຄູ່ມືແນະນຳສະບັບນີ້ ລວມທັງຈັດຕັ້ງປະຕິບັດຕາມກົດໝາຍ ແລະ ລະບຽບຂອງ ສປປ ລາວ.

ເລີ່ມແຕ່ເດືອນພະຈິກ 2020 ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ຮ່ວມກັບພາກສ່ວນທີ່ກ່ຽວຂ້ອງ ລວມມີ ກະຊວງອຸດສາຫະກຳການຄ້າ, ກະຊວງແຜນການ ແລະ ການລົງທຶນ, ກະຊວງກະສິກຳ ແລະ ປ່າໄມ້, ກະຊວງຊັບພະຍາກອນ ທຳມະຊາດ ແລະ ສິ່ງແວດລ້ອມ, ກະຊວງອຸດສາຫະກຳ ແລະ ການຄ້າ ແລະ ອົງການບ້ານຈຸດສຸມສາກົນ (VFI) ແລະ ອົງການອະນຸລັກສັດປ່າ (WCS) ໄດ້ຮ່ວມກັນດັດປັບບົດແນະນຳສາກົນ ແລະ ຂອງລັດຖະບານຈີນ ຕໍ່ກັບການລົງທຶນທີ່ມີຄວາມຮັບຜິດຊອບ ສຳລັບຂະແໜງກະສິກຳ ແລະ ປ່າໄມ້ ເພື່ອໃຫ້ມາເປັນຄູ່ມືແນະນຳການລົງທຶນດ້ານກະສິກຳ ແລະ ປ່າໄມ້ ແບບມີຄວາມຮັບຜິດຊອບ ທີ່ມີຄວາມສະເພາະເຈາະຈົງ ແລະ ນຳໃຊ້ຢູ່ໃນ ສປປ ລາວ. ຄູ່ມືແນະນຳການລົງທຶນດ້ານກະສິກຳ ແລະ ປ່າໄມ້ນີ້ຍັງໄດ້ຜ່ານການປຶກສາຫາລືກັບພາກສ່ວນເອກະຊົນ ໂດຍສະເພາະນັກລົງທຶນຈີນ ແລະ ພາກປະຊາສັງຄົມ ແລະ ອົງການຈັດຕັ້ງສາກົນອື່ນໆ ເພື່ອໃຫ້ແນ່ໃຈວ່າພວກເຂົາໄດ້ປະກອບຄຳຄິດຄຳເຫັນ ແລະ ມີຄວາມເປັນເອກະພາບຕໍ່ກັບຄູ່ມືດັ່ງກ່າວ. ດັ່ງນັ້ນ, ເອກະສານສະບັບນີ້ສາມາດຖືໄດ້ວ່າເປັນແນວຄວາມຄິດທີ່ເຂັ້ມແຂງຂອງຂະແໜງການຕ່າງໆ ກ່ຽວກັບວິທີການດຳເນີນການລົງທຶນດ້ານກະສິກຳ ແລະ ປ່າໄມ້ ແບບມີຄວາມຮັບຜິດຊອບໃນ ສປປ ລາວ.

## 2. ຈຸດປະສົງ

ຄູ່ມືແນະນຳການລົງທຶນດ້ານກະສິກຳ ແລະ ປ່າໄມ້ນີ້ ມີຈຸດປະສົງເພື່ອສະໜອງຫຼັກການ ແລະ ແນວທາງປະຕິດບັດເພື່ອສົ່ງເສີມການລົງທຶນທີ່ມີຄວາມຮັບຜິດຊອບ ໃນຂະແໜງກະສິກຳ ແລະ ປ່າໄມ້ ໃນ ສປປ ລາວ ແນໃສ່ໃຫ້ເກີດມີການພັດທະນາເສດຖະກິດ ແລະ ສັງຄົມໃນປະເທດໃຫ້ມີຄວາມຍືນຍົງ ໂດຍການດັດປັບບົດແນະນຳການລົງທຶນຂອງລັດຖະບານ ສປ ຈີນ ໃຫ້ມີຄວາມສະເພາະເຈາະຈົງ ແລະ ແທດເໝາະກັບສະພາບການຂອງ ສປປ ລາວ ຊຶ່ງແນໃສ່:

- ຊ່ວຍໃຫ້ນັກລົງທຶນຈາກ ສປ ຈີນ ແລະ ປະເທດອື່ນໆ ທີ່ມີຈຸດປະສົງເຂົ້າມາລົງທຶນຢູ່ ສປປ ລາວ ໃຊ້ເປັນເຄື່ອງມືຄົບຊຸດ ໃນການວາງແຜນ ແລະ ຈັດຕັ້ງປະຕິບັດດ້ານສັງຄົມ ແລະ ສິ່ງແວດລ້ອມ ຂອງການລົງທຶນຢູ່ ສປປ ລາວ ຢ່າງມີຄວາມຮັບຜິດຊອບ;
- ທ້ອນໂຮມເອົາບັນດານະໂຍບາຍ, ກົດໝາຍ ແລະ ລະບຽບການຕ່າງໆ ທີ່ກ່ຽວຂ້ອງກັບການລົງທຶນດ້ານກະສິກຳ ແລະ ປ່າໄມ້ໃນ ສປປ ລາວ ມາໄວ້ເພື່ອສະດວກ ແລະ ງ່າຍຕໍ່ນັກລົງທຶນທີ່ຈະເຂົ້າເຖິງຂໍ້ມູນດັ່ງກ່າວ;
- ຖ້ານັກລົງທຶນ ຫຼື ໂຄງການລົງທຶນ ປະຕິບັດຕາມບົດແນະນຳດັ່ງກ່າວຈະຊ່ວຍສ້າງຄວາມເຊື່ອໝັ້ນ ລະຫວ່າງຊຸມຊົນ, ລັດຖະບານລາວ ແລະ ໂຄງການລົງທຶນ ເພື່ອຫຼຸດຜ່ອນຄວາມລ່າຊ້າຂອງການລົງທຶນ ແລະ ຫຼຸດຜ່ອນຄວາມສ່ຽງທີ່ອາດເກີດຈາກຄວາມບໍ່ເຂົ້າໃຈກັນ.










## 3. ຜູ້ນຳໃຊ້

ຄູ່ມືແນະນຳການລົງທຶນດ້ານກະສິກຳ ແລະ ປ່າໄມ້ ແບບມີຄວາມຮັບຜິດຊອບ ສະບັບນີ້ພັດທະນາຂຶ້ນເພື່ອເປັນເຄື່ອງມືໃຫ້ນັກລົງທຶນ ຈາກ ສປ ຈີນ ທີ່ມາລົງທຶນໃນຂະແໜງກະສິກຳ ແລະ ປ່າໄມ້ຢູ່ ສປປ ລາວ. ຄູ່ມືແນະນຳດັ່ງກ່າວ ຍັງເປັນປະໂຫຍດແກ່ນັກລົງທຶນທັງພາຍໃນ ແລະ ນັກລົງທຶນມາຈາກປະເທດຕ່າງໆ ທີ່ຢາກເຂົ້າມາລົງທຶນຢູ່ ສປປ ລາວ. ນອກຈາກນີ້, ມັນຍັງເປັນປະໂຫຍດໃຫ້ກັບນັກວິຊາການພາກລັດ ລວມທັງນັກຄົ້ນຄວ້າ, ນັກສຶກສາ, ປະຊາຊົນທົ່ວໄປ ແລະ ຜູ້ອື່ນໆ ທີ່ມີຄວາມສົນໃຈໃນວຽກງານການລົງທຶນແບບມີຄວາມຮັບຜິດຊອບ.

## 4. ການນຳໃຊ້

ຄູ່ມືແນະນຳສະບັບນີ້ປະກອບດ້ວຍ 5 ພາກຄື: ພາກທີ 1 ແມ່ນກ່າວເຖິງຄວາມເປັນມາໃນການພັດທະນາຄູ່ມືແນະນຳສະບັບນີ້, ພາກທີ 2 ກຳນົດຫຼັກການສຳລັບການລົງທຶນທີ່ມີຄວາມຮັບຜິດຊອບ, ພາກທີ 3 ແມ່ນການຈັດຕັ້ງປະຕິບັດລົງທຶນທີ່ມີຄວາມຮັບຜິດຊອບ ໃນຂະແໜງກະສິກຳ ແລະ ປ່າໄມ້ ເພື່ອໃຫ້ນັກລົງທຶນນຳໄປຈັດຕັ້ງປະຕິບັດໃນແຕ່ລະໄລຍະຂອງການລົງທຶນ, ພາກທີ 4 ແມ່ນພາກສະຫຼຸບ ແລະ ສຸດທ້າຍແມ່ນພາກຊ້ອນທ້າຍທີ່ປະກອບດ້ວຍບັນດາກົດໝາຍ ແລະ ລະບຽບການຂອງ ສປປ ລາວ ແລະ ພາກສ່ວນທີ່ກ່ຽວຂ້ອງ.

ນັກລົງທຶນສາມາດອ້າງອີງໃສ່ຄູ່ມືສະບັບນີ້ ເພື່ອເຂົ້າໃຈລະບຽບການຂອງ ສປປ ລາວ, ມາດຕະຖານຂອງ ສປ ຈີນ ແລະ ສາກົນ ໃນຂະນະວາງແຜນການລົງທຶນ ແລະ ການຈັດຕັ້ງປະຕິບັດ ເພື່ອໃຫ້ສອດຄ່ອງກັບຄວາມຕ້ອງການຂອງລັດຖະບານລາວ ແລະ ລັດຖະບານຈີນ ວ່າດ້ວຍການລົງທຶນແບບຍືນຍົງ. ເຖິງຢ່າງໃດກໍຕາມ, ຂໍ້ມູນທີ່ໄດ້ທ້ອນໂຮມ ແລະ ສັງລວມໄວ້ໃນຄູ່ມືສະບັບນີ້ ເປັນພຽງຂໍ້ມູນບາງສ່ວນ ຊຶ່ງຍັງມີບາງເນື້ອໃນທີ່ອາດບໍ່ຄົບຖ້ວນ, ສົມບູນ ແລະ ບໍ່ໄດ້ສິ້ນສຸດພຽງເທົ່ານີ້, ຊຶ່ງມັນຍັງມີບົດແນະນຳສຳລັບການດຳເນີນງານໃນລະດັບສາກົນ, ພາກພື້ນ ແລະ ກອບກົດໝາຍຂອງ ສປປ ລາວ ກ່ຽວກັບພັນທະທາງດ້ານສັງຄົມ ແລະ ສິ່ງແວດລ້ອມ ທີ່ນັກລົງທຶນຄວນຈະຊອກຫາເພີ່ມເຕີມ.

# 5. ນິຕິກຳ ແລະ ບົດແນະນຳສາກົນທີ່ອ້າງເຖິງ

ຄູ່ມືສະບັບນີ້ໄດ້ສັງລວມເອົາບັນດາຫຼັກການ ຈາກບົດແນະນຳຂອງສາກົນ, ບົດແນະນຳລັດຖະບານ ສປ ຈີນ ແລະ ລະບຽບກົດໝາຍຂອງ ສປປ ລາວ ດັ່ງລຸ່ມນີ້:

## ບົດແນະນຳຂອງສາກົນ:



1. ຄູ່ມືຂອງອາຊຽນ (ASEAN) ກ່ຽວກັບການສົ່ງເສີມການລົງທຶນຢ່າງມີຄວາມຮັບຜິດຊອບໃນດ້ານອາຫານ, ກະສິກຳ ແລະ ປ່າໄມ້;
2. ບົດແນະນຳຕາມຄວາມສະໝັກໃຈ ວ່າດ້ວຍການຄຸ້ມຄອງບໍລິຫານ ການຄອບຄອງນຳໃຊ້ຢ່າງມີຄວາມຮັບຜິດຊອບ ໃນເລື່ອງທີ່ດິນ, ພື້ນທີ່ປະມົງ ແລະ ປ່າໄມ້ ໃນເງື່ອນໄຂຄວາມໝັ້ນຄົງດ້ານສະບຽງອາຫານຂອງຊາດ (VGGT);
3. ຫຼັກການ ສຳລັບການລົງທຶນຢ່າງມີຄວາມຮັບຜິດຊອບຢູ່ໃນການກະສິກຳ ແລະ ລະບົບສະບຽງອາຫານ (ຫຼັກການ CFS);
4. ຫຼັກການຊີ້ນຳຂອງອົງການສະຫະປະຊາຊາດ ວ່າດ້ວຍທຸລະກິດ ແລະ ສິດທິມະນຸດ;
5. ຫຼັກການ ສຳລັບການລົງທຶນດ້ານກະສິກຳຢ່າງມີຄວາມຮັບຜິດຊອບ ທີ່ເຄົາລົບສິດ, ຊີວິດການເປັນຢູ່ ແລະຊັບພະຍາກອນ (ທະນາຄານໂລກ, UNCTAD, FAO ແລະ IFAD);
6. ບົດແນະນຳ ວ່າດ້ວຍ ຕ່ອງໂສ້ອຸປະທານດ້ານກະສິກຳຢ່າງມີຄວາມຮັບຜິດຊອບ (OECD ແລະ FAO);
7. ສົນທິສັນຍາຊີວະນາໆພັນ (CBD);
8. ສົນທິສັນຍາ ຣາມຊາ ວ່າດ້ວຍເຂດດິນບໍລິເວນນ້ຳ (Ramsar Convention on Wetlands);













## ບົດແນະນຳຂອງລັດຖະບານ ສປ ຈີນ:



1. ກົດໝາຍປ່າໄມ້ ແລະ ກົດລະບຽບໃນການຈັດຕັ້ງປະຕິບັດ;
2. ບົດແນະນຳກ່ຽວກັບການປົກປັກຮັກສາສິ່ງແວດລ້ອມໃນການລົງທຶນ ແລະ ການຮ່ວມມືໃນຕ່າງປະເທດ (MOFCOM ແລະ ກະຊວງປົກປັກຮັກສາສິ່ງແວດລ້ອມ);
3. ແນວທາງການລົງທຶນໃນຕ່າງປະເທດແບບຍືນຍົງດ້ານກະສິກຳຂອງ ສປ ຈີນ (CAPIAC);
ຄູ່ມືແນະນຳກ່ຽວກັບການຄຸ້ມຄອງ ແລະ ການນຳໃຊ້ປ່າໄມ້ໃນຕ່າງປະເທດແບບຍືນຍົງຂອງວິສາຫະກິດ ສປ ຈີນ (SFA ແລະ MOFCOM);
4. ຄູ່ມືແນະນຳກ່ຽວກັບການຂະຫຍາຍຕົວ ແລະ ການປູກຕົ້ນໄມ້ ໃນຕ່າງປະເທດແບບຍືນຍົງ ຂອງ
5. ວິສາຫະກິດ ສປ ຈີນ (SFA ແລະ MOFCOM);

## ນິຕິກຳທີ່ກ່ຽວຂ້ອງໃນ ສປປ ລາວ:



ນິຕິກຳຂອງ ສປປ ລາວ ປະກອບມີບັນດາ ກົດໝາຍ, ດຳລັດ, ຄຳສັ່ງ, ຄຳແນະນຳ, ແຜນຍຸດທະສາດຕ່າງໆ ຊຶ່ງມີລາຍລະອຽດໃນບົດຊ້ອນທ້າຍ.

# ພາກທີ II. ຫຼັກການ ສຳລັບການລົງທຶນທີ່ມີ ຄວາມຮັບຜິດຊອບ ໃນ ສປປ ລາວ

ບັນດາຫຼັກການຕໍ່ໄປນີ້ ໄດ້ຖືກກຳນົດຂຶ້ນໂດຍອີງໃສ່ ບົດແນະນຳການລົງທຶນຂອງລັດຖະບານ ສປ ຈີນ ແລະ ຍັງສອດຄ່ອງກັບບັນດາຫຼັກການສາກົນ. ການລວມເອົາບັນດາຫຼັກການແນະນຳເຫຼົ່ານີ້ ສາມາດຊ່ວຍໃຫ້ນັກລົງທຶນດ້ານກະສິກຳ ແລະ ປ່າໄມ້ ຫຼຸດຜ່ອນຄວາມສ່ຽງຂອງໂຄງການ ແລະ ບັນລຸຜົນໄດ້ຮັບທາງບວກຕໍ່ສັງຄົມ ແລະ ສິ່ງແວດລ້ອມ ແລະ ໂຄງການຂອງນັກລົງທຶນເອງ.




# 1. ການປຶກສາຫາລື ແລະ ມີສ່ວນຮ່ວມຂອງປະຊາຊົນ

ການລົງທຶນໃນດ້ານກະສິກຳ ແລະ ປ່າໄມ້ທີ່ມີຄວາມຮັບຜິດຊອບໃນ ສປປ ລາວ ຈະຕ້ອງມີການປຶກສາຫາລືຮ່ວມກັບປະຊາຊົນທ້ອງຖິ່ນຕັ້ງແຕ່ເລີ່ມຕົ້ນ ແລະ ຕະຫຼອດໄລຍະຂອງການດຳເນີນໂຄງການລົງທຶນ ເພື່ອຂໍຄວາມຍິນຍອມ. ການມີສ່ວນຮ່ວມຂອງປະຊາຊົນແມ່ນເປັນສິ່ງຈຳເປັນ ແລະ ສຳຄັນທີ່ສຸດ ເພາະປະຊາຊົນເປັນເຈົ້າຂອງພື້ນທີ່ ແລະ ເປັນຜູ້ທີ່ຈະໄດ້ຮັບຜົນກະທົບທັງດ້ານບວກ ແລະ ດ້ານລົບຈາກໂຄງການລົງທຶນນັ້ນ. ຖະແຫຼງການຂອງສະຫະປະຊາຊາດ ວ່າດ້ວຍສິດທິຂອງພື້ນເມືອງ (UNDRIP, 2015) ໄດ້ລະບຸວ່າ: ລັດຄວນປຶກສາຫາລື ແລະ ເຮັດວຽກຮ່ວມກັບປະຊາຊົນຢ່າງຈິງໃຈ ເພື່ອໃຫ້ໄດ້ຮັບການຍິນຍອມດ້ວຍຄວາມສະໝັກໃຈ ໂດຍໄດ້ຮັບຂໍ້ມູນລ່ວງໜ້າ ແລະ ພຽງພໍ (FPIC) ຕໍ່ກັບໂຄງການທີ່ຈະສ້າງຜົນກະທົບຕໍ່ທີ່ດິນ ຫຼື ພື້ນທີ່ ແລະ ຊັບພະຍາກອນອື່ນໆ. ຄຳແນະນຳຂອງ ສປ ຈີນ ກ່ຽວກັບການລົງທຶນດ້ານກະສິກຳ ຮຽກຮ້ອງໃຫ້ນັກລົງທຶນນຳໃຊ້ຂະບວນການ FPIC ໂດຍຄຳແນະນຳໄດ້ລະບຸວ່າ: ມັນຈຳເປັນທີ່ຈະເຮັດໃຫ້ຊຸມຊົນທ້ອງຖິ່ນເຂົ້າໃຈຢ່າງເຕັມສ່ວນກ່ຽວກັບຜົນກະທົບຂອງໂຄງການ, ຜົນກະທົບຕໍ່ຊີວິດຂອງປະຊາຊົນ ແລະ ການປ່ຽນແປງທີ່ໂຄງການລົງທຶນຈະນຳມາສູ່ລະບົບນິເວດວິທະຍາໃນທ້ອງຖິ່ນ. FPIC ເປັນວິທີການທີ່ຖືກຍອມຮັບ ແລະ ນຳໃຊ້ຢ່າງກວ້າງຂວາງໃນລະດັບສາກົນ, ບໍ່ພຽງແຕ່ເລີ່ມຕົ້ນຂອງໂຄງການເທົ່ານັ້ນ ແຕ່ຕ້ອງນຳໃຊ້ຕະຫຼອດໄລຍະການຈັດຕັ້ງປະຕິບັດໂຄງການ ເພື່ອຮັບຂໍ້ຕົກລົງຈາກປະຊາຊົນທີ່ໄດ້ຮັບຜົນກະທົບກ່ຽວກັບການຕັດສິນໃຈທີ່ຈະສົ່ງຜົນກະທົບຕໍ່ພວກເຂົາ. ການດຳເນີນ FPIC ຢ່າງເໝາະສົມຈະຊ່ວຍຫຼຸດຜ່ອນ ຄວາມສ່ຽງທາງດ້ານສັງຄົມ, ການເມືອງ ແລະ ເສດຖະກິດ ທີ່ອາດຈະເກີດຂຶ້ນແກ່ທຸກຝ່າຍ ແລະ ຊ່ວຍໃຫ້ນັກລົງທຶນໄດ້ຮັບການຍິນຍອມເຫັນດີຈາກສັງຄົມໃນການດຳເນີນໂຄງການລົງທຶນດັ່ງກ່າວ. ດຳລັດ ວ່າດ້ວຍການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ (ເລກທີ 21/ລບ, 2019) ໄດ້ກຳນົດການມີສ່ວນຮ່ວມຂອງສັງຄົມໃນແຕ່ລະໄລຍະຂອງການລົງທຶນ ເພື່ອຮັບປະກັນຄວາມໂປ່ງໃສ, ຍຸຕິທຳ ແລະ ມີປະສິດທິຜົນ.



## 2. ການເປີດເຜີຍຂໍ້ມູນ ແລະ ຄວາມໂປ່ງໃສ

ອີງຕາມຫຼັກການ ການລົງທຶນດ້ານກະສິກຳ ແລະ ປ່າໄມ້ ທີ່ເຄົາລົບສິດ, ການດຳລົງຊີວິດ ແລະ ຊັບພະຍາກອນທຳມະຊາດ ໃນທົ່ວໂລກ. ການຂາດຄວາມໂປ່ງໃສແມ່ນສາມາດສ້າງຄວາມບໍ່ໄວ້ວາງໃຈກັບພາກສ່ວນທີ່ກ່ຽວຂ້ອງ ແລະ ພາກສ່ວນອື່ນ ທີ່ສາມາດຊ່ວຍແກ້ໄຂບັນຫາເລັກນ້ອຍໄດ້ກ່ອນທີ່ຈະກາຍເປັນບັນຫາໃຫຍ່. ຄຳແນະນຳຂອງລັດຖະບານ ສປ ຈີນ ກ່ຽວກັບການລົງທຶນດ້ານກະສິກຳ ແລະ ປ່າໄມ້ ໄດ້ລະບຸວ່າ ການແລກປ່ຽນຂໍ້ມູນຂ່າວສານຢ່າງເປີດເຜີຍສາມາດຊ່ວຍໃຫ້ລັດຖະບານ ແລະ ຊຸມຊົນ ຂອງປະເທດເຈົ້າພາບຮັບຮູ້ກ່ຽວກັບໂຄງການ, ເຂົ້າໃຈກ່ຽວກັບໂຄງການ ແລະ ວັດທະນະທຳຈີນ. ເພື່ອໃຫ້ໂຄງການສາມາດ ດຳເນີນງານໄດ້ດີ, ມັນຮຽກຮ້ອງໃຫ້ນັກລົງທຶນເຜີຍແຜ່ຂໍ້ມູນໃນທຸກຂັ້ນຕອນຂອງໂຄງການລົງທຶນ, ຊຶ່ງເລີ່ມຕັ້ງແຕ່ກ່ອນການລົງທຶນຈະຖືກອະນຸມັດ ແລະ ສືບຕໍ່ໃນການຈັດຕັ້ງປະຕິບັດ, ລວມເຖິງການເຜີຍແຜ່ບົດລາຍງານກ່ຽວກັບຄວາມຄືບໜ້າຂອງໂຄງການ ແລະ ຄວາມພະຍາຍາມໃນດ້ານການຮັບຜິດຊອບຕໍ່ທຳມະຊາດ ແລະ ສັງຄົມ. ດຳລັດ ວ່າດ້ວຍການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ (ເລກທີ 21/ລບ, 2019) ກໍໄດ້ກຳນົດໃຫ້ໂຄງການລົງທຶນໄດ້ເຜີຍແຜ່ຂໍ້ມູນລາຍລະອຽດຂອງໂຄງການໃຫ້ກັບປະຊາຊົນ ແລະ ພາກສ່ວນທີ່ກ່ຽວຂ້ອງໄດ້ຮັບຊາບເປັນແຕ່ລະໄລຍະ ເພື່ອຄວາມໂປ່ງໃສ ແລະ ສົ່ງເສີມການມີສ່ວນຮ່ວມຂອງສັງຄົມ. ຄວາມໂປ່ງໃສຍັງສາມາດສ້າງຄວາມເຊື່ອໝັ້ນລະຫວ່າງປະຊາຊົນ, ພາກລັດ ແລະ ນັກລົງທຶນ ເພື່ອຫຼີກລ່ຽງຄວາມບໍ່ເຂົ້າໃຈກັນ ຊຶ່ງອາດຈະກໍ່ໃຫ້ເກີດຄວາມສ່ຽງຕາມມາພາຍຫຼັງ. ທຸກຂໍ້ມູນທີ່ກ່ຽວຂ້ອງກັບໂຄງການລົງທຶນເຊັ່ນ: ສັນຍາການສຳປະທານທີ່ດິນ ແລະ ປ່າໄມ້, ບົດລາຍງານປະເມີນຜົນກະທົບທາງດ້ານສັງຄົມ ແລະ ສິ່ງແວດລ້ອມ ລວມໄປເຖິງ ລະບຽບການ ແລະ ນະໂຍບາຍຕ່າງໆຂອງໂຄງການລົງທຶນຕ້ອງຖືກເຜີຍແຜ່ຢ່າງກວ້າງຂວາງ ໃນຫຼາຍຮູບແບບ ແລະ ພາສາທີ່ຄົນທ້ອງຖິ່ນເຂົ້າໃຈໄດ້ ເພື່ອຮັບປະກັນວ່າທຸກຄົນສາມາດເຂົ້າເຖິງຂໍ້ມູນດັ່ງກ່າວໄດ້ຢ່າງຄົບຖ້ວນ.



# 3. ການເຄົາລົບສິດທິຂອງປະຊາຊົນໃນການນຳໃຊ້ທີ່ດິນ, ການປະມົງ, ປ່າໄມ້ ແລະ ແຫຼ່ງນ້ຳ

ການລົງທຶນທີ່ມີຄວາມຮັບຜິດຊອບຕ້ອງເຄົາລົບສິດທິຂອງປະຊາຊົນທ້ອງຖິ່ນໃນການຄອບຄອງນຳໃຊ້ທີ່ດິນ, ການປະມົງ ການນຳໃຊ້ປ່າໄມ້ ແລະ ແຫຼ່ງນ້ຳທີ່ຊອບທຳ ລວມທັງສິດຕາມປະເພນີຂອງປະຊາຊົນທ້ອງຖິ່ນ. ນັກລົງທຶນຍັງຕ້ອງຮັບຮູ້ສິດທິຂອງປະຊາຊົນທ້ອງຖິ່ນໃນການຍິນຍອມແບບອິດສະຫຼະ ໄດ້ຮັບຂໍ້ມູນລ່ວງໜ້າ (FPIC) ຕໍ່ການລົງທຶນໃດໆໃນພື້ນທີ່ດິນ ແລະ ປ່າໄມ້ທີ່ພວກເຂົານຳໃຊ້ຕາມປະເພນີ. ບົດແນະນຳຂອງສາກົນເຊັ່ນ: VGGT, ຄູ່ມືຂອງອາຊຽນ ແລະ ບົດແນະນຳຂອງລັດຖະບານ ສປ ຈີນ ໄດ້ສະແດງໃຫ້ເຫັນເຖິງຄວາມຈຳເປັນສຳລັບນັກລົງທຶນ ໃນການຮັບຮູ້ສິດຕໍ່ທີ່ດິນອັນຊອບທຳ ຂອງປະຊາຊົນທ້ອງຖິ່ນ. ຄຳແນະນຳຂອງລັດຖະບານ ສປ ຈີນ ກ່ຽວກັບການປູກໄມ້ໄດ້ລະບຸວ່າ: ບໍ່ໃຫ້ມີການລະເມີດສິດທິດ້ານກົດໝາຍຂອງປ່າໄມ້ ແລະ ຊັບພະຍາກອນ ທີ່ປະຊາຊົນທ້ອງຖິ່ນມີຄວາມພໍໃຈ ແລະ ໂຄງການລົງທຶນຄວນສ້າງມາດຕະການ ເພື່ອປ້ອງກັນກິດຈະກຳການລົງທຶນຈາກການຂົ່ມຂູ່ໂດຍທາງກົງ ຫຼື ທາງອ້ອມ ຫຼື ຜົນກະທົບຕໍ່ຊັບພະຍາກອນ ຫຼື ສິດໃນການນຳໃຊ້ຂອງຜູ້ຕັ້ງຖິ່ນຖານເດີມ. ກົດໝາຍວ່າດ້ວຍ ການປົກປັກຮັກສາສິ່ງແວດລ້ອມ (ເລກທີ 29/ສພຊ, 2012) ແລະ ຄຳແນະນຳ ວ່າດ້ວຍຂະບວນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ, ສັງຄົມ ແລະ ທຳມະຊາດ ຈາກໂຄງການລົງທຶນ ແລະ ກິດຈະກຳຕ່າງໆ (ເລກທີ 8030/ກຊສ, 2013) ກຳນົດໃຫ້ນັກລົງທຶນຕ້ອງໄດ້ດຳເນີນການປະເມີນຜົນກະທົບທາງສັງຄົມຕໍ່ກັບປະຊາຊົນ ຜູ້ຖືສິດທິຕໍ່ກັບຊັບພະຍາກອນດັ່ງກ່າວ ແລະ ຄວນມີມາດຕະການ ເພື່ອຫຼຸດຜ່ອນຜົນກະທົບດັ່ງກ່າວ ຊຶ່ງໄດ້ຖືກກຳນົດເອົາໄວ້ຢ່າງຈະແຈ້ງໃນການປົກປ້ອງສັງຄົມ ແລະ ສິ່ງແວດລ້ອມ ຍັງລວມເຖິງການປົກປ້ອງສິດຄອບຄອງນຳໃຊ້ທີ່ດິນ, ຊັບພະຍາກອນທຳມະຊາດ ແລະ ນ້ຳ ຂອງປະຊາຊົນທ້ອງຖິ່ນ.



# 4. ການປະກອບສ່ວນເຂົ້າໃນການພັດທະນາສັງຄົມ

ທຸກໂຄງການລົງທຶນທີ່ມີຄວາມຮັບຜິດຊອບຕ້ອງໄດ້ປະກອບສ່ວນເຂົ້າໃນການພັດທະນາສັງຄົມແບບມີຄວາມສະເໝີພາບ, ຍືນຍົງ, ທົ່ວເຖິງ, ເໝາະສົມກັບທ້ອງຖິ່ນ ແລະ ລົບລ້າງຄວາມທຸກຍາກ ເພື່ອຮັບປະກັນວ່າໂຄງການການລົງທຶນດັ່ງກ່າວ ສາມາດສ້າງຜົນປະໂຫຍດທີ່ເປັນທຳໃຫ້ແກ່ປະຊາຊົນໃນທ້ອງຖິ່ນ ແລະ ຊ່ວຍພັດທະນາຊີວິດ ການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ. ຫຼັກການຂອງ CFS ສຳລັບການລົງທຶນທີ່ມີຄວາມຮັບຜິດຊອບ ໄດ້ກຳນົດວິທີການຕ່າງໆສຳລັບນັກລົງທຶນ ເພື່ອປະກອບສ່ວນໃນການພັດທະນາເສດຖະກິດແບບຍືນຍົງ ແລະ ຄົບຖ້ວນ, ລວມເຖິງການສ້າງວຽກເຮັດງານທຳ; ສ້າງລາຍຮັບໃຫ້ແກ່ທ້ອງຖິ່ນ, ສະໜອງຂອດບໍລິການຕໍ່ສາທາລະນະທີ່ດີ, ສ້າງຄວາມເຂັ້ມແຂງໃຫ້ແກ່ພາກສ່ວນທີ່ກ່ຽວຂ້ອງທ້ອງຖິ່ນ ແລະ ປະກອບສ່ວນເຂົ້າໃນຄວາມໝັ້ນຄົງດ້ານສະບຽງອາຫານ ແລະ ໂພສະນາການ. ບົດແນະນຳກ່ຽວກັບການປົກປັກຮັກສາສິ່ງແວດລ້ອມໃນການລົງທຶນ ແລະການຮ່ວມມືຢູ່ຕ່າງປະເທດຂອງ ສປ ຈີນ, ຮຽກຮ້ອງໃຫ້ນັກລົງທຶນ ສປ ຈີນ ສົ່ງເສີມການພັດທະນາທີ່ກົມກຽວກັນລະຫວ່າງເສດຖະກິດ, ສິ່ງແວດລ້ອມ ແລະ ຊຸມຊົນທ້ອງຖິ່ນ. ພັນທະທາງດ້ານສັງຄົມຂອງນັກລົງທຶນຍັງໄດ້ລະບຸໄວ້ໃນກົດໝາຍເຊັ່ນກັນ. ກົດໝາຍວ່າດ້ວຍ ການສົ່ງເສີມການລົງທຶນ (ເລກທີ 14/ສພຊ, 2016) ຮຽກຮ້ອງໃຫ້ນັກລົງທຶນ: ປະກອບສ່ວນຊຸກຍູ້, ສົ່ງເສີມທຸລະກິດພາຍໃນ, ແກ້ໄຂຄວາມທຸກຍາກຂອງປະຊາຊົນ ແລະ ພັດທະນາທ້ອງຖິ່ນໃນຂົງເຂດໂຄງການ, ປະກອບສ່ວນທາງດ້ານງົບປະມານໃນວຽກງານພັດທະນາສັງຄົມ ແລະ ພື້ນຖານໂຄງລ່າງ, ສົ່ງເສີມການນຳໃຊ້ແຮງງານລາວ ໂດຍສະເພາະແຮງງານທີ່ເປັນແມ່ຍິງ, ມີການພັດທະນາທັກສະສີມືແຮງງານ, ຍົກລະດັບວິຊາສະເພາະ ແລະ ຖ່າຍທອດເຕັກໂນໂລຢີໃໝ່ໃຫ້ແກ່ພວກເຂົາ, ປະຕິບັດລະບົບປະກັນສັງຄົມ ແລະ ປະກັນໄພຕໍ່ຜູ້ອອກແຮງງານໃນວິສາຫະກິດຂອງຕົນ, ທົດແທນຄ່າເສຍຫາຍໃຫ້ແກ່ປະຊາຊົນທີ່ຖືກຜົນກະທົບ ຈາກການດຳເນີນການລົງທຶນທຸລະກິດໃຫ້ມີຄວາມເປັນທຳ ແລະ ເຄົາລົບ, ນັບຖືຮີດຄອງປະເພນີ ແລະ ວັດທະນະທຳອັນດີງາມຂອງທ້ອງຖິ່ນ.



# 5. ການນຳໃຊ້ແຮງງານທ້ອງຖິ່ນ ແລະ ຄວາມປອດໄພຂອງແຮງງານ

ການລົງທຶນທີ່ມີຄວາມຮັບຜິດຊອບຕ້ອງໃຫ້ຄວາມສຳຄັນຕໍ່ການຈ້າງແຮງງານທ້ອງຖິ່ນ ໂດຍສະເພາະແມ່ນ ແມ່ຍິງ ແລະ ຊົນເຜົ່າ ແລະ ຄວາມປອດໄພຂອງແຮງງານທີ່ຈ້າງງານ. ອີງໃສ່ມາດຕະຖານແຮງງານສາກົນ ຂອງອົງການແຮງງານສາກົນ (ILO) ໂຄງການລົງທຶນ ຫຼື ນັກລົງທຶນຈະຕ້ອງໄດ້ເອົາໃຈໃສ່ມາດຕະຖານຕ່າງໆເຊັ່ນ: ສົ່ງເສີມການເຂົ້າເຖິງການເຮັດວຽກຢ່າງມີຄວາມເທົ່າທຽມ ແລະ ເປັນທຳ ໂດຍບໍ່ມີການແບ່ງແຍກໃດໆ, ມີການພັດທະນາຄວາມຮູ້ຄວາມສາມາດ ແລະ ສີມືແຮງງານຢ່າງຕໍ່ເນື່ອງ, ສະໜອງຄ່າຈ້າງ ແລະ ນະໂຍບາຍທາງດ້ານຜົນປະໂຫຍດທີ່ເປັນທຳ ແລະ ປະກັນສັງຄົມທີ່ຍືນຍົງ, ຮັບປະກັນມາດຕະຖານຄວາມປອດໄພໃນການເຮັດວຽກ ແລະ ສະຖານທີ່ພັກເຊົາຂອງຜູ້ອອກແຮງງານ, ບໍ່ຄວນສະໜັບສະໜູນການນຳໃຊ້ແຮງງານທີ່ຖືກບັງຄັບ, ບໍ່ມີສ່ວນຮ່ວມໃນການຄ້າແຮງງານ, ຫຼີກລ້ຽງການນຳໃຊ້ແຮງງານເດັກ, ຫ້າມທຸກຮູບແບບໃນການສວຍໃຊ້ໂອກາດ ຫຼື ລ່ວງລະເມີດທາງດ້ານແຮງງານ ເພື່ອຫາຜົນປະໂຫຍດໃນທາງທີ່ບໍ່ເປັນທຳ ແລະ ຂັດກັບລະບຽບກົດໝາຍ. ຄຳແນະນຳຂອງລັດຖະບານຈີນ ກ່ຽວກັບກະສິກຳ, ປ່າໄມ້ ແລະ ການປົກປັກຮັກສາສິ່ງແວດລ້ອມ ໄດ້ຮຽກຮ້ອງໃຫ້ໂຄງການລົງທຶນໃຫ້ບູລິມະສິດແກ່ແຮງງານໃນທ້ອງຖິ່ນ, ສ້າງສະພາບແວດລ້ອມການເຮັດວຽກທີ່ປອດໄພ, ພ້ອມທັງໃຫ້ໂອກາດການຝຶກອົບຮົມ ແລະ ຄວາມກ້າວໜ້າສຳລັບພະນັກງານ. ການພັດທະນາຊັບພະຍາກອນມະນຸດໃນທ້ອງຖິ່ນແມ່ນວິທີການທີ່ສຳຄັນ ເພື່ອໃຫ້ຊຸມຊົນ ແລະ ລັດຖະບານ ສະໜັບສະໜູນໂຄງການລົງທຶນ. ກົດໝາຍວ່າດ້ວຍ ການສົ່ງເສີມການລົງທຶນ (ເລກທີ 14/ສພຊ 2016) ແລະ ກົດໝາຍວ່າດ້ວຍ ແຮງງານ (ເລກທີ 43/ສພຊ, 2013) ກຳນົດໃຫ້ນັກລົງທຶນ ແລະ ບັນດາວິສາຫະກິດ ໄດ້ຈ້າງແຮງງານພາຍໃນ (ໂດຍສະເພາະແມ່ຍິງ ແລະ ຊົນເຜົ່າ) ກຳນົດນະໂຍບາຍ ແລະ ລະບຽບການຕໍ່ກັບການຈ້າງແຮງງານທີ່ມີຄວາມເປັນທຳ.




# 6. ການຄວບຄຸມຄຸນນະພາບ ແລະ ຄວາມປອດໄພຂອງສິນຄ້າ

ການຄວບຄຸມຄຸນນະພາບ ແລະ ຄວາມປອດໄພຂອງຜະລິດຕະພັນ ຕິດພັນກັບສຸຂະພາບຂອງຄົນເຮົາ ດັ່ງນັ້ນການລົງທຶນທີ່ມີຄວາມຮັບຜິດຊອບ ແລະ ຍືນຍົງ ຕ້ອງຮັບປະກັນໃຫ້ມີຄຸນນະພາບ ແລະ ຄວາມປອດໄພຂອງສິນຄ້າ. ຍຸດທະສາດການພັດທະນາກະສິກຳຮອດປີ 2025 ແລະ ວິໄສທັດຮອດປີ 2030 ຂອງ ສປປ ລາວ ແມ່ນມີເປົ້າໝາຍເລັ່ງໃສ່ການຄ້ຳປະກັນສະບຽງອາຫານ, ຜະລິດກະສິກຳເປັນສິນຄ້າ ໂດຍເນັ້ນໃສ່ກະສິກຳສີຂຽວ, ສະອາດ ແລະ ຮັບປະກັນດ້ານຄວາມປອດໄພຂອງຜະລິດຕະພັນກະສິກຳ.

ເພື່ອຮັບປະກັນຄຸນນະພາບ ແລະ ຄວາມປອດໄພຂອງຜະລິດຕະພັນກະສິກຳ, ສາກົນ ແລະ ລັດຖະບານລາວ ໄດ້ມີມາດຕະຖານທາງດ້ານເຕັກນິກເພື່ອປະຕິບັດຕາມມາດຕະຖານຂອງ ອາຊຽນ ມາຢັ້ງຢືນເຊັ່ນ: ມາດຕະຖານກະສິກຳທີ່ດີ (GAP) ຂອງຂໍ້ຕົກລົງວ່າດ້ວຍ ມາດຕະຖານດ້ານກະສິກຳທີ່ດີກ່ຽວກັບຄຸນນະພາບຂອງຜົນຜະລິດ (ເລກທີ 0539/ກປ, 2011), ມາດຕະຖານກະສິກຳອິນຊີ (OA) ຂອງຂໍ້ຕົກລົງຂອງລັດຖະມົນຕີວ່າການ ກະຊວງກະສິກຳ ແລະ ປ່າໄມ້ ວ່າດ້ວຍ ການກຳນົດມາດຕະຖານກະສິກຳອິນຊີ (ເລກທີ 1666/ກຟ.ກປ, 2005). ດັ່ງນັ້ນ, ມັນໄດ້ຮຽກຮ້ອງໃຫ້ທຸກການລົງທຶນທີ່ມີເປົ້າໝາຍການຜະລິດເພື່ອສົ່ງອອກ ແມ່ນຕ້ອງໄດ້ປະຕິບັດຕາມບັນດາມາດຕະຖານໃດໜຶ່ງຕາມຈຸດປະສົງ ແລະ ເປົ້າໝາຍຂອງໂຄງການ. ບົດແນະນຳຂອງ ສປ ຈີນ ໄດ້ຮຽກຮ້ອງໃຫ້ນັກລົງທຶນ ມີການສ້າງລະບົບຄຸ້ມຄອງ ແລະ ກວດກາຄຸນນະພາບໃນທຸກຂັ້ນຕອນຂອງການຜະລິດ ແລະ ສົ່ງເສີມໃຫ້ ໂຄງການລົງທຶນໄດ້ຮັບໃບຢັ້ງຢືນຈາກສາກົນ ເຊັ່ນ: GAP, HACCP ຫຼື QS.



## 7. ການພັດທະນາສີຂຽວ ແລະ ການປົກປັກຮັກສາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ

ບົດແນະນຳສາກົນກ່ຽວກັບການລົງທຶນທີ່ມີຄວາມຮັບຜິດຊອບ ເຊັ່ນ: ບົດແນະນຳ OECD-FAO ຕ່ອງໂສ້ການສະໜອງກະສິກຳແບບມີຄວາມຮັບຜິດຊອບ, ແມ່ນເນັ້ນໜັກການປົກປັກຮັກສາສິ່ງແວດລ້ອມ ໂດຍເລີ່ມຈາກການຫຼີກລ່ຽງຜົນກະທົບ, ຫຼັງຈາກນັ້ນຖ້າຫຼີກລ່ຽງບໍ່ໄດ້ແມ່ນໃຫ້ຫຼຸດຜ່ອນຜົນກະທົບ. ບົດແນະນຳຂອງລັດຖະບານ ສປ ຈີນ ກ່ຽວກັບການຮັບຮູ້ຄວາມຈຳເປັນຂອງການພັດທະນາໂຄງການໄລຍະຍາວ ແລະ ຄວາມຍືນຍົງ ສັງເກດເຫັນວ່າ: ເນື່ອງຈາກການລົງທຶນດ້ານກະສິກຳ ແລະ ປ່າໄມ້ ມີໄລຍະເວລາຕອບແທນເປັນເວລາດົນ, ການຕອບແທນທີ່ໃຊ້ເວລາສັ້ນ (ຊຶ່ງມັກຈະສົ່ງຜົນກະທົບທາງລົບຕໍ່ສິ່ງແວດລ້ອມ) ແມ່ນຄວນຫຼີກລ່ຽງ. ການລົງທຶນທີ່ມີຄວາມຮັບຜິດຊອບ ແລະ ຍືນຍົງ ຄວນປະຕິບັດຕາມບູລິມະສິດຂອງ ຍຸດທະສາດການເຕີບໂຕສີຂຽວ 2030. ຍຸດທະສາດດັ່ງກ່າວໄດ້ກຳນົດເອົາຂະແໜງການກະສິກຳ ແລະ ປ່າໄມ້ ເປັນບູລິມະສິດໃນການພັດທະນາປະເທດ. ຊຶ່ງໄດ້ວາງແນວທາງໃນການສ້າງຄວາມເຂັ້ມແຂງໃຫ້ແກ່ຂະແໜງການດັ່ງກ່າວ ລວມມີ: ເພີ່ມປະສິດທິພາບໃນການຜະລິດກະສິກຳ, ນຳໃຊ້ຊັບພະຍາກອນທຳມະຊາດໃຫ້ໜ້ອຍ, ພັດທະນາເຕັກນິກ ແລະ ທັກສະຂອງຜູ້ຜະລິດໃນທ້ອງຖິ່ນ, ຄວບຄຸມຢາປາບສັດຕູພືດ ແລະ ສານເຄມີທີ່ເປັນອັນຕະລາຍ, ຫຼຸດຜ່ອນການເຊື່ອມໂຊມຂອງຊີວະນາໆພັນ, ຄຸນນະພາບຂອງດິນ ແລະ ແຫຼ່ງນ້ຳ, ສົ່ງເສີມການຜະລິດກະສິກຳສະອາດ ແລະ ກະສິກຳປອດສານພິດ, ການປູກໄມ້ຊະນິດດຽວ, ປ້ອງກັນການຂຸດຄົ້ນປ່າໄມ້ທີ່ບໍ່ຍືນຍົງ, ການນຳໃຊ້ ແລະ ສົ່ງອອກຂອງໄມ້ທີ່ຜິດກົດໝາຍ ແລະ ບໍ່ຍືນຍົງ. ການຫຼຸດຜ່ອນການລົງທຶນທີ່ມີຜົນກະທົບຕໍ່ຊີວະນາໆພັນ, ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຕ້ອງເລີ່ມຈາກຊອກໂຄງການທີ່ຢູ່ໃນເຂດທີ່ມີຜົນກະທົບຕ່ຳທີ່ສຸດ. ການລົງທຶນໃນເຂດປ່າສະຫງວນ ຄວນຈະປະຕິບັດຕາມກົດໝາຍວ່າດ້ວຍ ປ່າໄມ້ (ເລກທີ 64/ສພຊ, 2019) ຢ່າງເຂັ້ມງວດ,



# 7. ການພັດທະນາສີຂຽວ ແລະ ການປົກປັກຮັກສາຊັບພະຍາກອນ ທຳມະຊາດ ແລະ ສິ່ງແວດລ້ອມ (ຕໍ່)

ດຳລັດວ່າດ້ວຍ ການຄຸ້ມຄອງປ່າສະຫງວນ (ສະບັບປັບປຸງກຳລັງຈະອອກມາ) ແລະ ແຜນຄຸ້ມຄອງເຂດປ່າສະຫງວນໃນແຕ່ລະເຂດ, ລວມເຖິງການວາງແຜນການນຳໃຊ້ທີ່ດິນຮ່ວມກັບຊຸມຊົນທີ່ຢູ່ໃນເຂດປ່າສະຫງວນ. ຜົນກະທົບໃດກໍ່ຕາມທີ່ເກີດຂຶ້ນຈາກການລົງທຶນຢູ່ໃນເຂດປ່າສະຫງວນ ຕ້ອງໄດ້ຮັບການຊົດເຊີຍຕາມລະບຽບຂອງ ສປປ ລາວ ແລະ ເພື່ອສອດຄ່ອງກັບສະພາບການຫຼຸດຜ່ອນດ້ານຜົນກະທົບ (ເບິ່ງລາຍລະອຽດໃນຂໍ້ 7.1). ຄວາມພະຍາຍາມໃນການປົກປັກຮັກສາສິ່ງແວດລ້ອມ ແລະ ຊີວະນາໆພັນຕ້ອງດຳເນີນຢ່າງສືບຕໍ່ໃນຕະຫຼອດໄລຍະການຈັດຕັ້ງປະຕິບັດໂຄງການ ໂດຍປະຕິບັດຕາມແນວທາງການປູກ, ການຂຸດຄົ້ນແບບຍືນຍົງ, ການຟື້ນຟູພື້ນທີ່ ແລະ ຊີວະນາໆພັນທີ່ຖືກສູນເສຍ ຫຼື ໄດ້ຮັບຜົນກະທົບທາງລົບຈາກການລົງທຶນ.



# ພາກທີ III. ການຈັດຕັ້ງປະຕິບັດ ການລົງທຶນດ້ານກະສິກຳ ແລະ ປ່າໄມ້ ທີ່ມີຄວາມຮັບຜິດຊອບ

ໃນພາກນີ້ໄດ້ກຳນົດຄຳແນະນຳການຈັດຕັ້ງປະຕິບັດ ການລົງທຶນດ້ານກະສິກຳ ແລະ ປ່າໄມ້ ເພື່ອໃຫ້ມີຄວາມຮັບຜິດຊອບ ຕໍ່ສັງຄົມ ແລະ ສິ່ງແວດລ້ອມ, ໂດຍອີງຕາມ 7 ຫຼັກການ ສຳລັບການລົງທຶນທີ່ມີຄວາມຮັບຜິດຊອບໃນ ສປປ ລາວ ຊຶ່ງໄດ້ກຳນົດໄວ້ຂ້າງເທິງຂອງປື້ມຄູ່ມືສະບັບນີ້ ແລະ ຍັງສອດຄ່ອງກັບລະບຽບກົດໝາຍຂອງ ສປປ ລາວ ເພື່ອເປັນແນວທາງ ແລະ ເປັນບ່ອນອີງ ໃຫ້ນັກລົງທຶນສາມາດນຳໄປຈັດຕັ້ງປະຕິບັດ ໃນໄລຍະຂອງໂຄງການລົງທຶນ.

## ໂຄງການລົງທຶນດ້ານກະສິກຳ ແລະ ປ່າໄມ້ ໂດຍທົ່ວໄປປະກອບມີ 5 ໄລຍະດັ່ງລຸ່ມນີ້:

**ໄລຍະທີ I. ການວາງແຜນຍຸດທະສາດ:** ດຳເນີນການສຶກສາເບື້ອງຕົ້ນ ເພື່ອເຂົ້າໃຈໂອກາດໃນການລົງທຶນໃຫ້ປະສົບຜົນ ສຳເລັດ, ດຳເນີນການວິເຄາະສະຖານະການ ລວມທັງລະບຽບກົດໝາຍ ແລະ ນະໂຍບາຍ, ດຳເນີນການປຶກສາຫາລືກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອກຳນົດ, ຄັດເລືອກປະເພດການລົງທຶນ ແລະ ອອກແບບແຜນຍຸດທະສາດການລົງທຶນເບື້ອງຕົ້ນ;

**ໄລຍະທີ II. ການອອກແບບ ແລະ ການອະນຸມັດ:** ແມ່ນການສືບຕໍ່ພັດທະນາແຜນຍຸດທະສາດການລົງທຶນເບື້ອງຕົ້ນ ໃຫ້ມີລາຍລະອຽດສົມບູນຂຶ້ນ ໂດຍຜ່ານຂະບວນການປຶກສາຫາລືກັບພາກສ່ວນທີ່ກ່ຽວຂ້ອງ. ຂັ້ນຕອນນີ້ຕ້ອງໄດ້ຮັບການ ເຫັນດີເຫັນພ້ອມຈາກຊຸມຊົນຕໍ່ກັບໂຄງການລົງທຶນດັ່ງກ່າວ ໂດຍນຳໃຊ້ຂະບວນການ **FPIC** ແລະ ໄດ້ຮັບອະນຸມັດການລົງທຶນທີ່ຖືກຕ້ອງຈາກລັດຖະບານ;

**ໄລຍະທີ III. ການຈັດຕັ້ງປະຕິບັດ:** ແມ່ນການດຳເນີນກິດຈະກຳການລົງທຶນຕາມແຜນທຸລະກິດທີ່ໄດ້ຮັບອະນຸມັດຕາມກົດໝາຍທ້ອງຖິ່ນ ແລະ ຂໍ້ກຳນົດອື່ນໆ. ຮັບປະກັນການລົງທຶນທີ່ມີວິທີການຈັດການ ແລະ ປັບຕົວ ເພື່ອກຳນົດ ແລະ ຮັບມືກັບຄວາມສ່ຽງທີ່ເກີດຂຶ້ນໃນຂະນະທີ່ຈັດຕັ້ງປະຕິບັດໂຄງການ;

**ໄລຍະທີ IV. ການຕິດຕາມ ແລະ ປະເມີນຜົນ:** ການຕິດຕາມການລົງທຶນແມ່ນຈະຕ້ອງເກີດຂຶ້ນຕັ້ງແຕ່ເລີ່ມຕົ້ນ ຂອງການລົງທຶນ ຈົນຮອດການສິ້ນສຸດໂຄງການ. ການຕິດຕາມຊ່ວຍໃຫ້ນັກລົງທຶນເຂົ້າໃຈຜົນສຳເລັດ ແລະ ຜົນກະທົບທາງລົບຂອງໂຄງການ, ຊຶ່ງເຮັດໃຫ້ໂຄງການລົງທຶນສາມາດປັບປຸງວິທີການ ແລະ ຍຸດທະສາດໃນອະນາຄົດ. ການປະເມີນຜົນທ້າຍໂຄງການລົງທຶນແມນໃສ່ ເພື່ອປະເມີນການຈັດຕັ້ງປະຕິບັດກິດຈະກຳຂອງໂຄງການວ່າສາມາດບັນລຸຕາມຈຸດປະສົງ ແລະ ເປົ້າໝາຍ ທີ່ກຳນົດໄວ້ໃນເບື້ອງຕົ້ນຫຼືບໍ່ ເພື່ອໃຫ້ໂຄງການລົງທຶນ ແລະ ລັດຖະບານ ສາມາດກຳນົດແຜນການ ການລົງທຶນໃນອະນາຄົດໃຫ້ເໝາະສົມ ຢູ່ໃນໄລຍະທີ **V**;

**ໄລຍະທີ V. ການສິ້ນສຸດໂຄງການ ຫຼື ການລົງທຶນໃໝ່:** ອີງຕາມການປະເມີນຜົນໃນຕອນທ້າຍຂອງການລົງທຶນ ແມ່ນສາມາດຊ່ວຍຕັດສິນໃຈຕໍ່ກັບທາງເລືອກ ດັ່ງຕໍ່ໄປນີ້: ປິດໂຄງການ, ຂະຫຍາຍການລົງທຶນ ແລະ ເລີ່ມການລົງທຶນໃໝ່. ໃນກໍລະນີມີການສິ້ນສຸດໂຄງການແມ່ນຕ້ອງການກຳນົດຍຸດທະສາດຢ່າງຊັດເຈນ ເພື່ອກຳນົດຂັ້ນຕອນ, ເວລາ, ການສະໜັບສະໜູນທາງດ້ານວິຊາການ ແລະ ການເງິນ, ການໂອນຖ່າຍເຕັກໂນໂລຢີຄວາມຮູ້ຄວາມສາມາດໃຫ້ກັບຂະແໜງການທີ່ກ່ຽວຂ້ອງໃນທ້ອງຖິ່ນ.

ອີງຕາມໄລຍະການລົງທຶນດັ່ງກ່າວ ຄຳແນະນຳໃນການຈັດຕັ້ງປະຕິບັດ ການລົງທຶນທີ່ມີຄວາມຮັບຜິດຊອບ ອາດເກີດຂຶ້ນ ແລະ ສິ້ນສຸດໃນແຕ່ລະໄລຍະຂອງການລົງທຶນແຕກຕ່າງກັນ ຊຶ່ງມີລາຍລະອຽດສະແດງໄວ້ໃນແຜນວາດຂະບວນການລົງທຶນດ້ານກະສິກຳ ແລະ ປ່າໄມ້ ແລະ ຄຳອະທິບາຍດັ່ງລຸ່ມນີ້:

- ໃນຊ່ວງຕົ້ນຂອງໄລຍະທີ I ຕ້ອງໄດ້ມີການກະກຽມ ແລະ ການວາງແຜນການລົງທຶນ (1) ຊຶ່ງຈະກວມເອົາການວິເຄາະຜູ້ມີສ່ວນຮ່ວມ ແລະ ສຶກສາຂັ້ນຕອນການຂໍອະນຸມັດການລົງທຶນ (1.1), ສຶກສາກອບກົດໝາຍຂອງ ສປປ ລາວ (1.2), ແລະ ການປະເມີນຢ່າງຄົບຊຸດ (1.3), ໂດຍການດຳເນີນການປຶກສາຫາລື ແລະ ການມີສ່ວນຮ່ວມຂອງປະຊາຊົນ (2) ໄປພ້ອມກັນຕັ້ງແຕ່ເລີ່ມຕົ້ນ ແຕ່ຂັ້ນຕອນນີ້ແມ່ນຈະດຳເນີນໄປຈົນເຖິງສິ້ນສຸດໂຄງການຂອງ ໄລຍະທີ V;

- ໃນຊ່ວງຕົ້ນຂອງໄລຍະທີ II ຕ້ອງໄດ້ດຳເນີນ ການສ້າງກົນໄກການແກ້ໄຂຄຳຮ້ອງທຸກສຳລັບຜູ້ທີ່ຖືກຜົນກະທົບ (3) ຈົນເຖິງສິ້ນສຸດໂຄງການຂອງ ໄລຍະທີ V, ຈາກນັ້ນ ຕ້ອງເຮັດການເຈລະຈາ ແລະ ເຮັດສັນຍາກັບປະຊາຊົນ (4) ໃນການເຊັນສັນຍາເປັນລາຍລັກອັກສອນໃຫ້ສຳເລັດໃນໄລຍະດັ່ງກ່າວ. ຕໍ່ມາແມ່ນຕ້ອງດຳເນີນການຊົດເຊີຍ ແລະ ຍົກຍ້າຍຈັດສັນ (5) ໃຫ້ສຳເລັດໃນ ໄລຍະທີ II ເຊັ່ນກັນ. ນັກລົງທຶນຕ້ອງເຮັດການປະເມີນ ແລະ ປົກປ້ອງຊີວະນາໆພັນ (7.1) ຈົນສິ້ນສຸດໂຄງການໃນ ໄລຍະ V;

- ໃນຊ່ວງຕົ້ນຂອງໄລຍະທີ III ຕ້ອງເຮັດການພັດທະນາສັງຄົມ (6) ຈົນເຖິງສິ້ນສຸດໂຄງການຂອງ ໄລຍະທີ V, ຕໍ່ດ້ວຍການ ຕິດຕາມ ແລະ ການກວດກາ (9) ທັງຂະໜາດຂອງສິ່ງແວດລ້ອມ ແລະ ສັງຄົມ ທີ່ຈຳເປັນຕ້ອງໄດ້ດຳເນີນໄປພ້ອມໆ ຕັ້ງແຕ່ເລີ່ມຈັດຕັ້ງປະຕິບັດໂຄງການ ຈົນເຖິງສິ້ນສຸດໂຄງການຂອງ ໄລຍະທີ V. ຕໍ່ມາແມ່ນໃຫ້ປະຕິບັດ ການຫຼຸດຜ່ອນຜົນກະທົບຈາກການນຳໃຊ້ສານເຄມີຂອງຢາຂ້າແມງໄມ້ ແລະ ຢາຂ້າຫຍ້າ (7.2), ການປະຕິບັດຕາມມາດຕະຖານຂອງການຄວບຄຸມມົນລະພິດ ແລະ ກຳຈັດສິ່ງເສດເຫຼືອ (7.3) ແລະ ການຮັບປະກັນຄຸນນະພາບຂອງຜະລິດຕະພັນກະສິກຳ ແລະ ປ່າໄມ້ (8) ຕ້ອງເຮັດໄປພ້ອມໆກັນຈົນເຖິງສິ້ນສຸດໂຄງການຂອງ ໄລຍະທີ V;

- ໄລຍະທີ V ແມ່ນຕ້ອງໄດ້ເຮັດການຟື້ນຟູສະພາບສິ່ງແວດລ້ອມຫຼັງການລົງທຶນ (7.4) ພາຍໃນໄລຍະນີ້ໃຫ້ສຳເລັດ.


ໄລຍະທີ V. ການສິ້ນສຸດໂຄງການ ຫຼື ການລົງທຶນ ໃໝ່
7.4
ການຟື້ນຟູສະພາບ ສິ່ງແວດລ້ອມຫຼັງການ ລົງທຶນ
ໄລຍະທີ IV. ການຕິດຕາມ ແລະ ປະເມີນຜົນ
ໄລຍະທີ III. ການຈັດຕັ້ງປະຕິບັດ
6
ການພັດທະນາສັງຄົມ
9
ການຕິດຕາມ ແລະ ການກວດກາ
7.2
ການຫຼຸດຜ່ອນຜົນ ກະທົບຈາກການນຳໃຊ້ ສານເຄມີຂອງຢາຂ້າ ແມງໄມ້ ແລະ ຢາຂ້າຫຍ້າ
7.3
ການປະຕິບັດຕາມ ມາດຕະຖານຂອງການ ຄວບຄຸມມົນລະພິດ ແລະ ກຳຈັດສິ່ງເສດເຫຼືອ
8
ການຮັບປະກັນ ຄຸນນະພາບຂອງ ຜະລິດຕະພັນກະສິກຳ ແລະ ປ່າໄມ້
ໄລຍະທີ II. ການອອກແບບ ແລະ ອະນຸມັດ
3
ການສ້າງກົນໄກການແກ້ໄຂຄຳ ຮ້ອງທຸກສຳລັບຜູ້ທີ່ຖືກຜົນ ກະທົບ
4
ການເຈລະຈາການເຮັດ ສັນຍາກັບປະຊາຊົນ
5
ການຊົດເຊີຍ ແລະ ຍົກ ຍ້າຍຈັດສັນ
7.1
ການປະເມີນ ແລະ ປົກປ້ອງຊີວະນາໆພັນ
ໄລຍະທີ I. ການວາງແຜນຍຸດທະສາດ
1
ການກະກຽມ ແລະ ວາງແຜນການ ລົງທຶນ
2
ການປຶກສາຫາລື ແລະ ການມີສ່ວນຮ່ວມ ຂອງປະຊາຊົນ

# 1. ການກະກຽມ ແລະ ວາງແຜນການລົງທຶນ

## 1.1. ການເຂົ້າໃຈພາກສ່ວນທີ່ກ່ຽວຂ້ອງ ແລະ ຂັ້ນຕອນຂໍອະນຸມັດການລົງທຶນ

ການວິເຄາະພາກສ່ວນທີ່ກ່ຽວຂ້ອງ ແລະ ການສ້າງຄວາມເຂົ້າໃຈຂັ້ນຕອນຂໍອະນຸມັດການລົງທຶນ ຈະຕ້ອງດຳເນີນ ເພື່ອໃຫ້ສອດຄ່ອງກັບຫຼັກການ ການປຶກສາຫາລື ແລະ ມີສ່ວນຮ່ວມກັບປະຊາຊົນ ແລະ ສອດຄ່ອງກັບຄູ່ມືແນະນຳຂອງ ສປ ຈີນ ກ່ຽວກັບການລົງທຶນທາງດ້ານກະສິກຳ ແລະ ປ່າໄມ້ ຢູ່ຕ່າງປະເທດ ຊຶ່ງຮຽກຮ້ອງໃຫ້ນັກລົງທຶນຈີນ ໄດ້ກຳນົດ ແລະ ວິເຄາະຜູ້ມີສ່ວນຮ່ວມກັບໂຄງການລົງທຶນ.



**ວິເຄາະພາກສ່ວນທີ່ກ່ຽວຂ້ອງ:** ການວິເຄາະພາກສ່ວນທີ່ກ່ຽວຂ້ອງກັບໂຄງການ (Stakeholder Analysis) ຊ່ວຍໃຫ້ນັກລົງທຶນສາມາດກຳນົດບັນດາພາກສ່ວນທີ່ກ່ຽວຂ້ອງກັບການລົງທຶນໄດ້ຢ່າງຄົບຖ້ວນ ແລະ ສາມາດສ້າງສາຍສຳພັນກັບພາກສ່ວນທີ່ກ່ຽວຂ້ອງດັ່ງກ່າວ ເພື່ອຈັດຕັ້ງປະຕິບັດການລົງທຶນໃຫ້ປະສົບຜົນສຳເລັດ.

ນັກລົງທຶນຄວນໃຊ້ເວລາໃນການສ້າງຄວາມເຂົ້າໃຈກ່ຽວກັບໜ່ວຍງານຕ່າງໆທີ່ກ່ຽວຂ້ອງຂອງພາກລັດ ທັງໃນລະດັບສູນກາງ ແລະ ທ້ອງຖິ່ນ, ຊຸມຊົນ, ອົງການຈັດຕັ້ງທາງສັງຄົມ ແລະ ຫົວໜ່ວຍວິສາຫະກິດອື່ນໆ ທີ່ອາດຈະໄດ້ຮັບຜົນກະທົບ ຫຼື ສ້າງຜົນກະທົບຕໍ່ການລົງທຶນ. ບັນດາພາກສ່ວນທີ່ກ່ຽວຂ້ອງທັງໝົດເຫຼົ່ານີ້, ຕະຫຼອດເຖິງບັນດາມະຫາຊົນໂດຍລວມ, ຄວນມີສ່ວນຮ່ວມໃນຕະຫຼອດໄລຍະຂອງການລົງທຶນ ເພື່ອສ້າງຄວາມເຊື່ອໝັ້ນ, ຄວາມໂປ່ງໃສ ແລະ ຄວາມເຂົ້າໃຈທີ່ເປັນເອກະພາບ (ບາງພາກສ່ວນທີ່ກ່ຽວຂ້ອງກັບໂຄງການລົງທຶນດັ່ງກ່າວແມ່ນສາມາດເບິ່ງຕື່ມໃນ **ເອກະສານຊ້ອນທ້າຍທີ 2)**. ການວິເຄາະພາກສ່ວນທີ່ກ່ຽວຂ້ອງກັບໂຄງການ ປະກອບດ້ວຍອົງປະກອບທີ່ສຳຄັນດັ່ງລຸ່ມນີ້:

1. ກຳນົດລາຍຊື່ຜູ້ມີສ່ວນຮ່ວມໃນໂຄງການ;
2. ກຳນົດສິດ ແລະ ພາລະບົດບາດຂອງແຕ່ລະພາກສ່ວນ;
3. ກຳນົດອິດທິພົນ ແລະ ຄວາມຕ້ອງການຂອງແຕ່ລະພາກສ່ວນ;
4. ກຳນົດຂອດການຮ່ວມມື ແລະ ການປະສານງານຂອງແຕ່ລະພາກສ່ວນ;
5. ກຳນົດແຜນຍຸດທະສາດໃນການສື່ສານກັບແຕ່ລະພາກສ່ວນທີ່ກ່ຽວຂ້ອງດັ່ງກ່າວ ເພື່ອໃຫ້ເຂົາເຈົ້າມີສ່ວນຮ່ວມໃນໂຄງການ. ແຜນດັ່ງກ່າວຄວນປະກອບມີ: ຈຸດປະສົງ, ບຸກຄົນທີ່ຈະຕິດຕໍ່, ຮູບແບບ, ຊ່ອງທາງໃນການສື່ສານ, ເວລາ ແລະ ສະຖານທີ່ ແລະ ອື່ນໆ.

**ຂັ້ນຕອນຂໍອະນຸມັດການລົງທຶນ:** ນັກລົງທຶນຈະຕ້ອງທຳຄວາມເຂົ້າໃຈຂັ້ນຕອນ ໃນການເລີ່ມຕົ້ນການລົງທຶນໃນລາວໃຫ້ດີ ໂດຍສຶກສາຈາກ ຄຳແນະນຳກ່ຽວກັບ ຂັ້ນຕອນການອະນຸມັດການລົງທຶນ (ເລກທີ 0457/ກຜທ, 2019) ຊຶ່ງປະກອບມີ 5 ຂັ້ນຕອນດັ່ງລຸ່ມນີ້:

1. ນັກລົງທຶນສົມທົບກັບອຳນາດການປົກຄອງທ້ອງຖິ່ນ ແລະ ຊຸມຊົນ ເພື່ອສຶກສາຄວາມເປັນໄປໄດ້ຂອງການລົງທຶນ ແລະ ທ່າອ່ຽງຜົນກະທົບທາງລົບ ແລະ ທາງບວກ;

2. ນັກລົງທຶນສະເໜີເອກະສານ ແລະ ຄຳຮ້ອງຫາຫ້ອງການບໍລິການການລົງທຶນປະຕູດຽວ ໃນນັ້ນ ໃຫ້ມີໃບຢັ້ງຢືນກ່ຽວກັບການເຫັນດີການນຳໃຊ້ທີ່ດິນ;

3. ຄະນະກຳມະການສົ່ງເສີມການລົງທຶນ ແລະ ຄຸ້ມຄອງການລົງທຶນ (ຄລທ) ພິຈາລະນາອະນຸມັດ ຫຼື ປະຕິເສດການລົງທຶນ, ກໍລະນີ ຄລທ ເຫັນດີ ນັກລົງທຶນຈະໄດ້ເຊັນບົດບັນທຶກຄວາມເຂົ້າໃຈ, ສັນຍາການຄຸ້ມຄອງໂຄງການກັບພາກລັດ ແລ້ວແຈ້ງສັນຍາຕໍ່ຂະແໜງການບ່ອນທີ່ໂຄງການຕັ້ງຢູ່;

4. ນັກລົງທຶນສົມທົບກັບທ້ອງຖິ່ນ ເພື່ອແຈ້ງການອະນຸມັດການລົງທຶນ, ເຊັນສັນຍາເຊົ່າທີ່ດິນກັບເຈົ້າຂອງດິນ, ສັນຍາແຮງງານເປັນລາຍລັກອັກສອນ, ວາງເງິນຄ້ຳປະກັນການຟື້ນຟູດິນ ແລະ ປະຕິບັດຕາມຫຼັກການກະສິກຳທີ່ດີ GAP ຫຼື ຫຼັກການ ແລະ ມາດຕະຖານອື່ນໆ ຂອງກະສິກຳ ແລະ ປ່າໄມ້ ທີ່ມີຄຸນນະພາບສູງ;

5. ຕິດຕາມກວດກາການຈັດຕັ້ງປະຕິບັດໂຄງການ (ລວມທັງຂະໜາດຂອງສັງຄົມ ແລະ ສິ່ງແວດລ້ອມ) ໂດຍການມີສ່ວນຮ່ວມຂອງອຳນາດການປົກຄອງທ້ອງຖິ່ນ ແລະ ຊຸມຊົນ ແລ້ວລາຍງານໃຫ້ພາກສ່ວນທີ່ກ່ຽວຂ້ອງ.




**ໝາຍເຫດ:** ສຳລັບຂັ້ນຕອນທີ່ຊັດເຈນ, ຄວາມຕ້ອງການດ້ານການເງິນ ແລະ ໄລຍະເວລາໃນການອະນຸມັດ ແມ່ນຂຶ້ນກັບປະເພດຂອງການລົງທຶນເຊັ່ນ: ການນຳໃຊ້ທີ່ດິນຂອງລັດ ເນື້ອທີ່ຫຼາຍກວ່າ 150 ເຮັກຕາ ຂຶ້ນໄປ, ການນຳໃຊ້ທີ່ດິນຂອງລັດ ເນື້ອທີ່ດິນແຕ່ 150 ເຮັກຕາ ລົງມາ, ກໍລະນີນຳໃຊ້ທີ່ດິນຂອງພົນລະເມືອງລາວດ້ວຍການເຊົ່າ.



## 1.2. ການສຶກສາກອບລະບຽບກົດໝາຍ

ເມື່ອຕ້ອງການລົງທຶນໃນ ສປປ ລາວ ມັນມີຄວາມສຳຄັນທີ່ຈະຕ້ອງໄດ້ເຂົ້າໃຈກອບກົດໝາຍ ແລະ ລະບຽບການຕ່າງໆທີ່ກ່ຽວຂ້ອງກັບການຄຸ້ມຄອງການລົງທຶນຂອງລາວ. ໃນບົດແນະນຳຂອງລັດຖະບານ ສປ ຈີນ ກໍໄດ້ ຮຽກຮ້ອງໃຫ້ນັກລົງທຶນສ້າງຄວາມເຂົ້າໃຈຕໍ່ກົດໝາຍຂອງປະເທດເຈົ້າພາບກ່ອນການລົງທຶນ ແລະ ຍັງແນະນຳໃຫ້ນັກລົງທຶນສະໜອງການຝຶກອົບຮົມທາງດ້ານກົດໝາຍຂອງປະເທດເຈົ້າພາບໃຫ້ແກ່ພະນັກງານ ເພື່ອເປັນການສົ່ງເສີມການປະຕິບັດຕາມກົດໝາຍ. ນອກຈາກນີ້, ນັກລົງທຶນຍັງຄວນຂໍຄຳປຶກສາຈາກຂະແໜງການທີ່ກ່ຽວຂ້ອງໃນຂັ້ນສູນກາງ ແລະ ທ້ອງຖິ່ນ ເພື່ອໃຫ້ເຂົ້າໃຈເຖິງສະພາບການຈັດຕັ້ງປະຕິບັດຕົວຈິງ ແລະ ຊ່ອງຫວ່າງທີ່ມີ. ການຈ້າງທີ່ປຶກສາດ້ານກົດໝາຍ ສາມາດເປັນວິທີທີ່ມີປະສິດຕິພາບໃນການສ້າງຄວາມເຂົ້າໃຈຕໍ່ກັບກອບກົດໝາຍຂອງປະເທດລາວ, ໂດຍສະເພາະຢ່າງຍິ່ງເນື່ອງຈາກວ່າລະບຽບການສ່ວນໃຫຍ່ ແມ່ນຖືກເຜີຍແຜ່ເປັນ ພາສາອັງກິດ ແລະ ພາສາລາວເທົ່ານັ້ນ. ນັກລົງທຶນສາມາດເລີ່ມຕົ້ນທົບທວນບັນດາກົດໝາຍ ແລະ ລະບຽບການຂອງລາວທີ່ມີຢູ່ໃນເອກະສານຊ້ອນທ້າຍຂອງຄູ່ມືແນະນຳນີ້ ແລະ ສາມາດເຂົ້າເຖິງແຫຼ່ງຂໍ້ມູນດ້ານກົດໝາຍເພີ່ມເຕີມດັ່ງລາຍການລຸ່ມນີ້:




- **ຈົດໝາຍເຫດທາງລັດຖະການຂອງ ສປປ ລາວ** ແມ່ນບ່ອນເກັບມ້ຽນລະບຽບການຕ່າງໆ ເປັນພາສາອັງກິດ ແລະ ພາສາລາວ: https://laoofficialgazette.gov.la/




- **ກົມສົ່ງເສີມການລົງທຶນ ແລະ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ** ໄດ້ອັບເດດ ເວບໄຊທ໌ເປັນປະຈຳເພື່ອສະໜອງແຫຼ່ງຂໍ້ມູນໃໝ່ສຳລັບນັກລົງທຶນ: http://investlaos.gov.la/ ແລະ https://lncci.la/




- **ສຳນັກງານທີ່ປຶກສາເສດຖະກິດ ແລະ ການຄ້າ ສະຖານທູດ ສປ ຈີນ ປະຈຳ ສປປ ລາວ** ສະໜອງແຫຼ່ງຂໍ້ມູນແກ່ບັນດາບໍລິສັດຈີນທີ່ຊອກຫາການລົງທຶນຢູ່ລາວ: http://la.mofcom.gov.cn/




- **ສະພາການຄ້າຈີນປະຈຳລາວ** ໃຫ້ການສະໜັບສະໜູນ ແລະ ສ້າງໂອກາດໃນການສ້າງເຄືອຂ່າຍ ໃຫ້ແກ່ບັນດາບໍລິສັດທີ່ດຳເນີນທຸລະກິດຢູ່ລາວ. ສະພາການຄ້າ ຍັງໄດ້ຮັບຂ່າວສານ ແລະ ບົດນຳສະເໜີເປັນແຕ່ລະໄລຍະຈາກລັດຖະບານລາວ ກ່ຽວກັບການປ່ຽນແປງຂອງກອບກົດໝາຍຂອງລາວ.




- **ກະຊວງກະສິກຳ ແລະ ປ່າໄມ້** ສະໜອງແຫຼ່ງຂໍ້ມູນ ແລະ ຂ່າວສານກ່ຽວກັບດ້ານກະສິກຳ ແລະປ່າໄມ້ ໃນ ສປປ ລາວ: http://www.maf.gov.la

## 1.3. ການປະເມີນຢ່າງຄົບຊຸດ

ກ່ອນທີ່ຈະວາງແຜນການລົງທຶນ ນັກລົງທຶນຄວນໃຊ້ເວລາໃນການສ້າງຄວາມເຂົ້າໃຈວ່າຄວາມສ່ຽງໃດແດ່ທີ່ອາດຈະເຮັດໃຫ້ໂຄງການລົງທຶນລ່າຊ້າ ພ້ອມທັງສ້າງແຜນຍຸດທະສາດເພື່ອຫຼຸດຜ່ອນຄວາມສ່ຽງດັ່ງກ່າວ. ການດຳເນີນການກວດກາ ແລະ ປະເມີນທີ່ຖືກຕ້ອງ ຈະຊ່ວຍຫຼຸດຜ່ອນຄວາມສ່ຽງທີ່ອາດຈະເກີດຂຶ້ນຕໍ່ການລົງທຶນເຊັ່ນ: ຂໍ້ຂັດແຍ່ງກັບປະຊາຊົນ ຫຼື ກັບພາກສ່ວນທີ່ກ່ຽວຂ້ອງອື່ນໆ ຊຶ່ງມັນສາມາດພາໃຫ້ເກີດການສູນເສຍດ້ານການເງິນຢ່າງຫຼວງຫຼາຍ ແລະ ເຮັດໃຫ້ການດຳເນີນໂຄງການລ່າຊ້າ. ການປະເມີນຢ່າງຄົບຊຸດນີ້ ຈະຕ້ອງໄດ້ປະຕິບັດເພື່ອໃຫ້ສອດຄ່ອງກັບຫຼັກການ ການພັດທະນາສີຂຽວ ແລະ ການປົກປັກຮັກສາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ຫຼັກການ ການເຄົາລົບສິດທິຂອງປະຊາຊົນໃນການນຳໃຊ້ທີ່ດິນ, ການປະມົງ, ປ່າໄມ້ ແລະ ແຫຼ່ງນ້ຳ. ສຳລັບການລົງທຶນດ້ານກະສິກຳ ແລະ ປ່າໄມ້, ການປະເມີນສະຖານະພາບການຄອບຄອງ ແລະ ສິດຂອງຜູ້ນຳໃຊ້ທີ່ດິນແມ່ນຖືເປັນບູລິມະສິດ.



ໃນການປະເມີນນີ້ ຈະຕ້ອງໄດ້ປຶກສາກັບພາກສ່ວນກ່ຽວຂ້ອງໃນທ້ອງຖິ່ນເຊັ່ນ: ບໍລິສັດກົດໝາຍ, ອົງການຈັດຕັ້ງສັງຄົມທີ່ມີຄວາມເຂົ້າໃຈເລິກເຊິ່ງ ກ່ຽວກັບກອບນິຕິກຳຂອງລາວ. ການປະເມີນຢ່າງຄົບຊຸດ ປະກອບມີການປະເມີນດັ່ງລຸ່ມນີ້:

## 1.3.1. ການກຳນົດ ແລະ ປະເມີນສິດທີ່ດິນ ແລະ ການນຳໃຊ້ຊັບພະຍາກອນທຳມະຊາດຂອງຊຸມຊົນ



ຄູ່ມືຂອງອາຊຽນ ກ່ຽວກັບການສົ່ງເສີມການລົງທຶນຢ່າງມີຄວາມຮັບຜິດຊອບໃນດ້ານອາຫານ, ກະສິກຳ ແລະ ປ່າໄມ້ (2018) ໄດ້ລະບຸວ່າ ຄວາມສ່ຽງຂອງຂໍ້ຂັດແຍ່ງດ້ານທີ່ດິນຂອງການລົງທຶນແມ່ນສູງໃນປະເທດ, ເຊັ່ນ: ສປປ ລາວ, ທີ່ມີສິດການຄອບຄອງທີ່ດິນ ທີ່ບໍ່ເປັນທາງການ. ເພື່ອຫຼຸດຜ່ອນຄວາມສ່ຽງເຫຼົ່ານັ້ນ, ການສ້າງຄວາມເຂົ້າໃຈກ່ຽວກັບສິດນຳໃຊ້ທີ່ດິນຂອງຊຸມຊົນທີ່ໄດ້ຮັບຜົນກະທົບ ຖືເປັນພື້ນຖານ ໃນການກຳນົດຄ່າຊົດເຊີຍທີ່ຖືກຕ້ອງ ແລະ ເປັນທຳໃຫ້ແກ່ປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບ.

ນັກລົງທຶນຄວນສ້າງແຜນທີ່ການນຳໃຊ້ທີ່ດິນແບບມີສ່ວນຮ່ວມກັບປະຊາຊົນ ເພື່ອໃຫ້ສາມາດກຳນົດໄດ້ພື້ນທີ່ ທີ່ຈະມີການລົງທຶນ ແລະ ພື້ນທີ່ ທີ່ມີການອ້າງສິດທີ່ດິນຂອງປະຊາຊົນທີ່ໄດ້ຮັບຜົນກະທົບ, ບໍ່ວ່າຕອນດິນຈະມີເອກະສານທາງການ ຫຼື ຈະເປັນການຄອບຄອງນຳໃຊ້ຕາມປະເພນີ. ການສຶກສາກ່ຽວກັບການນຳໃຊ້ທີ່ດິນທ້ອງຖິ່ນ ຍັງເປັນສິ່ງສຳຄັນໃນການຢືນຢັນວ່າພື້ນທີ່ການລົງທຶນທີ່ລັດຖະບານຈັດສັນໃຫ້ນັ້ນມີຄວາມພ້ອມໃຫ້ນັກລົງທຶນນຳໃຊ້. ນັກລົງທຶນຍັງຄວນເອົາໃຈໃສ່ຕໍ່ກັບການນຳໃຊ້ພື້ນທີ່ຂອງປະຊາຊົນຢ່າງລະມັດລະວັງ ເຖິງແມ່ນວ່າຈະບໍ່ມີຄົນອາໃສຢູ່ໃນເຂດນັ້ນເຊັ່ນ: ການນຳໃຊ້ແຫຼ່ງນ້ຳ ຫຼື ການເກັບເຄື່ອງປ່າຂອງດົງໃນເຂດທີ່ໄດ້ຮັບຜົນກະທົບ. ການສ້າງຄວາມເຂົ້າໃຈຮູບແບບການນຳໃຊ້ທີ່ດິນ ແລະ ຊັບພະຍາກອນທຳມະຊາດເຫຼົ່ານີ້ ສາມາດຊ່ວຍໃຫ້ນັກລົງທຶນອອກແບບໂຄງການໂດຍທີ່ສາມາດຫຼຸດຜ່ອນຜົນກະທົບຕໍ່ຄວາມປອດໄພທາງດ້ານສະບຽງອາຫານ ແລະ ຊີວິດການເປັນຢູ່ຂອງຊຸມຊົນໄດ້.



## 1.3.2. ການດຳເນີນການສຶກສາຄວາມເປັນໄປໄດ້

ຄວນມີການສຶກສາຄວາມເປັນໄປໄດ້ກ່ອນການດຳເນີນທຸກໂຄງການລົງທຶນ ໂດຍອີງຕາມມາດຕາ 8 ຂອງກົດໝາຍວ່າດ້ວຍ ການປົກປັກຮັກສາສິ່ງແວດລ້ອມ (ເລກທີ 29/ສພຊ, 2012). ກ່ອນອື່ນນັກລົງທຶນຈະຕ້ອງໄດ້ເຊັນບົດບັນທຶກຄວາມເຂົ້າໃຈ (MOU) ກັບລັດຖະບານ ເພື່ອໃຫ້ສາມາດດຳເນີນການສຶກສາຄວາມເປັນໄປໄດ້ຂອງໂຄງການ. ການສຶກສາຕ້ອງປະກອບມີຂໍ້ມູນກ່ຽວກັບທີ່ຕັ້ງຂອງໂຄງການ, ກຳນົດເວລາຂອງການດຳເນີນໂຄງການ, ຄວາມຕ້ອງການທາງດ້ານແຮງງານ, ຄວາມຕ້ອງການໃນການເຊົ່າ ຫຼື ສຳປະທານທີ່ດິນ, ແຜນການດຳເນີນງານ ແລະ ຈັດສັນການແບ່ງປັນຜົນປະໂຫຍດທີ່ຄາດຄະເນໄວ້ຂອງໂຄງການ, ລວມເຖິງບັນດາຫົວຂໍ້ອື່ນໆ ດັ່ງທີ່ກຳນົດເອົາໄວ້ໃນ ມາດຕາ 44 ຂອງກົດໝາຍວ່າດ້ວຍ ການສົ່ງເສີມການລົງທຶນ (ເລກທີ 14/ສພຊ, 2016).

## 1.3.3. ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ (ESIA)

ຂະໜາດຂອງການລົງທຶນ ແລະ ກິດຈະກຳທີ່ຕັ້ງໄວ້ຈະກຳນົດວ່າການປະເມີນສິ່ງແວດລ້ອມ ແລະ ສັງຄົມ ປະເພດໃດທີ່ຈະຕ້ອງໄດ້ເຮັດກ່ອນການລົງທຶນ, ໂດຍສອດຄ່ອງກັບຂໍ້ຕົກລົງ ວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ບັນຊີໂຄງການລົງທຶນ ແລະ ກິດຈຳກຳຕ່າງໆ ທີ່ຕ້ອງໄດ້ດຳເນີນການສຶກສາເບື້ອງຕົ້ນກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ ຫຼື ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ, ສັງຄົມ ແລະ ທຳມະຊາດ (ເລກທີ 8056/ກຊສ, 2013). ໂຄງການຂະໜາດນ້ອຍທີ່ມີຜົນກະທົບໜ້ອຍກວ່າຈະ ສຳເລັດການກວດກາສິ່ງແວດລ້ອມເບື້ອງຕົ້ນ (IEE) ສຳລັບໂຄງການທີ່ມີຜົນກະທົບໜ້ອຍ ຫຼື ສຳເລັດ ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ (ESIA) ສຳລັບໂຄງການທີ່ມີຜົນກະທົບທີ່ອາດຈະເກີດຂຶ້ນຫຼາຍກວ່າເກົ່າ (ດຳລັດ ວ່າດ້ວຍການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ, ເລກທີ 21/ລບ, 2019).[1]










1] ເຖິງແມ່ນວ່າລະບຽບການໃນພາສາລາວໂດຍທົ່ວໄປໝາຍເຖິງ "ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ (EIAs)", ແຕ່ປະໂຫຍກນີ້ມັກຖືກແປເປັນ "ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ (ESIAs)" ໃນພາສາອັງກິດ, ສອດຄ່ອງກັບການປະຕິບັດທີ່ດີທີ່ສຸດຂອງສາກົນທີ່ເນັ້ນໜັກເຖິງຂະໜາດສັງຄົມທີ່ຈຳເປັນຂອງການປະເມີນເຫຼົ່ານັ້ນ.

ESIA ຮັບປະກັນວ່າມີມາດຕະການທາງດ້ານກົດໝາຍ ແລະ ເໝາະສົມ ເພື່ອປ້ອງກັນ ແລະ ຫຼຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມທີ່ຖືກຕ້ອງ. ESIA ແມ່ນການປະເມີນທີ່ກວມເອົາດ້ານສັງຄົມ, ສິ່ງແວດລ້ອມ, ສຸຂະພາບ, ບົດບາດຍິງຊາຍ ແລະ ດ້ານຊົນເຜົ່າ ໃນພື້ນທີ່ການລົງທຶນ. ນອກນັ້ນ, ກໍຍັງປະເມີນຜົນກະທົບທີ່ຕິດພັນກັບການຊົດເຊີຍ, ການຈັດສັນຍົກຍ້າຍ, ການຟື້ນຟູຊີວິດການເປັນຢູ່ ແລະ ຜົນກະທົບອື່ນໆທີ່ເກີດຂຶ້ນຈາກການລົງທຶນ ດັ່ງທີ່ໄດ້ກຳນົດໄວ້ໃນ ມາດຕາ 22 ຂອງ ດຳລັດວ່າດ້ວຍ ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ (ເລກທີ 21/ລບ, 2019). ຄຽງຄູ່ກັບການເຮັດ ESIA, ນັກລົງທຶນຕ້ອງໄດ້ສ້າງແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ (EMMP) ທີ່ໄດ້ມີການກຳນົດວິທີການໃນການປ້ອງກັນຜົນກະທົບຕໍ່ສິ່ງແວດລ້ອມ, ການທົດແທນຊີວະນາໆພັນ, ການປູກໄມ້ທົດແທນ, ການບູລະນະຟື້ນຟູ ແລະ ການປ້ອງກັນເຂດນໍ້າ, ການອະນຸມັດເອກະສານເຫຼົ່ານີ້ ຈະສົ່ງຜົນໃຫ້ມີການອອກໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ (ECC). ນັກລົງທຶນຕ້ອງສ້າງແຜນການມີສ່ວນຮ່ວມຂອງມວນຊົນໃນທຸກຂັ້ນຕອນຂອງການລົງທຶນ ແລະ ໃຫ້ຊຸມຊົນທີ່ໄດ້ຮັບຜົນກະທົບ ມີສ່ວນຮ່ວມໃນການເກັບກຳຂໍ້ມູນ ແລະ ເຂົ້າຮ່ວມກອງປະຊຸມປຶກສາຫາລືໃນຂັ້ນບ້ານ ແລະ ຕ້ອງໄດ້ຮັບການເຫັນດີຈາກສຽງສ່ວນຫຼາຍຂອງຜູ້ທີ່ໄດ້ຮັບຜົນກະທົບ ຈຶ່ງໄດ້ຮັບໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ (ECC) ດັ່ງທີ່ກຳນົດໄວ້ໃນ ມາດຕາ 42 ຂອງ ດຳລັດວ່າດ້ວຍ ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ (ເລກທີ 21/ລບ, 2019).




ບົດສຶກສາເບື້ອງຕົ້ນ ກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ, ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ, ແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ, ບົດລາຍງານການຈັດຕັ້ງປະຕິບັດວຽກງານສິ່ງແວດລ້ອມ ຂອງໂຄງການ ແມ່ນຈຳເປັນຕ້ອງໄດ້ມີການເຜີຍແຜ່ອອນລາຍ ເພື່ອຮັບຄຳຄິດເຫັນຂອງມວນຊົນ, ພ້ອມທັງເຜີຍແຜ່ຜ່ານໜັງສືພິມ, ໂທລະພາບ, ລະບົບສື່ສານໃນຂັ້ນບ້ານ ແລະ ລາຍການວິທະຍຸ ດັ່ງກຳນົດໄວ້ໃນ ມາດຕາ 38 ຂອງດຳລັດວ່າດ້ວຍ ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ (ເລກທີ 21/ລບ, 2019).

## 1.3.4. ການສຳຫຼວດ ແລະ ເກັບກູ້ລະເບີດທີ່ຍັງບໍ່ແຕກ (UXO) ອອກຈາກພື້ນທີ່ການລົງທຶນ

ຫຼາຍພື້ນທີ່ໃນລາວ, ໂດຍສະເພາະແມ່ນເຂດຊົນນະບົດ ຍັງມີລະເບີດບໍ່ທັນແຕກ (UXO) ກະຈາຍຢູ່ເປັນຈຳນວນຫຼວງຫຼາຍ ແລະ ຈຳເປັນຕ້ອງໄດ້ມີການເກັບກູ້ອອກກ່ອນທີ່ຈະມີການລົງທຶນ ເພາະມັນຈະເປັນອັນຕະລາຍຮ້າຍແຮງຕໍ່ຊີວິດ ແລະ ສຸຂະພາບຂອງພະນັກງານ ແລະ ປະຊາຊົນທ້ອງຖິ່ນ ແລະ ຍັງເປັນສິ່ງກີດຂວາງຕໍ່ກັບຄວາມກ້າວໜ້າຂອງການລົງທຶນ. ກ່ອນທີ່ຈະເລີ່ມຕົ້ນໂຄງການ ຕ້ອງມີການສຳຫຼວດພື້ນທີ່ການລົງທຶນ ເພື່ອຊອກຫາ ແລະ ກຳຈັດລະເບີດທີ່ບໍ່ທັນແຕກເຫຼົ່ານັ້ນອອກກ່ອນ.



# 2. ການປຶກສາຫາລື ແລະ ການມີສ່ວນຮ່ວມຂອງ ປະຊາຊົນ

ບົດແນະນຳຂອງ ສປ ຈີນ ກ່ຽວກັບຂົງເຂດກະສິກຳ ໄດ້ຮຽກຮ້ອງໃຫ້ການອອກແບບຂອງໂຄງການແມ່ນອີງໃສ່ຄວາມຕ້ອງການຂອງ ປະຊາຊົນ ແລະ ເພື່ອໃຫ້ບັນລຸຜົນໄດ້ຮັບທີ່ໄດ້ປະໂຫຍດທັງສອງຝ່າຍ ກໍຄືສຳລັບນັກລົງທຶນ ແລະ ປະຊາຊົນ. ການອອກແບບໂຄງການ ລົງທຶນໂດຍຄຳນຶງເຖິງຊຸມຊົນ ແມ່ນຊ່ວຍໃຫ້ໄດ້ຮັບການສະໜັບສະໜູນຈາກທ້ອງຖິ່ນ ໃນການດຳເນີນໂຄງການ ແລະ ຫຼຸດຜ່ອນຄວາມສ່ຽງ ໃຫ້ກັບນັກລົງທຶນ. ນິຕິກຳໃນ ສປປ ລາວ ເປັນຕົ້ນແມ່ນ ຄຳແນະນຳ ຂະບວນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະ ຊາດ ຈາກໂຄງການລົງທຶນ ແລະ ກິດຈະການຕ່າງໆ (ເລກທີ 8030/ກຊສ, 2013) ໄດ້ກຳນົດໄວ້ວ່າ ນັກລົງທຶນຕ້ອງຮັບຮູ້ສິດຂອງ ປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການ ໃນການໄດ້ຮັບການປຶກສາຫາລື ແລະ ມີສ່ວນຮ່ວມເຂົ້າໃນຂະບວນການຕັດສິນໃຈ ໂດຍ ສະເພາະແມ່ນຂະບວນການສຶກສາຄວາມເປັນໄປໄດ້ ແລະ ສຶກສາຜົນກະທົບທາງດ້ານສິ່ງແວດລ້ອມ ແລະ ສັງຄົມ. ການປຶກສາຫາລື ແລະ ການມີສ່ວນຮ່ວມຂອງປະຊາຊົນ ເປັນຫຼັກການທີ່ສຳຄັນຂອງການລົງທຶນທີ່ມີຄວາມຮັບຜິດຊອບ.



ການປຶກສາຫາລືກັບປະຊາຊົນທີ່ໄດ້ຮັບຜົນກະທົບຈະຕ້ອງດຳເນີນຢ່າງເປັນປົກກະຕິ ແລະ ຕໍ່ເນື່ອງ ຕັ້ງແຕ່ກ່ອນທີ່ຈະຮັບຮອງເອົາການ ອອກແບບໂຄງການ ແລະ ສືບຕໍ່ການມີສ່ວນຮ່ວມຂອງປະຊາຊົນຢ່າງຕໍ່ເນື່ອງ ຈົນສິ້ນສຸດໂຄງການລົງທຶນ. ລັດຖະບານ ສປ ຈີນ ໄດ້ ຮຽກຮ້ອງໃຫ້ນັກລົງທຶນນຳໃຊ້ຫຼັກການ FPIC ເຂົ້າໃນການປຶກສາຫາລື. ຊຶ່ງປະຊາຊົນອາດຈະຕັດສິນໃຈດ້ວຍຕົວເອງ ໂດຍບໍ່ມີໃຜບັງຄັບ. FPIC ແມ່ນສົ່ງເສີມໃຫ້ປະຊາຊົນມີສິດໃນການຕັດສິນໃຈ ພາຍຫຼັງທີ່ພວກເຂົາໄດ້ຮັບຂໍ້ມູນທີ່ຊັດເຈນ, ພຽງພໍ, ກ່ອນລ່ວງໜ້າ ແລະ ກຳນົດໃຫ້ນັກລົງທຶນຕ້ອງໄດ້ໃຫ້ເວລາຢ່າງພຽງພໍແກ່ປະຊາຊົນໃນການປຶກສາຫາລືພາຍໃນ ເພື່ອຕັດສິນໃຈໃນການຮັບເອົາ ຫຼື ປະຕິເສດ ໂຄງການລົງທຶນດັ່ງກ່າວ ໂດຍປາສະຈາກການບັງຄັບ ຫຼື ກົດດັນໃດໆ.



ຂັ້ນຕອນໃນການດຳເນີນ FPIC ປະກອບມີ: 1) ຈັດກອງປະຊຸມຮ່ວມກັບປະຊາຊົນ ເພື່ອຕົກລົງກ່ຽວກັບຈຸດປະສົງ ແລະ ຂະບວນການຂອງການເຮັດ FPIC, 2) ສົ່ງເສີມໃຫ້ປະຊາຊົນທີ່ຈະໄດ້ຮັບຜົນກະທົບທັງໝົດເຂົ້າຮ່ວມການປຶກສາຫາລື, 3) ສົ່ງເສີມໃຫ້ປະຊາຊົນ ໄດ້ຮັບຂໍ້ມູນຢ່າງພຽງພໍ ແລະ ຈຳເປັນໃນການຕັດສິນໃຈ, 4) ອຳນວຍຄວາມສະດວກໃຫ້ປະຊາຊົນເຂົ້າເຖິງຊ່ຽວຊານ, ນັກກົດໝາຍ ແລະ ວິຊາການທີ່ກ່ຽວຂ້ອງ ເພື່ອໃຫ້ໄດ້ຮັບການຊ່ວຍເຫຼືອທາງດ້ານວິຊາການທີ່ຈຳເປັນ, 5) ຈັດກອງປະຊຸມເຈລະຈາ ເພື່ອພິຈາລະນາການຮັບເອົາໂຄງການ ໂດຍປາສະຈາກການບັງຄັບ, 6) ໃຫ້ເວລາຢ່າງພຽງພໍແກ່ປະຊາຊົນໄດ້ປຶກສາຫາລືຮ່ວມກັນພາຍໃນບ້ານ ຢ່າງເໝາະສົມ ແລະ ພຽງພໍ ເພື່ອໃຫ້ສາມາດຕັດສິນໃຈເປັນເອກະພາບ. ການຍິນຍອມທີ່ໄດ້ຈາກ FPIC ອາດເປັນສຽງສ່ວນຫຼາຍ ຫຼື ຄວາມເຫັນດີເຫັນພ້ອມ ຊຶ່ງຂຶ້ນກັບຊຸມຊົນເປັນຜູ້ກຳນົດ. ຖ້າການຕັດສິນໃຈບໍ່ເປັນເອກະພາບ, ນັກລົງທຶນຄວນເອົາໃຈໃສ່ກັບສຽງທີ່ບໍ່ເຫັນດີ ເພື່ອກຳນົດເງື່ອນໄຂ ແລະ ຄວາມຕ້ອງການທີ່ຈຳເປັນ ເພື່ອໃຫ້ບັນລຸຂໍ້ຕົກລົງທີ່ເປັນເປັນສຽງສ່ວນໃຫຍ່ຊຸມຊົນ.



ເນື່ອງຈາກວ່າປະຊາຊົນແຕ່ລະຄົນ, ແຕ່ລະກຸ່ມມີຄວາມສົນໃຈ, ຄວາມຕ້ອງການ ແລະ ໄດ້ຮັບຜົນກະທົບທີ່ແຕກຕ່າງກັນ. ດັ່ງນັ້ນ, ພວກເຂົາທັງໝົດຕ້ອງໄດ້ເຂົ້າຮ່ວມ, ບໍ່ແມ່ນພຽງແຕ່ຫົວໜ້າຄອບຄົວ ຫຼື ຄະນະປົກຄອງບ້ານເທົ່ານັ້ນ, ເພື່ອໃຫ້ທຸກຄົນ ຊຶ່ງລວມມີ ແມ່ຍິງ, ຜູ້ຊາຍ, ຊາວໜຸ່ມ, ຜູ້ເຖົ້າ, ຄົນເສຍອົງຄະ, ຊົນເຜົ່າ ແລະ ກຸ່ມຜູ້ທີ່ອ່ອນແອ ສ່ຽງໄພອື່ນໆ ໄດ້ມີສິດສຽງເທົ່າທຽມກັນ. ການຈັດການປຶກສາຫາລືແຍກສະເພາະແຕ່ລະກຸ່ມທີ່ມີຄວາມສ່ຽງ ດັ່ງກ່າວເຫຼົ່ານີ້ ຈະຊ່ວຍໃຫ້ ນັກລົງທຶນເຂົ້າໃຈວ່າ ໂຄງການອາດຈະສົ່ງຜົນກະທົບຕໍ່ພວກເຂົາຕ່າງກັນແນວໃດ ແລະ ຊັບພະຍາກອນຫຍັງທີ່ອາດຈະຈຳເປັນເພື່ອຮັບປະກັນໃຫ້ແຕ່ລະກຸ່ມໄດ້ຮັບປະໂຫຍດເທົ່າທຽມກັນ.



ໃນການຈັດກອງປະຊຸມ ປຶກສາຫາລື ແຕ່ລະຄັ້ງ ນັກລົງທຶນຄວນເອົາໃຈໃສ່ ຊຸກຍູ້ໃຫ້ແມ່ຍິງ ແລະ ກຸ່ມຜູ້ດ້ອຍໂອກາດໄດ້ເຂົ້າຮ່ວມນຳ ໂດຍລະບຸໃຫ້ຈະແຈ້ງ ໃນການເອີ້ນປະຊຸມໃນແຕ່ລະຄັ້ງ.

# 3. ການສ້າງກົນໄກການແກ້ໄຂຄຳຮ້ອງທຸກສຳລັບຜູ້ທີ່ຖືກຜົນກະທົບ

ກົນໄກການແກ້ໄຂຄຳຮ້ອງທຸກນີ້ແມ່ນສອດຄ່ອງກັບຫຼັກການ ການປະກອບສ່ວນເຂົ້າໃນການພັດທະນາສັງຄົມ ແລະ ຫຼັກການ ການປຶກສາຫາລື ແລະ ມີສ່ວນຮ່ວມຂອງປະຊາຊົນ. ຄຳແນະນຳຂອງ ຄະນະກຳມະການກ່ຽວກັບຄວາມປອດໄພດ້ານສະບຽງອາຫານໂລກ ແລະ ອາຊຽນ ກຳນົດວ່າ ກົນໄກການຮ້ອງທຸກແບບມີສ່ວນຮ່ວມ ແລະ ໂປ່ງໃສ ແມ່ນມີຄວາມຈຳເປັນໃນການບັນລຸການລົງທຶນທີ່ມີຄວາມຮັບຜິດຊອບ. ນັກລົງທຶນຕ້ອງປະຕິບັດຕາມກົດໝາຍ ແລະ ນະໂຍບາຍຂອງ ສປປ ລາວ ໃນການສ້າງໃຫ້ມີລະບົບການຄຸ້ມຄອງ, ຂະບວນການ ແລະ ກົນໄກການຮ້ອງທຸກ ດ້ວຍການປະຕິບັດກົດໝາຍຕາມຫຼັກນິຕິທຳ ແລະ ສົ່ງເສີມການເຂົ້າເຖິງກົນໄກການໄກ່ເກ່ຍ, ຮ້ອງທຸກຢ່າງມີປະສິດທິພາບ. ກົດໝາຍວ່າດ້ວຍ ການແກ້ໄຂຄຳຮ້ອງທຸກ (ເລກທີ 05/ສພຊ, 2016) ໄດ້ກຳນົດນະໂຍບາຍ, ຫຼັກການກ່ຽວກັບການຮ້ອງທຸກ ແລະ ຂັ້ນຕອນຂອງການຮ້ອງທຸກຢູ່ໃນ ສປປ ລາວ, ໄປຄຽງຄູ່ກັບກົດໝາຍດັ່ງກ່າວ, ກົດໝາຍວ່າດ້ວຍ ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ (ເລກທີ 51/ສພຊ, 2018) ກຳນົດໃຫ້ມີຄະນະກຳມະການ ແລະ ກົນໄກການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແລະ ດຳລັດ ວ່າດ້ວຍ ການແກ້ໄຂຂໍ້ຂັດແຍ່ງທາງດ້ານແຮງງານ (ເລກທີ 76/ລບ, 2018) ກຳນົດໃຫ້ມີລະບົບຂອງການແກ້ໄຂຂໍ້ຂັດແຍ່ງສະເພາະທາງດ້ານແຮງງານ.

## 3.1. ການຮັບຟັງຄຳຮ້ອງທຸກ

ບົດແນະນຳຂອງ ສປ ຈີນ ກ່ຽວກັບການລົງທຶນດ້ານກະສິກຳ ແລະ ການປົກປັກຮັກສາສິ່ງແວດລ້ອມ ຮຽກຮ້ອງໃຫ້ນັກລົງທຶນສ້າງກົນໄກການແກ້ໄຂຄຳຮ້ອງທຸກ ໂດຍສົມທົບກັບລັດຖະບານ ແລະ ປະຊາຊົນ. ກົນໄກດັ່ງກ່າວຄວນເຮັດໃນຫຼາຍຮູບແບບ ເຊັ່ນ: ສາຍດ່ວນ, ກ່ອງຮັບຄຳຄິດເຫັນ, ກອງປະຊຸມສຳລັບຮັບຟັງຄຳຄິດເຫັນ ຫຼື ຫ້ອງການແກ້ໄຂຄຳຮ້ອງທຸກ ແລະ ຮູບແບບການແກ້ໄຂຂໍ້ຂັດແຍ່ງຕາມປະເພນີຂອງຊຸມຊົນ. ນັກລົງທຶນຄວນເຜີຍແຜ່ໃຫ້ປະຊາຊົນໄດ້ຮັບຮູ້ກົນໄກດັ່ງກ່າວນີ້ຢ່າງກວ້າງຂວາງ ໂດຍຜ່ານຫຼາຍຊ່ອງທາງ ເຊັ່ນ: ໂປສເຕີ, ວິດີໂອ, ວິທະຍຸ ແລະ ກອງປະຊຸມບ້ານ ແລະ ອື່ນໆ, ການສະເໜີຄຳຮ້ອງທຸກ ບໍ່ຄວນຈະມີການຮຽກຮ້ອງຄ່າໃຊ້ຈ່າຍ, ໃຫ້ມີບໍລິການເປັນພາສາທ້ອງຖິ່ນ ແລະ ບໍ່ເປີດເຜີຍຊື່ (ຖ້າຕ້ອງການ). ໂຄງການລົງທຶນຄວນກຳນົດຂັ້ນຕອນ ແລະ ມາດຕະຖານຂອງຂະບວນການຮັບຟັງ ແລະ ແກ້ໄຂຄຳຮ້ອງທຸກ ໃຫ້ມີຄວາມຊັດເຈນ, ໂປ່ງໃສ ແລະ ເປັນທຳ ໂດຍການປຶກສາຫາລືກັບພາກສ່ວນທີ່ກ່ຽວຂ້ອງທັງໝົດຂອງໂຄງການ.



### 3.2. ການແກ້ໄຂຄຳສະເໜີ ແລະ ການແກ້ໄຂຂໍ້ຂັດແຍ່ງ

ຫຼັງຈາກໄດ້ຮັບຄຳຮ້ອງທຸກແລ້ວ, ອີງຕາມຄຳແນະນຳຂອງລັດຖະບານຈີນກ່ຽວກັບການລົງທຶນດ້ານກະສິກຳ ໄດ້ຮຽກຮ້ອງໃຫ້ບັນດານັກລົງທຶນເຈລະຈາກັບຜູ້ມີສ່ວນຮ່ວມ ເພື່ອຊອກຫາສາເຫດ ແລະ ແກ້ໄຂບັນຫາ ພ້ອມທັງປັບປຸງນະໂຍບາຍຂອງໂຄງການລົງທຶນ ເພື່ອຫຼີກລ່ຽງບໍ່ໃຫ້ມີບັນຫາຄ້າຍຄືເກົ່າເກີດຂຶ້ນອີກໃນອະນາຄົດ. ນອກຈາກນີ້, ຄວນມີການສົ່ງບົດລາຍງານທີ່ເປັນທາງການກ່ຽວກັບການແກ້ໄຂຄຳສະເໜີໃຫ້ອີກຝ່າຍໜຶ່ງໄດ້ເກັບໄວ້. ຖ້າກໍລະນີທີ່ບໍ່ສາມາດຕົກລົງກັນໄດ້ລະຫວ່າງໂຄງການລົງທຶນ ແລະ ປະຊາຊົນ, ຂັ້ນຕອນຕໍ່ໄປແມ່ນຈະເຂົ້າສູ່ຂະບວນການຍຸຕິທຳຕາມກົດໝາຍຂອງ ສປປ ລາວ ຊຶ່ງກຳນົດໃຫ້ມີຄະນະຮັບຜິດຊອບສະເພາະ ເພື່ອພິຈາລະນາ ແລະ ການແກ້ໄຂບັນຫາ (ກົດໝາຍວ່າດ້ວຍ ການແກ້ໄຂຄຳຮ້ອງທຸກ, ເລກທີ 05/ສພຊ, 2016 ແລະ ດຳລັດ ວ່າດ້ວຍ ການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນອອກຈາກໂຄງການ, ເລກທີ 84/ລບ, 2016).



# 4. ການເຈລະຈາການເຮັດສັນຍາກັບປະຊາຊົນ

ການເຮັດສັນຍາທີ່ມີຄວາມເປັນທຳລະຫວ່າງ ໂຄງການລົງທຶນ ແລະ ປະຊາຊົນ ແມ່ນສອດຄ່ອງກັບຫຼັກການ ການປຶກສາຫາລື ແລະ ການມີສ່ວນຮ່ວມຂອງປະຊາຊົນ, ຫຼັກການ ການເປີດເຜີຍຂໍ້ມູນ ແລະ ຄວາມໂປ່ງໃສ ແລະ ຫຼັກການ ການປະກອບສ່ວນເຂົ້າໃນການພັດທະນາສັງຄົມ ຂອງຄູ່ມືແນະນຳສະບັບນີ້. ການສົ່ງເສີມ ການເຮັດສັນຍາທີ່ມີຄວາມເປັນທຳຈະຕ້ອງເອົາໃຈໃສ່ສ້າງຄວາມສະເໝີພາບໃນການເຈລະຈາ ແລະ ຂະບວນການພິຈາລະນາຕັດສິນໃຈຕໍ່ກັບເງື່ອນໄຂຂອງສັນຍາ.

## 4.1. ການສ້າງຄວາມສະເໝີພາບໃນການເຈລະຈາ

ຄວາມບໍ່ເທົ່າທຽມກັນ ລະຫວ່າງປະຊາຊົນ ແລະ ນັກລົງທຶນ ອັນເນື່ອງມາຈາກປັດໄຈທາງດ້ານວັດທະນະທຳປະເພນີ, ການເຂົ້າເຖິງຂໍ້ມູນຂ່າວສານ, ຄວາມສາມາດໃນການເຈລະຈາ ຕະຫຼອດຈົນເຖິງສະຖານະອຳນາດ ເປັນສິ່ງກີດຂວາງໃຫ້ການເຈລະຈາ ທີ່ບໍ່ມີຄວາມເປັນທຳ. ຍ້ອນສາເຫດດັ່ງກ່າວ, ນັກລົງທຶນ ຄວນເອົາໃຈໃສ່ໃຫ້ການສະໜັບສະໜູນປະຊາຊົນໃຫ້ເກີດມີຄວາມສະເໝີພາບ ໂດຍສົ່ງເສີມໃຫ້ທຸກຄົນໃນຊຸມຊົນໄດ້ເຂົ້າເຖິງຂໍ້ມູນຂ່າວສານຂອງໂຄງການ, ສະໜອງການຊ່ວຍເຫຼືອທາງດ້ານວິຊາການທີ່ຈຳເປັນ ແລະ ສົ່ງເສີມການມີສ່ວນຮ່ວມໃນການເຈລະຈາການເຮັດສັນຍາ.









ຄວນໃຫ້ຄວາມສຳຄັນຕໍ່ຄຳສະເໜີຂອງຜູ້ດ້ອຍໂອກາດ ເຊັ່ນ: ແມ່ຍິງ, ຄົນພິການ, ຊາວໜຸ່ມ, ຜູ້ສູງອາຍຸ ແລະ ຊົນເຜົ່າ, ໂດຍຈັດກອງປະຊຸມປຶກສາຫາລືສະເພາະຮ່ວມກັບກຸ່ມດັ່ງກ່າວ ເພື່ອສ້າງຄວາມເຂົ້າໃຈຕໍ່ກັບທັດສະນະສະເພາະຂອງເຂົາເຈົ້າ. ຖ້າມີບຸກຄົນຈຳນວນໜຶ່ງບໍ່ເຫັນດີກັບການຕັດສິນໃຈຂອງຄົນສ່ວນໃຫຍ່, ນັກລົງທຶນຕ້ອງຊອກຫາສາເຫດ ແລະ ຫາທາງແກ້ໄຂ ເພື່ອຕອບສະໜອງຄວາມຕ້ອງການຂອງປະຊາຊົນທັງໝົດ. ນັກລົງທຶນຄວນຈັດຈ້າງຊ່ຽວຊານໃນການເຜີຍແຜ່ປະຊາສຳພັນຊຸມຊົນ ຜູ້ທີ່ສາມາດສ້າງຄວາມໄວ້ວາງໃຈລະຫວ່າງນັກລົງທຶນ ແລະ ຜູ້ທີ່ໄດ້ຮັບຜົນກະທົບໃນລະຫວ່າງການເຈລະຈາ. ຊ່ຽວຊານນີ້ອາດຈະມາຈາກບໍລິສັດທີ່ປຶກສາ ຫຼື ອົງການຈັດຕັ້ງທາງສັງຄົມ ແລະ ຄວນເປັນຊົນເຜົ່າດຽວກັນກັບຊຸມຊົນທີ່ໄດ້ຮັບຜົນກະທົບ.

## 4.2. ການຕົກລົງກ່ຽວກັບຂໍ້ກຳນົດສຳຄັນໃນສັນຍາທີ່ເປັນລາຍລັກອັກສອນ

ການຕົກລົງຂໍ້ກຳນົດສຳຄັນໃນສັນຍາທີ່ເປັນລາຍລັກອັກສອນຊ່ວຍໃຫ້ນັກລົງທຶນ ແລະ ປະຊາຊົນມີຄວາມເຂົ້າໃຈເປັນເອກະພາບກັນຕະຫຼອດໄລຍະຂອງໂຄງການ. ໃນສັນຍາຄວນລະບຸທຸກຂໍ້ກຳນົດເງື່ອນໄຂຜູກພັນຂອງນັກລົງທຶນ ແລະ ປະຊາຊົນໃຫ້ຈະແຈ້ງ. ສັນຍາຄວນຂຽນເປັນພາສາທີ່ທັງສອງຝ່າຍເຂົ້າໃຈໄດ້ ຫຼື ອາດຈະເຮັດເປັນສອງພາສາ ສຳລັບປະຊາຊົນ ແລະ ນັກລົງທຶນ ໂດຍມີການລົງລາຍເຊັນ ແລະ ປະທັບຕາຢ່າງຖືກຕ້ອງ. ນອກຈາກນີ້ ສັນຍາດັ່ງກ່າວຈະຕ້ອງໄດ້ຂຶ້ນທະບຽນສານ ເພື່ອຢັ້ງຢືນຄວາມຖືກຕ້ອງທາງດ້ານກົດໝາຍ ໂດຍອີງຕາມ ມາດຕາ 2 ຂອງກົດໝາຍວ່າດ້ວຍ ທະບຽນສານ (ເລກທີ 11/ສພຊ 2009). ຖ້າຂໍ້ກຳນົດໃນສັນຍາຫາກບໍ່ຈະແຈ້ງ ອາດຈະເກີດການຕີຄວາມໝາຍທີ່ແຕກຕ່າງກັນ ແລະ ຈະເຮັດໃຫ້ມີຄວາມຫຍຸ້ງຍາກໃນການປະຕິບັດຕາມ ແລະ ອາດຈະບໍ່ສາມາດບັງຄັບໃຊ້ ຫຼື ຕິດຕາມກວດກາການປະຕິບັດໄດ້. ບາງຂໍ້ກຳນົດທີ່ສຳຄັນທີ່ຄວນລະບຸໃນສັນຍາເຊັ່ນ: ໄລຍະເວລາຂອງໂຄງການ, ຜົນໄດ້ຮັບ, ເງື່ອນໄຂທາງການຄ້າ, ການຊົດເຊີຍ ຫຼື ການຍົກຍ້າຍຈັດສັນ, ພາລະບົດບາດ ແລະ ຄວາມຮັບຜິດຊອບຂອງທັງສອງຝ່າຍ ຊຶ່ງມີລາຍລະອຽດ ໃນປະມວນກົດໝາຍແພ່ງ (ເລກທີ 55/ສພຊ, 2018). ນອກຈາກນີ້, ຄວນພິມແຈກຢາຍໃຫ້ແຕ່ລະຝ່າຍທີ່ເຊັນສັນຍາ ຊຶ່ງລວມມີ ບ້ານ ແລະ ປະຊາຊົນທີ່ກ່ຽວຂ້ອງໃນສັນຍາ. ປະເພດສັນຍາອາດຈະປະກອບມີ:



**4.2.1. ສັນຍາການຈ້າງງານ:** ອີງຕາມ ມາດຕາ 78 ຂອງກົດໝາຍວ່າດ້ວຍ ແຮງງານ (ເລກທີ 43/ສພຊ, 2013) ລະບຸວ່າຜູ້ຈ້າງແຮງງານຕ້ອງມີສັນຍາຈ້າງງານທີ່ເປັນລາຍລັກອັກສອນກັບຜູ້ອອກແຮງງານ ຊຶ່ງປະກອບມີເນື້ອໃນສຳຄັນດັ່ງນີ້: ຄວາມຮັບຜິດຊອບຂອງພະນັກງານ, ຄ່າຈ້າງ, ໄລຍະເວລາຂອງການຈ້າງງານ, ຮູບແບບການຈ່າຍເງິນ, ນະໂຍບາຍສະຫວັດດີການ, ຜົນປະໂຫຍດ ແລະ ວັນພັກຜ່ອນ/ວັນພັກ (ມາດຕາ 78). ສັນຍາຄວນລວມມີ ຂໍ້ມູນແຜນການຝຶກອົບຮົມ ແລະ ກົນໄກການແກ້ໄຂຂໍ້ຂັດແຍ່ງ.



**4.2.2. ສັນຍາເຊົ່າທີ່ດິນ:** ຄວນມີການເຮັດສັນຍາປະເພດນີ້ໃນເວລາໂຄງການລົງທຶນດ້ານກະສິກຳຕາມສັນຍາລະຫວ່າງ ເຈົ້າຂອງທີ່ດິນແຕ່ລະຄົນ ແລະ ນັກລົງທຶນ. ສັນຍາດັ່ງກ່າວຄວນກຳນົດລະອຽດເຊັ່ນວ່າ: ໄລຍະເວລາຂອງການເຊົ່າ, ຂອບເຂດທາງພູມສາດ, ລາຄາເຊົ່າທີ່ດິນ, ກຳນົດເວລາການຈ່າຍເງິນ ແລະ ກົນໄກການແກ້ໄຂຂໍ້ຂັດແຍ່ງ;



**4.2.3. ສັນຍາຊື້-ຂາຍສິນຄ້າ:** ຄວນມີການເຮັດສັນຍາປະເພດນີ້ ເມື່ອຊາວສວນຂະໜາດນ້ອຍຂາຍສິນຄ້າກະສິກຳ ແລະ ປ່າໄມ້ ໃຫ້ແກ່ບໍລິສັດ. ສັນຍາເຫຼົ່ານີ້ ຄວນປະກອບມີເນື້ອໃນສຳຄັນດັ່ງນີ້: ໄລຍະເວລາການຮັບຊື້, ລາຄາຊື້ (ກຳນົດລາຄາຄ້ຳປະກັນຂັ້ນຕ່ຳ ເພື່ອປົກປ້ອງປະຊາຊົນຈາກການເໜັງຕີງຂອງລາຄາສິນຄ້າ), ປະລິມານສິນຄ້າທີ່ຕ້ອງການຈະຊື້, ຕາຕະລາງການຂາຍ ແລະ ການເກັບຊື້ສິນຄ້າ, ມາດຕະຖານຄຸນນະພາບສິນຄ້າ, ການຈັດການຫຼັງການເກັບກ່ຽວ ແລະ ກົນໄກການແກ້ໄຂຂໍ້ຂັດແຍ່ງ. ນັກລົງທຶນຍັງສາມາດອ້າງອີງໃສ່ເຄື່ອງມືສາກົນ ເຊັ່ນ: "ຂໍ້ຕົກລົງຕົວແບບສຳລັບສັນຍາກະສິກຳທີ່ມີຄວາມຮັບຜິດຊອບ" ຂອງ FAO: http://www.fao.org/3/ca1772en/CA1772EN.pdf

# 5. ການຊົດເຊີຍ ແລະ ຍົກຍ້າຍຈັດສັນ

ຫຼັງຈາກທີ່ທຸກຝ່າຍເຫັນດີຕໍ່ການຊົດເຊີຍ ແລະ ການຍົກຍ້າຍຈັດສັນ ຢູ່ໃນສັນຍາ, ການດຳເນີນການຊົດເຊີຍ ແລະ ຍົກຍ້າຍຈັດສັນແມ່ນສາມາດເລີ່ມຕົ້ນໄດ້. ຂັ້ນຕອນນີ້ແມ່ນສອດຄ່ອງກັບຫຼັກການ ການເຄົາລົບສິດທິຂອງປະຊາຊົນໃນການນຳໃຊ້ທີ່ດິນ, ການປະມົງ, ປ່າໄມ້ ແລະ ແຫຼ່ງນ້ຳ ແລະ ຫຼັກການ ການປຶກສາຫາລື ແລະ ມີສ່ວນຮ່ວມຂອງປະຊາຊົນ ຊຶ່ງມີເນື້ອໃນດັ່ງລຸ່ມນີ້:

## 5.1. ການຊົດເຊີຍ

ຄຳແນະນຳຈາກສາກົນ VGGT ກຳນົດໄວ້ວ່າ ລັດຄວນປຶກສາກັບຊຸມຊົນກ່ອນ ແລະ ພາຍຫຼັງໃຫ້ການຊົດເຊີຍ ໂດຍການໃຫ້ທີ່ດິນ, ເງິນສົດ ແລະ ສິ່ງອື່ນໆ ແກ່ປະຊາຊົນ.



ມາດຕາ 73 ຂອງກົດໝາຍວ່າດ້ວຍ ການສົ່ງເສີມການລົງທຶນ (ເລກທີ 14/ສພຊ, 2016) ກຳນົດວ່າ ນັກລົງທຶນມີພັນທະໃນການຊົດເຊີຍໃຫ້ປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບ ຈາກການລົງທຶນ, ມາດຕາ 22 ຂອງກົດໝາຍວ່າດ້ວຍ ການຈັດສັນພູມລຳເນົາ ແລະ ອາຊີບ (ເລກທີ 45/ສພຊ, 2018) ກຳນົດໄວ້ວ່າ ນັກລົງທຶນຕ້ອງຈ່າຍຄ່າຊົດເຊີຍທີ່ດິນເຕັມຈຳນວນ ໃຫ້ແກ່ປະຊາຊົນຜູ້ທີ່ມີເອກະສານທີ່ດິນຖືກຕ້ອງຕາມກົດໝາຍ ຫຼື ຜູ້ທີ່ໄດ້ຮັບສິດນຳໃຊ້ທີ່ດິນຕາມປະເພນີ. ອີງຕາມມາດຕາ 130 ຂອງກົດໝາຍວ່າດ້ວຍ ທີ່ດິນ (ເລກທີ 70/ສພຊ, 2019), ສິດນຳໃຊ້ທີ່ດິນຕາມປະເພນີ ແມ່ນມອບໃຫ້ແກ່ຜູ້ທີ່ໄດ້ບຸກເບີກ, ພັດທະນາ ແລະ ນຳໃຊ້ທີ່ດິນຢ່າງເປັນປົກກະຕິຕໍ່ເນື່ອງຢ່າງໜ້ອຍ 20 ປີ ໂດຍໄດ້ຮັບການຢັ້ງຢືນຈາກອົງການປົກຄອງບ້ານ. ສ່ວນບຸກຄົນທີ່ນຳໃຊ້ທີ່ດິນໂດຍການຈັບຈອງ ແລະ ບໍ່ມີເອກະສານທີ່ດິນທີ່ຖືກຕ້ອງຕາມກົດໝາຍ ສາມາດມີສິດໄດ້ຮັບຄ່າຊົດເຊີຍຕໍ່ສິ່ງປຸກສ້າງ, ຕົ້ນໄມ້ ແລະ ພືດຕ່າງໆໃນທີ່ດິນຂອງຕົນ.



ນັກລົງທຶນຄວນດຳເນີນການສຳຫຼວດ ກ່ຽວກັບສິດນຳໃຊ້ທີ່ດິນຂອງຊຸມຊົນກ່ອນການລົງທຶນ ເພື່ອໃຫ້ເຂົ້າໃຈວ່າແຕ່ລະຄົວເຮືອນມີສິດນຳໃຊ້ທີ່ດິນໃນຮູບແບບໃດແດ່. ການປຶກສາຫາລືໂດຍກົງກັບບັນດາຄົວເຮືອນທີ່ໄດ້ຮັບຜົນກະທົບ ແລະ ອຳນາດການປົກຄອງບ້ານ ແມ່ນເປັນສິ່ງຈຳເປັນໃນການເຮັດການສຳຫຼວດນີ້. ມາດຕາ 5 ຂອງດຳລັດ ວ່າດ້ວຍ ການທົດແທນຄ່າເສຍຫາຍ (ເລກທີ 84/ນຍ, 2016) ລະບຸວ່າ ການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍໃຫ້ປະຕິບັດຕາມຫຼັກການພື້ນຖານດັ່ງນີ້: 1) ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຜູ້ໄດ້ຮັບຜົນກະທົບ, 2) ມີຄວາມສະເໝີພາບ, ຄວາມຖືກຕ້ອງໂປ່ງໃສ, ເປີດເຜີຍ ແລະ ຍຸຕິທຳ, ແລະ 3) ມີການປະສານສົມທົບ, ປຶກສາຫາລື ແລະ ເຂົ້າຮ່ວມລະຫວ່າງເຈົ້າຂອງໂຄງການລົງທຶນ, ຜູ້ໄດ້ຮັບຜົນກະທົບ, ການຈັດຕັ້ງພາກລັດ ແລະ ພາກສ່ວນອື່ນໆທີ່ກ່ຽວຂ້ອງ.



## 5.2 . ການຍົກຍ້າຍຈັດສັນ

ຄຳແນະນຳຈາກສາກົນ ເຊັ່ນ: VGGT ແລະ ຄູ່ມືຂອງອາຊຽນ ກ່ຽວກັບການລົງທຶນທີ່ມີຄວາມຮັບຜິດຊອບ ມີການຫ້າມຍົກຍ້າຍຖິ່ນຖານແບບບັງຄັບ ແລະ ຮຽກຮ້ອງໃຫ້ຫຼີກລ່ຽງການຍົກຍ້າຍຈັດສັນໃນການອອກແບບໂຄງການ. ໂຄງການທີ່ຈຳເປັນທີ່ຈະຍົກຍ້າຍບຸກຄົນເພື່ອດຳເນີນການລົງທຶນ, ກ່ອນອື່ນໝົດຕ້ອງສຶກສາຄວາມເປັນໄປໄດ້ໃນການຍົກຍ້າຍຈັດສັນ, ທົດແທນຄ່າເສຍຫາຍ (ດັ່ງທີ່ກ່າວມາຂ້າງເທິງ) ແລະ ດຳເນີນການກໍ່ສ້າງບັນດາພື້ນຖານໂຄງລ່າງ ເພື່ອຮອງຮັບການຍົກຍ້າຍຈັດສັນ. ການຈ່າຍຄ່າຊົດເຊີຍ ຕ້ອງດຳເນີນກ່ອນທີ່ການຍົກຍ້າຍຈະເລີ່ມຂຶ້ນ. ໂຄງການລົງທຶນຍັງຕ້ອງຮັບຜິດຊອບໃນການສ້າງແຜນຟື້ນຟູຊີວິດການເປັນຢູ່ ຊຶ່ງອາດປະກອບມີການສະໜອງສະບຽງອາຫານ, ອຸປະກອນ ແລະ ຜະລິດຕະພັນອື່ນໆ ໃຫ້ແກ່ປະຊາຊົນທີ່ໄດ້ຮັບຜົນກະທົບ ແລະ ສະໜັບສະໜູນການຝຶກອົບຮົມວິຊາຊີບ. ພາຍໃຕ້ກົດໝາຍຂອງ ສປປ ລາວ, ມີພຽງແຕ່ບຸກຄົນທີ່ຕົກລົງເຫັນດີຍອມຮັບການຍົກຍ້າຍຈັດສັນເທົ່ານັ້ນ ຈຶ່ງຈະສາມາດຍົກຍ້າຍຈັດສັນໄດ້ (ມາດຕາ 17, ກົດໝາຍວ່າດ້ວຍ ການຈັດສັນພູມລຳເນົາ ແລະ ອາຊີບ, ເລກທີ 45/ສພຊ, 2018). ສະນັ້ນ, ຈຶ່ງເປັນສິ່ງສຳຄັນຫຼາຍທີ່ໂຄງການລົງທຶນຕ້ອງໄດ້ປຶກສາຫາລືກັບປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບ ແລະ ຮັບຟັງຄຳຄິດເຫັນຂອງພວກເຂົາກ່ອນທີ່ຈະດຳເນີນການຍົກຍ້າຍ.






# 6. ການພັດທະນາສັງຄົມ

ການພັດທະນາສັງຄົມແມ່ນສອດຄ່ອງກັບຫຼັກການ ການປະກອບສ່ວນເຂົ້າໃນການພັດທະນາສັງຄົມ ແລະ ຫຼັກການ ການນຳໃຊ້ແຮງງານທ້ອງຖິ່ນ ແລະ ຄວາມປອດໄພຂອງແຮງງານ ຊຶ່ງມີເນື້ອໃນດັ່ງລຸ່ມນີ້:

## 6.1. ການແບ່ງປັນຜົນປະໂຫຍດກັບທ້ອງຖິ່ນ

ການແບ່ງປັນຜົນປະໂຫຍດກັບປະຊາຊົນ ແລະ ພາກລັດ ເປັນວິທີທີ່ສຳຄັນທີ່ຈະເຮັດໃຫ້ນັກລົງທຶນໄດ້ຮັບການຍອມຮັບຈາກທ້ອງຖິ່ນໃນການດຳເນີນໂຄງການ ແລະ ສາມາດປັບປຸງຊື່ສຽງໃຫ້ແກ່ນັກລົງທຶນ. ການແບ່ງປັນຜົນປະໂຫຍດບາງປະເພດແມ່ນໄດ້ມີການກຳນົດໃນກົດໝາຍຂອງ ສປປ ລາວ ປະກອບມີ:





1. ການຈ່າຍພາສີ ແລະ ຄ່າທຳນຽມອື່ນໆ ໃຫ້ກັບໜ່ວຍງານຂອງລັດຖະບານ;
2. ການຈ້າງພະນັກງານທ້ອງຖິ່ນ ແລະ ສ້າງແຜນການຝຶກອົບຮົມພະນັກງານ;
3. ການກໍ່ສ້າງພື້ນຖານໂຄງລ່າງໃນທ້ອງຖິ່ນ (ຂົວ, ຖະໜົນ, ໂຮງຮຽນ, ລະບົບນ້ຳປະປາ, ຫໍປະຊຸມບ້ານ);
4. ປະກອບສ່ວນທາງດ້ານງົບປະມານເຂົ້າໃນການພັດທະນາບ້ານເຊັ່ນ: ສ້າງກອງທຶນພັດທະນາບ້ານ.

ນອກຈາກນີ້, ບົດແນະນຳຂອງລັດຖະບານຈີນ ກ່ຽວກັບການລົງທຶນດ້ານກະສິກຳ ຍັງຮຽກຮ້ອງໃຫ້ນັກລົງທຶນບໍລິຈາກເງິນ ແລະ ຊື້ວັດສະດຸຈາກຜູ້ສະໜອງໃນທ້ອງຖິ່ນ ແລະ ຈັດຕັ້ງກິດຈະກຳແບບອາສາສະໝັກ. ໃນເວລາທີ່ນັກລົງທຶນເຮັດຄຳໝັ້ນສັນຍາສຳລັບການແບ່ງປັນຜົນປະໂຫຍດ, ຄວນມີການຂຽນຂໍ້ຕົກລົງທີ່ເປັນລາຍລັກອັກສອນຮ່ວມກັບຝ່າຍທີ່ໄດ້ຮັບຜົນປະໂຫຍດ ເພື່ອຫຼີກລ່ຽງການເຂົ້າໃຈຜິດ ແລະ ຢັ້ງຢືນການຕົກລົງເຫັນດີເຫັນພ້ອມ.

## 6.2. ການສົ່ງເສີມການຈ້າງງານໃນທ້ອງຖິ່ນ ແລະ ຝຶກອົບຮົມໃຫ້ແກ່ພະນັກງານ



ບົດແນະນໍາຂອງລັດຖະບານຈີນ ກ່ຽວກັບປ່າໄມ້, ກະສິກໍາ ແລະ ການປົກປັກຮັກສາສິ່ງແວດລ້ອມ ໃຫ້ບູລິມະສິດການຈ້າງພະນັກງານທ້ອງຖິ່ນ ໂດຍສະເພາະແມ່ນແມ່ຍິງ. ກົດລະບຽບດ້ານແຮງງານ ຍັງຮຽກຮ້ອງໃຫ້ສ້າງໂອກາດການຈ້າງງານໃຫ້ແກ່ແມ່ຍິງ ແລະ ຜູ້ທີ່ດ້ອຍໂອກາດອື່ນໆ ເຊັ່ນ: ຜູ້ສູງອາຍຸ, ຄົນພິການ ແລະ ຊົນເຜົ່າ. ອີງຕາມກົດໝາຍວ່າດ້ວຍ ແຮງງານ (ສະບັບເລກທີ 43/ສພຊ, 2013), ສັດສ່ວນຂອງແຮງງານຕ່າງປະເທດ ທີ່ອອກແຮງງານທາງດ້ານຮ່າງກາຍ ແມ່ນ 15% ຂອງຈໍານວນຜູ້ອອກແຮງງານລາວທັງໝົດ ແລະ 25% ສໍາລັບຜູ້ທີ່ອອກແຮງງານດ້ວຍມັນສະໝອງ (ການຄຸ້ມຄອງບໍລິຫານ).

ນັກລົງທຶນຍັງຕ້ອງໄດ້ພັດທະນາທັກສະຂອງແຮງງານ ແລະ ຖ່າຍທອດເຕັກໂນໂລຢີໃຫ້ກັບບຸກຄົນເຫຼົ່ານັ້ນ (ມາດຕາ 72 ຂອງກົດໝາຍວ່າດ້ວຍ ການສົ່ງເສີມການລົງທຶນ, ເລກທີ 14/ສພຊ, 2016). ການຝຶກອົບຮົມນີ້ ບໍ່ພຽງແຕ່ແນໃສ່ການຝຶກອົບຮົມທັກສະທີ່ຈໍາເປັນຕໍ່ວຽກເທົ່ານັ້ນ (ເຊັ່ນ: ເຕັກນິກການປະຕິບັດງານ ແລະ ຄວາມປອດໄພ), ແຕ່ຄວນຕ້ອງມີການຝຶກອົບຮົມທັກສະອື່ນໆ ທີ່ຜູ້ອອກແຮງງານອາດຈະຕ້ອງການ (ເຊັ່ນ: ທັກສະຄອມພິວເຕີ້ ຫຼື ພາສາ). ການສໍາຫຼວດແຮງງານເພື່ອເຂົ້າໃຈຄວາມຕ້ອງການຂອງພວກເຂົາ ແລະ ສ້າງແຜນການຝຶກອົບຮົມ ໂດຍອີງໃສ່ຄວາມຕ້ອງການເຫຼົ່ານັ້ນຈະສາມາດຊ່ວຍໃຫ້ນັກລົງທຶນ ສາມາດນໍາໃຊ້ຊັບພະຍາກອນມະນຸດໃນທ້ອງຖິ່ນໃຫ້ໄດ້ປະໂຫຍດຫຼາຍທີ່ສຸດ, ແລະ ເປັນການສ້າງເຈດຕະນາທີ່ດີ.



# 7. ການຫຼຸດຜ່ອນຜົນກະທົບດ້ານສິ່ງແວດລ້ອມ ແລະ ທຳມະຊາດ

ການຫຼຸດຜ່ອນຜົນກະທົບດ້ານສິ່ງແວດລ້ອມ ແມ່ນສອດຄ່ອງກັບຫຼັກການ ການພັດທະນາສີຂຽວ ແລະ ການປົກປັກຮັກສາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຊຶ່ງມີເນື້ອຫາດັ່ງລຸ່ມນີ້:

## 7.1. ການປະເມີນ ແລະ ປົກປັກຮັກສາຊີວະນາໆພັນ

ໃນສ່ວນໜຶ່ງຂອງບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມໄດ້ກ່າວວ່າ ນັກລົງທຶນຕ້ອງເກັບກຳຂໍ້ມູນທຽບຖານກ່ຽວກັບຊີວະນາໆພັນ ແລະ ຊັບພະຍາກອນທຳມະຊາດໃນພື້ນທີ່ລົງທຶນຂອງຕົນ. ອີງຕາມມາດຕາ 52 ຂອງກົດໝາຍວ່າດ້ວຍ ສັດປ່າ ແລະ ສັດນ້ຳ (ເລກທີ 07/ສພຊ, 2007 ຊຶ່ງປະຈຸບັນກຳລັງປັບປຸງ), ຫ້າມບໍ່ໃຫ້ໜ່ວຍງານໃດບຸກລຸກ ແລະ ທຳລາຍເຂດອະນຸລັກສັດປ່າ, ເຂດອະນຸລັກອ່າງເກັບນ້ຳ ບ່ອນຢູ່ອາໃສຂອງເຂດລ້ຽງສັດ, ສັດນ້ຳ ແລະ ສັດປ່າ ໂດຍການບຸກເບີກພື້ນທີ່, ຕັດຕົ້ນໄມ້, ການໃຊ້ສານເຄມີ, ຢາຂ້າຫຍ້າ ໃນປະລິມານທີ່ຫຼາຍເກີນໄປ ແລະ ກິດຈະກຳອື່ນໆທີ່ມີຜົນກະທົບ.



ເພື່ອຫຼີກລ່ຽງຜົນກະທົບທາງລົບຕໍ່ສັດປ່າ, ຄຳແນະນຳຂອງລັດຖະບານຈີນ ກ່ຽວກັບການລົງທຶນດ້ານກະສິກຳ ແລະ ປ່າໄມ້ ຮຽກຮ້ອງໃຫ້ບັນດານັກລົງທຶນສ້າງແຜນວາດຂອງພືດ ແລະ ສັດປ່າທີ່ຫາຍາກ, ໃກ້ຈະສູນພັນ ໃຫ້ໄດ້ຮັບການຄຸ້ມຄອງຕາມກົດໝາຍ ແລະ ມີຄວາມສຳຄັນທາງວັດທະນະທຳ ໃນພື້ນທີ່ການລົງທຶນ, ແລ້ວສ້າງແຜນເພື່ອຫຼີກລ່ຽງຜົນກະທົບທາງລົບຕໍ່ສາຍພັນເຫຼົ່ານັ້ນ ແລະ ທີ່ຢູ່ອາໃສຂອງພວກມັນ. ແຜນດັ່ງກ່າວອາດປະກອບມີ ການສ້າງເຂດອະນຸລັກໃນທ້ອງຖິ່ນ ແລະ ສະໜອງການຝຶກອົບຮົມພະນັກງານໃນການສຳຫຼວດ ແລະ ກຳນົດຊະນິດພັນພືດ ແລະ ສັດເຫຼົ່ານັ້ນ.

ນັກລົງທຶນຢູ່ ສປປ ລາວ ຍັງຕ້ອງໄດ້ປະກອບສ່ວນທາງດ້ານການເງິນເຂົ້າໃນການປົກປັກຮັກສາຊັບພະຍາກອນທຳມະຊາດເຊັ່ນ: ການຈ່າຍຄ່າທຳນຽມຕ່າງໆໃນການຟື້ນຟູຊັບພະຍາກອນສິ່ງແວດລ້ອມ, ປ່າໄມ້ ແລະ ຊີວະນາໆພັນ. ຄ່າທຳນຽມບາງສ່ວນແມ່ນມອບໃຫ້ກອງທຶນປົກປັກຮັກສາສິ່ງແວດລ້ອມຂອງ ສປປ ລາວ ຊຶ່ງສະໜັບສະໜູນການເຮັດການຄົ້ນຄວ້າດ້ານສິ່ງແວດລ້ອມ, ການຄຸ້ມຄອງດ້ານສິ່ງແວດລ້ອມ/ ຊັບພະຍາກອນທຳມະຊາດ, ການປູກຈິດສຳນຶກ ແລະ ກິດຈະກຳອື່ນໆ ແລະ ກອງທຶນປົກປັກຮັກສາປ່າໄມ້ຂອງ ສປປ ລາວ ຊຶ່ງສະໜັບສະໜູນກິດຈະກຳດ້ານປ່າໄມ້ເຊັ່ນ: ນະໂຍບາຍຂະແໜງການ, ການປັບປຸງລະບຽບ, ການໂຄສະນາ ແລະ ເຜີຍແຜ່, ການຝຶກອົບຮົມ, ການຄົ້ນຄວ້າວິທະຍາສາດ, ການປົກປັກຮັກສາ ແລະ ພັດທະນາປ່າໄມ້, ການຟື້ນຟູປ່າໄມ້ ແລະ ການຟື້ນຟູປ່າໄມ້ເພື່ອຈຸດປະສົງທາງການຄ້າ ແລະ ສິ່ງແວດລ້ອມ ແລະ ກິດຈະກຳອື່ນໆ (ດຳລັດ ວ່າດ້ວຍກອງທຶນປົກປັກຮັກສາປ່າໄມ້ ທີ່ກຳລັງຈະອອກມາ).

ໃນມາດຕາທີ 45 ຂອງດຳລັດວ່າດ້ວຍ ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ (ເລກທີ 21/ລບ, 2019) ລະບຸໄວ້ວ່າ ໂຄງການທີ່ສ້າງຄວາມເສຍຫາຍທີ່ຮ້າຍແຮງຕໍ່ຊີວະນາໆພັນ, ລະບົບນິເວດວິທະຍາ, ພືດ ແລະ ສັດ ທີ່ໃກ້ຈະສູນພັນ ຈະບໍ່ໄດ້ຮັບໃບຢັ້ງຢືນສິ່ງແວດລ້ອມ (ECC) ທີ່ອະນຸຍາດໃຫ້ໂຄງການດັ່ງກ່າວດຳເນີນການຕໍ່ໄປໄດ້. ດັ່ງນັ້ນ, ຈຶ່ງຈຳເປັນຫຼາຍທີ່ນັກລົງທຶນຕ້ອງໃຊ້ເວລາໃນການດຳເນີນມາດຕະການການຫຼຸດຜ່ອນຜົນກະທົບ ແລະ ຄ່າຊົດເຊີຍ ຄວາມຫຼາກຫຼາຍທາງດ້ານຊີວະນາໆພັນ ໃນພື້ນທີ່ການລົງທຶນຂອງຕົນ. ໜຶ່ງໃນວິທີການການຈັດຕັ້ງປະຕິບັດແມ່ນລະດັບການຫຼຸດຜ່ອນຜົນກະທົບ ຊຶ່ງຈະແນະນຳໃຫ້ນັກລົງທຶນປະຕິບັດ ເລີ່ມຕົ້ນໂດຍ: 1). ຫຼີກລ່ຽງຜົນກະທົບເພື່ອບໍ່ໃຫ້ເກີດຂຶ້ນ (ການພິຈາລະນາຈາກການອອກແບບໂຄງການ ຫຼື ສະຖານທີ່ທາງເລືອກອື່ນ), 2). ຫຼຸດຜ່ອນຜົນກະທົບຫາກບໍ່ສາມາດຫຼີກລ່ຽງໄດ້, 3). ຟື້ນຟູພື້ນທີ່ທີ່ໄດ້ຮັບຜົນກະທົບໃຫ້ກັບສູ່ສະພາບເດີມ ແລະ ທາງເລືອກສຸດທ້າຍແມ່ນ, 4). ຊົດເຊີຍຖ້າມີຜົນກະທົບດ້ານລົບທີ່ສຳຄັນຍັງເຫຼືອຢູ່.




ບົດແນະນຳຂອງ ສປ ຈີນ ກ່ຽວກັບປ່າໄມ້ ໄດ້ຮຽກຮ້ອງໃຫ້ນັກລົງທຶນເຄົາລົບ ແລະ ປົກປັກຮັກສາປ່າໄມ້ທີ່ມີມູນຄ່າສູງ, ຊຶ່ງລວມເຖິງເຂດພື້ນທີ່ປ່າສະຫງວນ. ເພື່ອສອດຄ່ອງກັບສະພາບການຂ້າງເທິງ, ໂຄງການລົງທຶນຄວນຫຼີກລ່ຽງການລົງທຶນໃນເຂດປ່າສະຫງວນ. ຫາກບໍ່ມີທາງເລືອກອື່ນ, ໂຄງການລົງທຶນຄວນປະສານກັບເຈົ້າໜ້າທີ່ປ່າສະຫງວນ ເພື່ອໃຫ້ແນ່ໃຈວ່າແຜນການລົງທຶນຂອງພວກເຂົາສອດຄ່ອງກັບແຜນຄຸ້ມຄອງປ່າສະຫງວນ, ແຜນການນຳໃຊ້ທີ່ດິນ ແລະ ການຈັດສັນເຂດນຳໃຊ້ເຂດປ່າສະຫງວນ ເພື່ອຫຼຸດຜ່ອນຜົນກະທົບຕໍ່ຊີວະນາໆພັນ. ຜົນກະທົບໃດໆທີ່ເກີດຂຶ້ນຈາກການລົງທຶນໃນເຂດປ່າສະຫງວນຕ້ອງໄດ້ຮັບການຊົດເຊີຍຕາມລະບຽບຂອງ ສປປ ລາວ ແລະ ເປັນໄປຕາມລຳດັບຊັ້ນໃນການຫຼຸດຜ່ອນຜົນກະທົບທີ່ໄດ້ອະທິບາຍໃນຂ້າງເທິງ.

## 7.2. ການຫຼຸດຜ່ອນຜົນກະທົບຈາກການນຳໃຊ້ສານເຄມີຂອງຢາຂ້າແມງໄມ້ ແລະ ຢາຂ້າຫຍ້າ

ບົດແນະນຳຂອງລັດຖະບານຈີນ ກ່ຽວກັບການປູກໄມ້ ແລະ ກະສິກຳ ຮຽກຮ້ອງໃຫ້ໂຄງການລົງທຶນ ຫຼຸດຜ່ອນ ການນຳໃຊ້ປຸ໋ຍ ແລະ ຢາປາບສັດຕູພືດເຄມີ ພ້ອມທັງສົ່ງເສີມໃຫ້ນຳໃຊ້ຕົວເລືອກແບບຊີວະພາບທົດແທນ. ດຳລັດວ່າດ້ວຍ ການຄຸ້ມຄອງຢາປາບສັດຕູພືດ (ເລກທີ 258/ລບ, 2017) ກຳນົດໄວ້ວ່າ ຖ້າໂຄງການລົງທຶນ ຈຳເປັນຕ້ອງໃຊ້ຢາປາບສັດຕູພືດ, ໂຄງການເຫຼົ່ານັ້ນຕ້ອງຂຶ້ນທະບຽນກັບ ກົມປູກຝັງ (ມາດຕາ 15 ແລະ 34) ແລະ ຕິດສະຫຼາກໃສ່ຢາປາບສັດຕູພືດນັ້ນ ເປັນພາສາລາວ ແລະ ພາສາຕ່າງປະເທດ (ມາດຕາ 26). ໂຄງການລົງທຶນທີ່ໃຊ້ຢາປາບສັດຕູພືດຍັງຈຳເປັນຕ້ອງສະໜອງອຸປະກອນ ແລະ ການຝຶກອົບຮົມທີ່ເໝາະສົມໃຫ້ແກ່ທຸກໆຄົນທີ່ນຳໃຊ້ຢາປາບສັດຕູພືດ ແລະ ຕິດຕັ້ງລະບົບເຕືອນໄພກ່ອນ ແລະ ຫຼັງການນຳໃຊ້ຢາປາບສັດຕູພືດດັ່ງກ່າວ. ມາດຕາ 48 ຂອງດຳລັດດັ່ງກ່າວ ຫ້າມບໍ່ໃຫ້ມີການລ້າງ ຫຼື ຖິ້ມສິ່ງເສດເຫຼືອຂອງຢາປາບສັດຕູພືດໃນແຫຼ່ງນ້ຳ ແລະ ຊຸມຊົນໃກ້ຄຽງ. ເຈົ້າໜ້າທີ່ຂອງລັດຖະບານຈະຕິດຕາມກວດກາການນຳໃຊ້ຢາປາບສັດຕູພືດຂອງໂຄງການລົງທຶນຕ່າງໆຢ່າງເປັນປະຈຳ ແລະ ສາມາດກວດກາສະຖານທີ່ຕ່າງໆໂດຍບໍ່ຈຳເປັນຕ້ອງມີການແຈ້ງເຕືອນລ່ວງ ໜ້າ, ຜູ້ທີ່ລະເມີດກົດລະບຽບຂອງ ສປປ ລາວ ແມ່ນຈະຖືກປັບໃໝ, ຍຶດຢາປາບສັດຕູພືດ ຫຼື ໃຫ້ຢຸດຕິການດຳເນີນທຸລະກິດ. ນອກຈາກນິຕິກຳທີ່ກ່າວມາຂ້າງເທິງນີ້, ທຸກໂຄງການລົງທຶນກ່ຽວການປູກພືດຄວນຈະປະຕິບັດຕາມມາດຕະຖານກະສິກຳສະອາດ ເຊັ່ນ: GAP, OA ຂອງ ສປປ ລາວ.



## 7.3. ປະຕິບັດຕາມມາດຕະຖານຂອງການຄວບຄຸມມົນລະພິດ ແລະ ກຳຈັດສິ່ງເສດເຫຼືອ

ນັກລົງທຶນຈຳເປັນຕ້ອງປະຕິບັດຕາມມາດຕະຖານຄຸນນະພາບສິ່ງແວດລ້ອມແຫ່ງຊາດ ແລະ ມາດຕະຖານຄວບຄຸມມົນລະພິດຂອງ ສປປ ລາວ ຊຶ່ງກຳນົດໃນ ມາດຕາ 35 ຂອງກົດໝາຍວ່າດ້ວຍ ການປົກປັກຮັກສາສິ່ງແວດລ້ອມ (ເລກທີ 29/ສພຊ, 2012) ການກຳຈັດສິ່ງເສດເຫຼືອເຊັ່ນ: ສານເຄມີຂອງຢາປາບສັດຕູພືດ ຕ້ອງສອດຄ່ອງກັບວິທີການທີ່ລະບຸໄວ້ໃນມາດຕາ 48 ຂອງ ດຳລັດວ່າດ້ວຍ ການຄຸ້ມຄອງຢາປາບສັດຕູພືດ (ເລກທີ 258/ລບ, 2017) ຄຳແນະນຳຂອງ ລັດຖະບານ ຈີນ ກ່ຽວກັບກະສິກຳ ແລະ ການປົກປັກຮັກສາສິ່ງແວດລ້ອມ ຮຽກຮ້ອງໃຫ້ນັກລົງທຶນສ້າງ ແລະ ດຳເນີນສິ່ງອຳນວຍຄວາມສະດວກໃນການປ້ອງກັນ ແລະ ຄວບຄຸມມົນລະພິດ. ບັນດາໂຄງການການລົງທຶນຄວນມີການຕິດຕາມ ແລະ ບັນທຶກການປ່ອຍມົນລະພິດຢ່າງຕໍ່ເນື່ອງ. ນອກຈາກນີ້ ຄູ່ມືແນະນຳການປົກປັກຮັກສາສິ່ງແວດລ້ອມຂອງ ສປ ຈີນ ໄດ້ຮຽກຮ້ອງໃຫ້ໂຄງການລົງທຶນ ດຳເນີນການຜະລິດທີ່ສະອາດ ໂດຍການສົ່ງເສີມການນຳມາຜະລິດໃຊ້ຄືນໃໝ່ ແລະ ນຳໃຊ້ຊັບພະຍາກອນຢ່າງມີປະສິດທິຜົນ ເພື່ອຫຼຸດຜ່ອນມົນລະພິດ ແລະ ສິ່ງເສດເຫຼືອ.



## 7.4. ການຟື້ນຟູສິ່ງແວດລ້ອມຫຼັງການລົງທຶນ

ກົດໝາຍວ່າດ້ວຍ ກະສິກຳຂອງ ສປປ ລາວ (ເລກທີ 01/ສພຊ, 1998) ໄດ້ກຳນົດໃຫ້ນັກລົງທຶນທາງດ້ານກະສິກຳໃຫ້ມີພັນທະໃນການປົກປັກຮັກສາສິ່ງແວດລ້ອມ ຮຽກຮ້ອງໃຫ້ຊອກຫາວິທີການ ແລະ ມາດຕະການອັນເໝາະສົມເພື່ອປົກປັກຮັກສາດິນ, ນ້ຳ, ປ່າໄມ້, ອາກາດ ແລະ ອື່ນໆ (ມາດຕາ 6 ແລະ 68). ດຳລັດວ່າດ້ວຍ ການໃຫ້ເຊົ່າ ແລະ ສຳປະທານທີ່ດິນຂອງລັດໃນ ສປປ ລາວ (ເລກທີ 135/ນຍ, 2009) ມີຂໍ້ກຳນົດໃຫ້ນັກລົງທຶນທີ່ສ້າງຜົນກະທົບຕໍ່ສິ່ງແວດລ້ອມ ຕ້ອງໄດ້ຟື້ນຟູເຂດທີ່ໄດ້ຮັບຜົນກະທົບ ຫຼື ທົດແທນຄ່າເສຍຫາຍ ພາຍຫຼັງສິ້ນສຸດການລົງທຶນ. ທີ່ດິນຫຼັງຈາກນຳໃຊ້ຈະຕ້ອງເຮັດໃຫ້ກັບຄືນສູ່ສະພາບເດີມ ກ່ອນການສຳປະທານ. ອີງຕາມກົດໝາຍວ່າດ້ວຍ ການປົກປັກຮັກສາສິ່ງແວດລ້ອມ (ເລກທີ 29/ສພຊ, 2012), ນັກລົງທຶນຕ້ອງໄດ້ວາງເງິນຄ້ຳປະກັນສຳລັບການຟື້ນຟູຫຼັງການລົງທຶນ ຖ້າຫາກນັກລົງທຶນໄດ້ຟື້ນຟູພື້ນທີ່ການລົງທຶນຂອງພວກເຂົາແລ້ວ ເງິນຄ້ຳປະກັນຈຶ່ງຈະຖືກສົ່ງຄືນ (ມາດຕາ 58). ນອກຈາກນີ້, ນັກລົງທຶນຍັງຕ້ອງໄດ້ເສຍຄ່າທຳນຽມຫຼາຍຢ່າງ ເພື່ອສະໜັບສະໜູນວຽກງານປ່າໄມ້ ແລະ ຊີວະນາໆພັນ, ເປັນຕົ້ນແມ່ນ ຄ່າບູລະນະປ່າໄມ້, ຄ່າທົດແທນຊີວະນາໆພັນ ແລະ ຄ່າປູກໄມ້ທົດແທນ ໃນກໍລະນີທີ່ມີການຫັນປ່ຽນທີ່ດິນປ່າໄມ້ (ມາດຕາ 82 ແລະ 87 ຂອງກົດໝາຍວ່າດ້ວຍ ປ່າໄມ້, ເລກທີ 64/ສພຊ, 2019). ນັກລົງທຶນຍັງຕ້ອງແຈ້ງໃຫ້ປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບຮັບຮູ້ເຖິງຄວາມພະຍາຍາມໃນການບູລະນະຟື້ນຟູສິ່ງແວດລ້ອມກ່ອນທີ່ຈະປິດໂຄງການ ເພື່ອໃຫ້ໄດ້ຮັບຄຳຄິດເຫັນ ແລະ ຂໍ້ສະເໜີແນະກ່ຽວກັບບັນຫາພົ້ນເດັ່ນທີ່ຍັງຕ້ອງໄດ້ຮັບການແກ້ໄຂ (ມາດຕາ 39 ຂອງດຳລັດ ວ່າດ້ວຍ ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ, ເລກທີ 21/ລບ, 2019). ນີ້ແມ່ນເງື່ອນໄຂເບື້ອງຕົ້ນສຳລັບລັດຖະບານລາວໃນການທີ່ຈະອະນຸມັດໃຫ້ການສິ້ນສຸດໂຄງການ.



# 8. ການຮັບປະກັນຄຸນນະພາບ ແລະ ຄວາມປອດໄພ ຂອງຜະລິດຕະພັນກະສິກຳ ແລະ ປ່າໄມ້

ການຮັບປະກັນຄຸນນະພາບ ແລະ ຄວາມປອດໄພຂອງຜະລິດຕະພັນກະສິກຳ ແລະ ປ່າໄມ້ ແມ່ນສອດຄ່ອງກັບຫຼັກການ ການຄວບຄຸມຄຸນນະພາບ ແລະ ຄວາມປອດໄພຂອງສິນຄ້າ ຊຶ່ງມີລາຍລະອຽດດັ່ງລຸ່ມນີ້:

## 8.1. ການຮັບປະກັນຄຸນນະພາບ ແລະ ຄວາມປອດໄພຂອງຜະລິດຕະພັນກະສິກຳ

ຜະລິດຕະພັນກະສິກຳທີ່ຖືກສົ່ງອອກທັງໝົດ ຄວນສອດຄ່ອງກັບມາດຕະຖານດ້ານສຸຂະອະນາໄມຂອງພືດທີ່ໄດ້ຕົກລົງກັນ ລະຫວ່າງ ສປປ ລາວ ແລະ ປະເທດຜູ້ນຳເຂົ້າ. ມາດຕະຖານເຫຼົ່ານີ້ແມ່ນມາດຕະຖານສະເພາະສຳລັບພືດແຕ່ລະຊະນິດ ແລະ ໄດ້ກຳນົດເພດານສຳລັບສານເຄມີຕົກຄ້າງ ແລະ ສານປົນເປື້ອນອື່ນໆ ຂອງຢາປາບສັດຕູພືດ. ມາດຕະຖານ ດ້ານຄວາມປອດໄພ ແລະ ຂໍ້ຕົກລົງດ້ານການຄ້າທີ່ ສປ ຈີນ ໄດ້ສ້າງກັບ ສປປ ລາວ ບາງສ່ວນສາມາດພົບໄດ້ໃນເວັບໄຊທ໌ຂໍ້ມູນຂ່າວສານທາງການຄ້າຂອງລາວ, ກະຊວງອຸດສາຫະກຳ ແລະ ການຄ້າ ດັ່ງຕໍ່ໄປນີ້:
https://www.laotradeportal.gov.la/index.php?r=site/display&id=2105).



ກະຊວງກະສິກຳ ແລະ ປ່າໄມ້ ຂອງ ສປປ ລາວ ໄດ້ອອກຂໍ້ຕົກລົງຂອງລັດຖະມົນຕີ ວ່າດ້ວຍມາດຕະຖານກະສິກຳທີ່ດີ ກ່ຽວກັບຄວາມປອດໄພຂອງຜົນຜະລິດ (ເລກທີ 0115/ກປ, 2011) ເພື່ອວາງຂໍ້ກຳນົດຕ່າງໆທີ່ຜູ້ຜະລິດ ແລະ ຜູ້ປະກອບການຕ້ອງປະຕິບັດເພື່ອໃຫ້ໄດ້ຜົນຜະລິດພືດຜັກ ແລະ ໝາກໄມ້ສົດທີ່ມີຄວາມປອດໄພຕໍ່ຜູ້ບໍລິໂພກ ອີງໃສ່ມາດຕະຖານກະສິກຳທີ່ດີຂອງອາຊຽນ ແລະ ຂໍ້ຕົກລົງຂອງລັດຖະມົນຕີ ວ່າດ້ວຍ ມາດຕະຖານກະສິກຳທີ່ດີ ກ່ຽວກັບຄຸນນະພາບຂອງຜົນຜະລິດ (ເລກທີ 0539/ກປ, 2011) ເພື່ອວາງຂໍ້ກຳນົດທີ່ຜູ້ຜະລິດ ແລະ ຜູ້ປະກອບການຕ້ອງປະຕິບັດ ເພື່ອໃຫ້ໄດ້ຜົນຜະລິດທີ່ມີຄຸນນະພາບ ແລະ ເປັນທີ່ຕ້ອງການຂອງຕະຫຼາດ. ຂໍ້ຕົກລົງກ່ຽວກັບຄຸນນະພາບ ແລະ ຄວາມປອດໄພດ້ານກະສິກຳທັງສອງອັນນີ້ ໄດ້ກຳນົດມາດຕະຖານໃນການໃຊ້ຢາປາບສັດຕູພືດ, ການນຳໃຊ້ ແລະ ເກັບມ້ຽນສານເຄມີຢ່າງເໝາະສົມ ການຕິດຕາມການນຳໃຊ້ຢາປາບສັດຕູພືດ, ປຸ໋ຍ ແລະ ສານເຄມີ ຮັບປະກັນການເກັບຮັກສາ ແລະ ການຂົນສົ່ງຜົນຜະລິດທີ່ເກັບກ່ຽວໄດ້ຢ່າງປອດໄພ ແລະ ການນຳໃຊ້ນ້ຳທີ່ເໝາະສົມໃນການຜະລິດກະສິກຳ. ນັກລົງທຶນສາມາດຂໍການຮັບຮອງຜະລິດຕະພັນຂອງຕົນເອງຕາມມາດຕະຖານຂອງ ສປປ ລາວ ເຊັ່ນ: GAP, OA ໂດຍຜ່ານກົມປູກຝັງ, ກະຊວງກະສິກຳ ແລະ ປ່າໄມ້.

ກະຊວງກະສິກຳ ແລະ ປ່າໄມ້
ກະສິກຳທີ່ດີລາວ
LAO GAP
ກົມປູກຝັງ











## 8.2. ການຂຸດຄົ້ນໄມ້ ແລະ ເຄື່ອງປ່າຂອງດົງ ແບບຍືນຍົງ ແລະ ຖືກຕ້ອງ

ບົດແນະນຳຂອງລັດຖະບານຈີນ ກ່ຽວກັບການປູກໄມ້ ຮຽກຮ້ອງໃຫ້ນັກລົງທຶນຄວນມີການສ້າງແຜນການຂຸດຄົ້ນໄມ້ປະຈຳປີ ທີ່ຕ້ອງໄດ້ຮັບການອະນຸມັດຈາກພະແນກການທີ່ກ່ຽວຂ້ອງຂອງລັດຖະບານທ້ອງຖິ່ນ, ຈາກນັ້ນແມ່ນສ້າງລະບົບປະຊາສຳພັນ ແລະ ການປຶກສາຫາລືກ່ອນການຂຸດຄົ້ນຢູ່ໃນພື້ນທີ່ດັ່ງກ່າວ. ບົດແນະນຳສປ ຈີນກ່ຽວກັບ ການຄຸ້ມຄອງປ່າປູກ ແລະ ປ່າໄມ້ ຮຽກຮ້ອງໃຫ້ນັກລົງທຶນຈຳກັດໂຄຕ້າການຂຸດຄົ້ນໃຫ້ຕ່ຳກວ່າອັດຕາການຂະຫຍາຍຕົວໃນແຕ່ລະປີ, ຫຼຸດຜ່ອນຜົນກະທົບຈາກການຂຸດຄົ້ນເທິງໜ້າດິນ, ຊີວະນາໆພັນ, ພື້ນທີ່ທີ່ຍັງອ່ອນແອທາງດ້ານນິເວດວິທະຍາ, ສັດ ແລະ ທີ່ຢູ່ອາໃສຂອງພືດ; ເຮັດໃຫ້ສະພາບແວດລ້ອມຂອງປ່າໄມ້ມີຄວາມຫຼາກຫຼາຍ ໂດຍມີແຜນຍຸດທະສາດໃນການຂຸດຄົ້ນ ແລະ ຫຼີກລ່ຽງການຕັດໄມ້ເກີນກຳນົດໃນໄລຍະເວລາອັນສັ້ນ. ມາດຕາ 29 ຂອງກົດໝາຍວ່າດ້ວຍ ປ່າໄມ້ (ເລກທີ 64/ສພຊ, 2019) ໄດ້ກຳນົດໃຫ້ແຕ່ງຕັ້ງຄະນະຮັບຜິດຊອບ, ຄຸ້ມຄອງ, ຕິດຕາມ ແລະ ກວດການການຂຸດຄົ້ນໄມ້ໃຫ້ຖືກຕ້ອງຕາມລະບຽບ. ນອກຈາກນີ້ ຍັງໄດ້ຮຽກຮ້ອງໃຫ້ມີການນຳໃຊ້ວິສາຫະກິດທີ່ມີຄວາມຊຳນານ, ປະສົບການ ແລະ ມາດຕະຖານໃນການຂຸດຄົ້ນໄມ້ ຢ່າງຖືກຕ້ອງຕາມເຕັກນິກ. ນັກລົງທຶນທີ່ມີແຜນການຕັດໄມ້ຕ້ອງອອກແບບການຂຸດຄົ້ນໄມ້ຂອງຕົນໃຫ້ສອດຄ່ອງກັບແຜນການສຳຫຼວດ ແລະ ຂຸດຄົ້ນປ່າໄມ້ຂອງລັດຖະບານ ສປປ ລາວ. ມາດຕາ 31 ໃນກົດໝາຍດຽວກັນ ໄດ້ລະບຸໄວ້ວ່າ ການຂຸດຄົ້ນເຄື່ອງປ່າຂອງດົງແຕ່ລະຊະນິດຕ້ອງປະຕິບັດຕາມແຜນການທີ່ໄດ້ອະນຸມັດໃນເຂດປ່າຜະລິດ, ເຂດຫັນປ່ຽນທີ່ດິນປ່າໄມ້, ເຂດຄຸ້ມຄອງການນຳໃຊ້ທີ່ດິນປ່າປ້ອງກັນ, ປ່າສະຫງວນ, ເຂດເນື້ອທີ່ດິນຂອງບຸກຄົນ ທີ່ລັດໄດ້ມອບສິດຢ່າງຖືກຕ້ອງຕາມກົດໝາຍ.



ໃນປະຈຸບັນ ສປປ ລາວ ພວມດຳເນີນການເຈລະຈາກັບສະຫະພາບເອີຣົບ ເພື່ອພັດທະນາການຮັບປະກັນລະບົບໃນການຄ້າຜະລິດຕະພັນໄມ້ໃຫ້ມີຄວາມຍືນຍົງ ແລະ ສອດຄ່ອງລະບຽບກົດໝາຍ, ຫຼັງຈາກສຳເລັດການເຈລະຈາແລ້ວ ຈະໄດ້ມີການພັດທະນາລະບົບການກວດກາ ແລະ ຢັ້ງຢືນຄວາມຖືກຕ້ອງຂອງໄມ້ຕັ້ງແຕ່ຢູ່ໃນປ່າຈົນເປັນຜະລິດຕະພັນສົ່ງອອກ.

# 9. ການຕິດຕາມ ແລະ ການກວດກາ

ການຕິດຕາມ ແລະ ກວດກາ ຂອງໂຄງການລົງທຶນທີ່ມີຄວາມຮັບຜິດຊອບ ແມ່ນສອດຄ່ອງກັບຫຼັກການ ການເປີດເຜີຍຂໍ້ມູນ ແລະ ຄວາມໂປ່ງໃສ ແລະ ຫຼັກການ ການພັດທະນາສີຂຽວ ແລະ ການປົກປັກຮັກສາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຊຶ່ງມີຄຳແນະນຳດັ່ງຕໍ່ໄປນີ້:

## 9.1. ການຕິດຕາມການລົງທຶນໃນແຕ່ລະໄລຍະ

ກົດໝາຍວ່າດ້ວຍ ການສົ່ງເສີມການລົງທຶນ (ເລກທີ 14/ສພຊ, 2016) ກຳນົດໄວ້ວ່າທຸກການເຄື່ອນໄຫວຂອງບັນດາກິດຈະກຳຂອງການລົງທຶນ ຈະຕ້ອງໄດ້ຮັບການຄຸ້ມຄອງ, ຕິດຕາມກວດກາ ຈາກອົງການກວດກາວຽກງານສົ່ງເສີມການລົງທຶນ (ມາດຕາ 104) ຊຶ່ງເນື້ອໃນຂອງການຕິດຕາມກວດກາຈະກວມເອົາຂະໜາດຂອງສັງຄົມ, ສິ່ງແວດລ້ອມ, ເສດຖະກິດ ແລະ ກົດໝາຍຄື:

- ກວດກາ ການປະຕິບັດສັນຍາການລົງທຶນ;
- ກວດກາ ການປະຕິບັດຂັ້ນຕອນຂອງການລົງທຶນ;
- ກວດກາ ການປົກປັກຮັກສາສິ່ງແວດລ້ອມ ຕາມແຜນຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ ລວມທັງຜົນກະທົບຕໍ່ຊັບສິນຂອງລັດ, ປະຊາຊົນ, ນັກລົງທຶນ ແລະ ຜູ້ພັດທະນາ;
- ການປະຕິບັດມາດຕະການຄວາມປອດໄພຂອງແຮງງານ;
- ການປະຕິບັດກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງອື່ນໆ.

ກົດໝາຍວ່າດ້ວຍ ການສົ່ງເສີມການລົງທຶນ ຍັງລະບຸໃຫ້ນັກລົງທຶນຕ້ອງປະກອບສ່ວນທາງດ້ານງົບປະມານ ເຂົ້າໃນການຕິດຕາມ ແລະ ກວດກາໂຄງການລົງທຶນຂອງພວກເຂົາ ພ້ອມນັ້ນ, ນັກລົງທຶນຕ້ອງລາຍງານກ່ຽວກັບການດຳເນີນທຸລະກິດຂອງຕົນ ຕໍ່ອຳນາດການປົກຄອງທຸກໆໄຕມາດ (ມາດຕາ 72). ຄຳແນະນຳ ຂອງລັດຖະບານຈີນກ່ຽວກັບ ການປູກໄມ້ ແນະນຳໃຫ້ມີການຕິດຕາມກວດກາ ດ້ານຕ່າງໆດັ່ງນີ້: ການປູກຄືນປ່າໄມ້/ສຸຂະພາບປ່າໄມ້, ສັດ/ພືດ ແລະ ແນວໂນ້ມການປ່ຽນແປງ, ຜົນກະທົບຂອງການຕັດໄມ້ຕໍ່ສັງຄົມ ແລະ ສິ່ງແວດລ້ອມ, ຕົ້ນທຶນ ແລະ ຜົນປະໂຫຍດຂອງການປູກໄມ້. ໂຄງການລົງທຶນຄວນເຮັດວຽກຮ່ວມກັບຊຸມຊົນ ໃນການຕິດຕາມກວດກາ ເພື່ອສ້າງຄວາມເຂົ້າໃຈກ່ຽວກັບຜົນກະທົບທາງບວກ ແລະ ທາງລົບທີ່ກຳລັງເກີດຂຶ້ນຈາກໂຄງການລົງທຶນຂອງພວກເຂົາ ແລະ ວິທີການໃນການປັບປຸງການດຳເນີນງານ ເພື່ອການຕິດຕາມກວດກາໃນໄລຍະຕໍ່ໜ້າ.



## 9.2. ການເປີດເຜີຍຂໍ້ມູນການລົງທຶນ ແລະ ຜົນຂອງການຕິດຕາມ

ການເຜີຍແຜ່ຂໍ້ມູນການລົງທຶນແມ່ນຈຳເປັນໂດຍກົດໝາຍລາວໃນທຸກໄລຍະຂອງການລົງທຶນ, ເລີ່ມແຕ່ການວາງແຜນຈົນຮອດການສິ້ນສຸດໂຄງການ. ດຳລັດວ່າດ້ວຍ ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ເລກທີ 21/ລບ, 2019 (ມາດຕາ 38) ກຳນົດໄວ້ວ່າ ເອກະສານທີ່ກ່ຽວຂ້ອງກັບການລົງທຶນ ເຊັ່ນ: ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມ, ແຜນການຄຸ້ມຄອງສິ່ງແວດລ້ອມ, ແຜນທຸລະກິດ ແລະ ບົດລາຍງານການຈັດຕັ້ງປະຕິບັດ, ຄວນໄດ້ຮັບການເຜີຍແຜ່ຕໍ່ສາທາລະນະ ໂດຍຜ່ານຫຼາຍຊ່ອງທາງເຊັ່ນ: ຈັດກອງປະຊຸມບ້ານ, ຜ່ານວີດີໂອ, ລາຍການວິທະຍຸ, ໂທລະພາບ, ເວັບໄຊທ໌ ແລະ ອື່ນໆ. ຜູ້ທີ່ໄດ້ຮັບຜົນກະທົບມີສິດສະແດງຄວາມຄິດເຫັນຕໍ່ບົດລາຍງານດັ່ງກ່າວ, ໂດຍສະເພາະໃນການສິ້ນສຸດໂຄງການ. ລັດຖະບານລາວ ຈະອະນຸຍາດໃຫ້ໂຄງການສຳເລັດພາຍຫຼັງທີ່ໄດ້ຮັບການຢືນຢັນກັບປະຊາຊົນທີ່ຖືກຜົນກະທົບ ແລະ ພາກສ່ວນກ່ຽວຂ້ອງອື່ນໆ ວ່າໂຄງການລົງທຶນໄດ້ສຳເລັດແຜນການຟື້ນຟູສິ່ງແວດລ້ອມ ແລະຂໍ້ຜູກພັນອື່ນໆ ຂອງຕົນແລ້ວ.




ຄຳແນະນຳຂອງລັດຖະບານຈີນ ກ່ຽວກັບການປົກປັກຮັກສາສິ່ງແວດລ້ອມ, ການປູກໄມ້ ແລະ ກະສິກຳ ຮຽກຮ້ອງໃຫ້ໂຄງການລົງທຶນເປີດເຜີຍຜົນຂອງການຕິດຕາມກວດກາໂຄງການຂອງຕົນຕໍ່ສາທາລະນະ. ໂດຍໃຫ້ນັກລົງທຶນລາຍງານແຜນການຄຸ້ມຄອງສິ່ງແວດລ້ອມ, ບົດລາຍງານຜົນກະທົບດ້ານສິ່ງແວດລ້ອມ ແລະ ບົດລາຍງານຄວາມຮັບຜິດຊອບທາງສັງຄົມເປັນປົກກະຕິ. ນອກຈາກນັ້ນ, ມັນຍັງຊຸກຍູ້ໃຫ້ໂຄງການລົງທຶນ ດຳເນີນການສົນທະນາເປັນແຕ່ລະໄລຍະ ລະຫວ່າງ ອຳນາດການປົກຄອງທ້ອງຖິ່ນ, ປະຊາຊົນ ແລະ ພາກສ່ວນກ່ຽວຂ້ອງອື່ນໆ ກ່ຽວກັບການຕັດສິນໃຈ ແລະ ການປ່ຽນແປງຕ່າງໆຂອງໂຄງການ. ການລາຍງານທີ່ໂປ່ງໃສ ແລະ ເປັນປົກກະຕິ ສາມາດຊ່ວຍສ້າງຄວາມເຊື່ອໝັ້ນ ແລະ ປັບປຸງພາບລັກຂອງບັນດາໂຄງການລົງທຶນພາຍໃນ ສປປ ລາວ, ໃນລະດັບພາກພື້ນ ແລະ ຊ່ວຍຫຼຸດຜ່ອນຄວາມສ່ຽງດ້ານການລົງທຶນ.



# IV. ສະຫຼຸບ

ປື້ມຄູ່ມືແນະນຳສະບັບນີ້ ແມ່ນພັດທະນາຂຶ້ນເພື່ອເປັນເຄື່ອງມືໃຫ້ນັກລົງທຶນຈີນ ໃຊ້ໃນການວາງແຜນ ແລະ ດຳເນີນໂຄງການ ໃນການລົງທຶນດ້ານກະສິກຳ ແລະ ປ່າໄມ້ ແບບມີຄວາມຮັບຜິດຊອບຕໍ່ສັງຄົມ ແລະ ສິ່ງແວດລ້ອມ ຢູ່ ສປປ ລາວ. ຄູ່ມືດັ່ງກ່າວແມ່ນໄດ້ສັງລວມເອົາບັນດາຫຼັກການຈາກສາກົນ ແລະ ລັດຖະບານ ສປ ຈີນ. ຈາກນັ້ນແມ່ນລວບລວມຂໍ້ກຳນົດດ້ານກົດໝາຍ ແລະ ລະບຽບການຂອງ ສປປ ລາວ. ຄູ່ມືສະບັບນີ້ໄດ້ແນະນຳໃຫ້ເຫັນເຖິງວິທີການ ແລະ ເຫດຜົນທີ່ນັກລົງທຶນຈີນ ຄວນດຳເນີນການລົງທຶນຂອງພວກເຂົາຢ່າງມີຄວາມຮັບຜິດຊອບ. ໂດຍໄດ້ຮັບຂໍ້ມູນຈາກລັດຖະບານລາວ, ພາກອົງການຈັດຕັ້ງທາງສັງຄົມ, ອົງການຈັດຕັ້ງສາກົນ ແລະ ນັກລົງທຶນ ຈີນ. ຄູ່ມືດັ່ງກ່າວໄດ້ຮັບການຮັບຮອງຢ່າງກວ້າງຂວາງ ເພື່ອເປັນເອກະສານອ້າງອີງໃຫ້ແກ່ນັກລົງທຶນ ຈີນ ທີ່ເຂົ້າມາລົງທຶນໃນຂະແໜງກະສິກຳ ແລະ ປ່າໄມ້.

ປື້ມຄູ່ມືແນະນຳສະບັບນີ້ ໄດ້ສັງລວມບັນດາຫຼັກການ ການລົງທຶນດ້ານກະສິກຳ ແລະ ປ່າໄມ້ ແບບມີຄວາມຮັບຜິດຊອບໄວ້ຢູ່ 7 ຫຼັກການ ທີ່ນັກລົງທຶນຄວນປະຕິບັດຕາມແຜນໂຄງການຕັ້ງແຕ່ເລີ່ມຕົ້ນຈົນເຖິງສຳເລັດໂຄງການ ດັ່ງນີ້:

1) ການປຶກສາຫາລື ແລະ ມີສ່ວນຮ່ວມຂອງປະຊາຊົນ;
2) ການເປີດເຜີຍຂໍ້ມູນ ແລະ ຄວາມໂປ່ງໃສ;
3) ການເຄົາລົບສິດທິຂອງປະຊາຊົນໃນການນຳໃຊ້ທີ່ດິນ, ການປະມົງ, ປ່າໄມ້ ແລະ ແຫຼ່ງນ້ຳ;
4) ການປະກອບສ່ວນເຂົ້າໃນການພັດທະນາສັງຄົມ;
5) ການນຳໃຊ້ແຮງງານທ້ອງຖິ່ນ ແລະ ຄວາມປອດໄພຂອງແຮງງານ;
6) ການຄວບຄຸມຄຸນນະພາບ ແລະ ຄວາມປອດໄພຂອງສິນຄ້າ;
7) ການພັດທະນາສີຂຽວ ແລະ ການປົກປັກຮັກສາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.

ນອກຈາກຫຼັກການເຫຼົ່ານີ້ຍັງມີ ບົດແນະນຳຂອງສາກົນກ່ຽວກັບການລົງທຶນທີ່ມີຄວາມຮັບຜິດຊອບ, ຄູ່ມືແນະນຳຂອງ ສປ ຈີນ ສຳລັບການລົງທຶນຢູ່ຕ່າງປະເທດ, ກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ. ການນຳໃຊ້ຫຼັກການເຫຼົ່ານີ້ໃນໂຄງການລົງທຶນ ສາມາດຊ່ວຍໃຫ້ນັກລົງທຶນຫຼຸດຜ່ອນຄວາມສ່ຽງຂອງໂຄງການ, ພ້ອມທັງບັນລຸຜົນປະໂຫຍດດ້ານສິ່ງແວດລ້ອມ, ສັງຄົມ ແລະ ເສດຖະກິດ ຕໍ່ທຸກພາກສ່ວນທີ່ກ່ຽວຂ້ອງ.

ນັກລົງທຶນມີພັນທະທີ່ຈະຕ້ອງຈັດຕັ້ງປະຕິບັດແບບຮັບຜິດຊອບ ຢູ່ໃນທຸກໆໄລຍະຂອງໂຄງການ. ຄູ່ມືແນະນຳນີ້ ໄດ້ກຳນົດໄລຍະຂອງຄວາມຮັບຜິດຊອບອອກເປັນ 5 ໄລຍະຄື: 1). ໄລຍະທີ I. ການວາງແຜນຍຸດທະສາດ, 2). ໄລຍະທີ II. ການອອກແບບ ແລະ ອະນຸມັດ, 3). ໄລຍະທີ III. ການຈັດຕັ້ງປະຕິບັດ, 4). ໄລຍະທີ IV. ການຕິດຕາມ ແລະ ປະເມີນຜົນ ແລະ 5). ໄລຍະທີ V. ການສິ້ນສຸດໂຄງການ ຫຼື ການລົງທຶນໃໝ່. ການດຳເນີນການທີ່ຈຳເປັນໃນແຕ່ລະຂັ້ນຕອນເຫຼົ່ານີ້ກຳນົດໂດຍຫຼັກການທີ່ລະບຸໄວ້ຂ້າງເທິງ, ລວມທັງຂໍ້ກຳນົດທາງດ້ານກົດໝາຍຂອງ ສປປ ລາວ ແລະ ການຈັດຕັ້ງປະຕິບັດ ລວມມີ:

1) **ການກະກຽມ ແລະ ການວາງແຜນການລົງທຶນຢ່າງຄົບຖ້ວນ** ໂດຍການກຳນົດພາກສ່ວນທີ່ກ່ຽວຂ້ອງ, ສຶກສາກອບກົດໝາຍຂອງ ສປປ ລາວ ແລະ ເຮັດການປະເມີນທີ່ຈຳເປັນໂດຍການມີສ່ວນຮ່ວມຂອງຊຸມຊົນທີ່ໄດ້ຮັບຜົນກະທົບ;

2) **ການປຶກສາຫາລື ແລະ ການມີສ່ວນຮ່ວມຂອງຊຸມຊົນທີ່ໄດ້ຮັບຜົນກະທົບ** ໃນທຸກໆໄລຍະຂອງໂຄງການ, ຮັບປະກັນການເອົາໃຈໃສ່ຕໍ່ກຸ່ມທີ່ມີຄວາມສ່ຽງຫຼາຍທີ່ສຸດ ແລະ ປະຕິບັດຕາມຂັ້ນຕອນຂອງ **FPIC**;

3) **ການສ້າງກົນໄກການແກ້ໄຂຄຳຮ້ອງທຸກ** ສຳລັບປະຊາຊົນທີ່ໄດ້ຮັບຜົນກະທົບແມ່ນຄວນນຳໃຊ້ກົນໄກນີ້ຈົນກວ່າກະປິດການລົງທຶນເພື່ອແຈ້ງບັນຫາທີ່ເກີດຂຶ້ນ, ຮັບຂໍ້ສະເໜີຢ່າງຕໍ່ເນື່ອງ ແລະ ປັບປຸງການຈັດຕັ້ງປະຕິບັດຂອງນັກລົງທຶນ;

4) **ການເຈລະຈາເຮັດສັນຍາທີ່ເປັນທຳກັບຊຸມຊົນ** ທີ່ລະບຸຢ່າງຈະແຈ້ງເຖິງພາລະບົດບາດ, ຄວາມຮັບຜິດຊອບຂອງແຕ່ລະຝ່າຍ ແລະ ແຈ້ງລາຍລະອຽດເຖິງຄຳໝັ້ນສັນຍາ ແລະ ແຜນການລົງທຶນ ຂອງໂຄງການລົງທຶນ;

5) **ການຊົດເຊີຍຜູ້ທີ່ໄດ້ຮັບຜົນກະທົບ** ແລະ ຖ້າຈຳເປັນແທ້ໆ ຕ້ອງໄດ້ມີການຍົກຍ້າຍຈັດສັນ ຕາມກົດລະບຽບຂອງ ສປປ ລາວ ແລະ ຮັບປະກັນການຍິນຍອມຂອງປະຊາຊົນທີ່ຖືກຜົນກະທົບກ່ຽວກັບແຜນການຊົດເຊີຍ ແລະ ຍົກຍ້າຍຈັດສັນ;

6) **ປະກອບສ່ວນເຂົ້າໃນການພັດທະນາສັງຄົມ** ໂດຍການແບ່ງຜົນປະໂຫຍດຂອງໂຄງການກັບຊຸມຊົນ ແລະ ພາກລັດຂັ້ນທ້ອງຖິ່ນ, ການສົ່ງເສີມການຈ້າງງານໃນທ້ອງຖິ່ນ ແລະ ການຝຶກອົບຮົມໃຫ້ແກ່ພະນັກງານ;

7) **ຫຼຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມ** ໂດຍສະເພາະການປົກປັກຮັກສາຊີວະນາໆພັນ, ຫຼຸດຜ່ອນ ແລະ ຄວບຄຸມການນຳໃຊ້ສານເຄມີ, ປະຕິບັດຕາມມາດຕະຖານມົນລະພິດ ແລະ ສິ່ງເສດເຫຼືອ ແຫ່ງຊາດ ແລະ ຟື້ນຟູພື້ນທີ່ທີ່ຖືກຜົນກະທົບທາງລົບຈາກການລົງທຶນ;

8) **ຮັບປະກັນຄຸນນະພາບ ແລະ ຄວາມປອດໄພຂອງຜະລິດຕະພັນ** ໂດຍປະຕິບັດຕາມມາດຕະຖານຄຸນນະພາບພາຍໃນ ແລະ ຕ່າງປະເທດ, ໄດ້ຮັບໃບຢັ້ງຢືນຜະລິດຕະພັນ ແລະ ເກັບກູ້ຜົນຜະລິດແບບຍືນຍົງ ທີ່ສອດຄ່ອງກັບລະບຽບຂອງ ສປປ ລາວ ແລະ ການຈັດຕັ້ງປະຕິບັດທີ່ດີທີ່ສຸດຂອງສາກົນ;

9) **ການຕິດຕາມ ແລະ ກວດກາ ການຈັດຕັ້ງປະຕິບັດຂອງການລົງທຶນ** ລວມເຖິງການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ, ສັງຄົມ ແລະ ເສດຖະກິດ ເພື່ອກຳນົດຂອບເຂດໃນການປັບປຸງ. ຫຼັງຈາກນັ້ນ, ເປີດເຜີຍຜົນຂອງການຕິດຕາມໃຫ້ແກ່ສາທາລະນະ ເພື່ອຄວາມໂປ່ງໃສ.

ການຈັດຕັ້ງປະຕິບັດຕາມຫຼັກການ ແລະ ຄູ່ມືແນະນຳສະບັບນີ້ ຈະຊ່ວຍໃຫ້ນັກລົງທຶນປະສົບຜົນສຳເລັດໃນການຈັດຕັ້ງປະຕິບັດໂຄງການ ໂດຍການສ້າງຄວາມໄວ້ເນື້ອເຊື່ອໃຈລະຫວ່າງນັກລົງທຶນ ແລະ ພາກສ່ວນທີ່ກ່ຽວຂ້ອງຂອງໂຄງການ. ຍິ່ງໄປກວ່ານັ້ນ, ການລົງທຶນທີ່ມີຄວາມຮັບຜິດຊອບກໍ່ຈະປະກອບສ່ວນເຂົ້າໃນການພັດທະນາ ສປປ ລາວ ແລະ ຊຸມຊົນແບບຍືນຍົງ, ປົກປັກຮັກສາສະພາບແວດລ້ອມ ແລະ ປັບປຸງການຮ່ວມມືດ້ານການລົງທຶນລະຫວ່າງ ສປປ ລາວ ແລະ ສປ ຈີນ ເພື່ອຮັບປະກັນຜົນປະໂຫຍດເຊິ່ງກັນ ແລະ ກັນ ສຳລັບທຸກຝ່າຍທີ່ກ່ຽວຂ້ອງ.



# ພາກທີ V. ເອກະສານ ຊ້ອນທ້າຍ

## ເອກະສານຊ້ອຍທ້າຍ I: ລາຍການກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງກັບການລົງທຶນ ດ້ານກະສິກໍາ ແລະ ປ່າໄມ້

ຄູ່ມືແນະນໍາສະບັບນີ້ ໄດ້ອ້າງອີງເຖິງບັນດາກົດໝາຍ ແລະ ລະບຽບການລຸ່ມນີ້ ເພື່ອໃຫ້ມີຄວາມສະເພາະເຈາະຈົງ ຊຶ່ງ ລາຍລະອຽດ ແຕ່ລະມາດຕາຢູ່ໃນພາກບົດຊ້ອນທ້າຍ:

### ຖະແຫຼງການແລະ ສົນທິສັນຍາສາກົນ:

1. ຖະແຫຼງການວ່າດ້ວຍ ສິດໃນການພັດທະນາ, 1986
2. ຖະແຫຼງການວ່າດ້ວຍ ສິດທິຂອງຊົນພື້ນເມືອງ, 2007
3. ສົນທິສັນຍາຊີວະນາໆພັນ (CBD)
4. ສົນທິສັນຍາ ຣາມຊາ ວ່າດ້ວຍເຂດດິນບໍລິເວນນໍ້າ (Ramsar Convention on Wetlands)
5. ສົນທິສັນຍາວ່າດ້ວຍການຄ້າຂາຍຊະນິດພັນສັດປ່າ ແລະ ພືດປ່າທີ່ໃກ້ຈະສູນພັນລະຫວ່າງຊາດ (CITES)

### ຍຸດທະສາດ:

1. ຍຸດທະສາດພັດທະນາກະສິກໍາ ຮອດປີ 2025 ແລະ ວິໄສທັດ ຮອດປີ 2030
2. ວິໄສທັດຮອດ ປີ 2030 ແລະ ຍຸດທະສາດ ການພັດທະນາເສດຖະກິດ-ສັງຄົມ 10 ປີ 2016-2025
3. ຍຸດທະສາດສິ່ງແວດລ້ອມ ແລະ ຊັບພະຍາກອນແຫ່ງຊາດ 2016-2025
4. ຍຸດທະສາດ ແລະ ແຜນການຈັດຕັ້ງປະຕິບັດ ຊີວະນາໆພັນແຫ່ງຊາດ
5. ຍຸດທະສາດປ່າໄມ້ແຫ່ງຊາດ ຮອດປີ 2030 ທີ່ກໍາລັງປັບປຸງ

### ມະຕິ:

1. ມະຕິຂອງຄະນະບໍລິຫານງານສູນກາງພັກ ວ່າດ້ວຍການເພີ່ມທະວີວຽກງານຄຸ້ມຄອງ ແລະ ພັດທະນາທີ່ດິນໃນ ໄລຍະໃໝ່ ເລກທີ 026/ຄບສພ, ລົງວັນທີ 3 ສິງຫາ 2017

### ກົດໝາຍ:

1. ກົດໝາຍວ່າດ້ວຍ ການສົ່ງເສີມການລົງທຶນ ເລກທີ 14/ສພຊ, ລົງວັນທີ 17 ພະຈິກ 2016
2. ກົດໝາຍວ່າດ້ວຍ ປ່າໄມ້ ເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019
3. ກົດໝາຍວ່າດ້ວຍ ກະສິກໍາ ເລກທີ 01/98 ສພຊ, ລົງວັນທີ 10 ຕຸລາ 1998
4. ກົດໝາຍວ່າດ້ວຍ ທີ່ດິນ ເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019
5. ກົດໝາຍວ່າດ້ວຍ ການຈັດສັນພູມລໍາເນົາ ແລະ ອາຊີບ ເລກທີ 45/ສພຊ, ລົງວັນທີ 15 ມິຖຸນາ 2018
6. ກົດໝາຍວ່າດ້ວຍ ການປົກປັກຮັກສາສິ່ງແວດລ້ອມ ເລກທີ 29/ສພຊ, ລົງວັນທີ 18 ທັນວາ 2012
7. ກົດໝາຍວ່າດ້ວຍ ສັດປ່າ ແລະ ສັດນໍ້າ (ເລກທີ 07/ສພຊ, ເຜີຍແຜ່ວັນທີ 24 ທັນວາ 2007)
8. ກົດໝາຍວ່າດ້ວຍ ການແກ້ໄຂຄໍາຮ້ອງທຸກ ເລກທີ 05/ສພຊ, ລົງວັນທີ 9 ພະຈິກ 2016
9. ກົດໝາຍວ່າດ້ວຍ ແຮງງານ ເລກທີ 43/ສພຊ, ລົງວັນທີ 24 ທັນວາ 2013
10. ກົດໝາຍວ່າດ້ວຍ ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເລກທີ 51/ສພຊ, ລົງວັນທີ 22 ມິຖຸນາ 2018
11. ກົດໝາຍວ່າດ້ວຍ ການຄໍ້າປະກັນການປະຕິບັດສັນຍາ ເລກທີ 06/ສພຊ, ລົງວັນທີ 20 ພຶດສະພາ 2005
12. ປະມວນກົດໝາຍແພ່ງ ເລກທີ 55/ສພຊ, ລົງວັນທີ 6 ທັນວາ 2018

## ດຳລັດ:

1. ດຳລັດວ່າດ້ວຍການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນຈາກໂຄງການພັດທະນາ ເລກທີ 84/ລບ, ລົງວັນທີ 5 ເມສາ 2016
2. ດຳລັດ ວ່າດ້ວຍ ການໃຫ້ເຊົ່າ ແລະ ສຳປະທານທີ່ດິນຂອງລັດໃນ ສປປ ລາວ ເລກທີ 135/ນຍ, ລົງວັນທີ 25 ພຶດສະພາ 2009
3. ດຳລັດວ່າດ້ວຍ ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ເລກທີ 21/ລບ, ລົງວັນທີ 21 ມັງກອນ 2019
4. ດຳລັດວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍ ການສົ່ງເສີມການລົງທຶນ ເລກທີ 119/ນຍ, ລົງວັນທີ 20 ເມສາ 2011
5. ດຳລັດວ່າດ້ວຍ ການຄຸ້ມຄອງຢາປາບສັດຕູພືດ ເລກທີ 258/ລບ, ລົງວັນທີ 24 ສິງຫາ 2017
6. ດຳລັດວ່າດ້ວຍ ການແກ້ໄຂຂໍ້ຂັດແຍ່ງທາງດ້ານແຮງງານ ເລກທີ 76/ລບ, ລົງວັນທີ 28 ກຸມພາ 2018
7. ດຳລັດວ່າດ້ວຍ ຄວາມປອດໄພ ແລະ ສຸຂະພາບແຮງງານ ເລກທີ 22/ລບ, ລົງວັນທີ 5 ກຸມພາ 2019
8. ດຳລັດວ່າດ້ວຍ ການສ້າງ ແລະ ພັດທະນາສີມືແຮງງານ ເລກທີ 036/ນຍ, ລົງວັນທີ 22 ມັງກອນ 2010
9. ດຳລັດວ່າດ້ວຍ ການສົ່ງເສີມການປູກໄມ້ເປັນສິນຄ້າ ເລກທີ 247/ລບ, ລົງວັນທີ 20 ສິງຫາ 2019
10. ດຳລັດວ່າດ້ວຍ ການຄຸ້ມຄອງປ່າຜະລິດແບບຍືນນານ ເລກທີ 59/ນຍ, ລົງວັນທີ 2 ພຶດສະພາ 2002
11. ດຳລັດວ່າດ້ວຍ ການຮັບຮອງ ແລະ ປະກາດໃຊ້ມາດຕະຖານສິ່ງແວດລ້ອມແຫ່ງຊາດ ເລກທີ 81/ກຊສ, ລົງວັນທີ 21 ກຸມພາ 2017
12. ດຳລັດ ວ່າດ້ວຍປ່າສະຫງວນ 2021 ທີ່ກຳລັງປັບປຸງ

## ຄຳສັ່ງ:

1. ຄຳສັ່ງວ່າດ້ວຍການເພີ່ມທະວີການຄຸ້ມຄອງນຳໃຊ້ເນື້ອທີ່ດິນ ເພື່ອສຳປະທານປູກໄມ້ອຸດສາຫະກຳ ແລະ ພືດຕ່າງໆ ໃນຂອບເຂດທົ່ວປະເທດ ເລກທີ 09/ນຍ, ລົງວັນທີ 02 ກໍລະກົດ 2020
2. ຄຳສັ່ງ ວ່າດ້ວຍການເພີ່ມທະວີຄວາມເຂັ້ມງວດ ໃນການຄຸ້ມຄອງ ແລະ ກວດກາ ການຂຸດຄົ້ນໄມ້, ເຄື່ອນຍ້າຍໄມ້ ແລະ ທຸລະກິດໄມ້ ເລກທີ 15/ນຍ, ລົງວັນທີ 13 ພຶດສະພາ 2016

## ຂໍ້ຕົກລົງ:

1. ຂໍ້ຕົກລົງ ວ່າດ້ວຍການຄຸ້ມຄອງຢາປາບສັດຕູພືດໃນ ສປປ ລາວ ເລກທີ 2860/ກປ, ລົງວັນທີ 1 ມິຖຸນາ 2010
2. ຂໍ້ຕົກລົງ ວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ບັນຊີໂຄງການລົງທຶນ ແລະ ກິດຈະການຕ່າງໆ ທີ່ຈະຕ້ອງດຳເນີນ ການສຶກສາເບື້ອງຕົ້ນກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ ຫຼື ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ເລກທີ 8056/ກຊສ, ລົງວັນທີ 17 ທັນວາ 2013
3. ຂໍ້ຕົກລົງຂອງລັດຖະມົນຕີ ວ່າດ້ວຍມາດຕະຖານກະສິກຳທີ່ດີ ກ່ຽວກັບຄວາມປອດໄພຂອງຜົນຜະລິດ ເລກທີ 0115/ກປ, ລົງວັນທີ 27 ມັງກອນ 2011
4. ຂໍ້ຕົກລົງມາດຕະຖານກະສິກຳທີ່ດີ ກ່ຽວກັບການຈັດການດ້ານສິ່ງແວດລ້ອມ ເລກທີ 0538/ກປ, ລົງວັນທີ 9 ກຸມພາ 2011
5. ຂໍ້ຕົກລົງ ວ່າດ້ວຍມາດຕະຖານກະສິກຳທີ່ດີກ່ຽວກັບຄຸນນະພາບຂອງຜົນຜະລິດ ເລກທີ 0359/ກປ, ລົງວັນທີ 9 ກຸມພາ 2011
6. ຂໍ້ຕົກລົງ ວ່າດ້ວຍມາດຕະຖານກະສິກຳທີ່ດີກ່ຽວກັບ ສຸຂະພາບ, ຄວາມປອດໄພ ແລະ ສະຫວັດດີການສັງຄົມຂອງຜູ້ອອກແຮງງານ ເລກທີ 0540/ກປ, ລົງວັນທີ 9 ກຸມພາ 2011
7. ຂໍ້ຕົກລົງຂອງລັດຖະມົນຕີວ່າການ ກະຊວງກະສິກຳ ແລະ ປ່າໄມ້ ວ່າດ້ວຍ ການກຳນົດມາດຕະຖານກະສິກຳອິນຊີ ເລກທີ 1666/ກຝ.ກປ, ລົງວັນທີ 30 ທັນວາ 2005)
8. ຂໍ້ຕົກລົງ ວ່າດ້ວຍການຂຶ້ນທະບຽນ ຢາປາບສັດຕູພືດ ເລກທີ 3604/ກປ, ລົງວັນທີ 17 ກັນຍາ 2017
9. ຂໍ້ຕົກລົງ ວ່າດ້ວຍການອະນຸຍາດນຳເຂົ້າແຮງງານຕ່າງປະເທດ ທີ່ມາເຮັດວຽກຢູ່ ສປປ ລາວ ເລກທີ 5418/ຮສສ, 2007

## ຄຳແນະນຳ:

1. ຄຳແນະນຳ ກ່ຽວກັບການພິຈາລະນາອະນຸມັດການລົງທຶນ ແລະ ກົນໄກການຄຸ້ມຄອງທີ່ດິນໃຫ້ເຊົ່າ ຫຼື ສຳປະທານ ສຳລັບການປູກພືດກະສິກຳ ເລກທີ 0457/ກຜທ, ລົງວັນທີ 27 ກຸມພາ 2019
2. ຄຳແນະນຳຂະບວນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ຈາກໂຄງການລົງທຶນ ແລະ ກິດຈະການຕ່າງໆ ເລກທີ 8030/ກຊສ, ລົງວັນທີ 17 ທັນວາ 2013
3. ຄຳແນະນຳການຈັດຕັ້ງປະຕິບັດ ລັດຖະບັນຍັດຂອງປະທານປະເທດ ວ່າດ້ວຍອັດຕາຄ່າເຊົ່າ ແລະ ຄ່າສຳປະທານທີ່ດິນຂອງລັດ ເລກທີ 537/ສນຍ.ອຄດຊ, ລົງວັນທີ 25 ທັນວາ 2009



# ເອກະສານຊ້ອຍທ້າຍ II: ບາງພາກສ່ວນທີ່ກ່ຽວຂ້ອງ ໃນການລົງທຶນດ້ານກະສິກຳ ແລະ ປ່າໄມ້ ຢູ່ ສປປ ລາວ

## ພາກລັດ

### ກະຊວງ ແຜນການ ແລະ ການລົງທຶນ

#### ກົມສົ່ງເສີມການລົງທຶນ

- ເປັນຫ້ອງການບໍລິການ ການລົງທຶນປະຕູດຽວຂັ້ນສູນກາງ ໃນການຄົ້ນຄວ້າ, ປະສານສົມທົບ, ສັງລວມ, ລາຍງານ ແລະ ຈັດຕັ້ງປະຕິບັດວຽກງານດຶງດູດ, ສົ່ງເສີມ, ປົກປ້ອງ ແລະ ຄຸ້ມຄອງການລົງທຶນຂອງພາກເອກະຊົນ;
- ຄົ້ນຄວ້າກົດໝາຍ ແລະ ນິຕິກຳຂອງ ສປປ ລາວ ກ່ຽວກັບວຽກງານດຶງດູດ, ສົ່ງເສີມ, ປົກປ້ອງ ແລະ ຄຸ້ມຄອງການລົງທຶນຂອງພາກເອກະຊົນ;
- ເປັນສູນລວມຂໍ້ມູນຂ່າວສານ ແລະ ສະຖິຕິ ຂອງໂຄງການລົງທຶນ ຂອງພາກເອກະຊົນ ແລະ ສະໜອງຂໍ້ມູນກ່ຽວກັບການລົງທຶນ;
- ຮ່າງໃບອະນຸຍາດການລົງທຶນ, ໃບສົ່ງເສີມການລົງທຶນ, ໃບແຈ້ງໂຈະ, ໃບແຈ້ງເຕືອນ, ໃບຖອນອະນຸຍາດການລົງທຶນ, ໃບຕໍ່ອາຍຸ ຫຼື ສິ້ນສຸດໂຄງການ ເພື່ອສະເໜີຂໍອະນຸມັດຕາມລະບຽບການ;
- ຕິດຕາມ, ກວດກາ ແລະ ຊຸກຍູ້ ແລະ ສະເໜີວິທີແກ້ໄຂບັນຫາຕໍ່ຂັ້ນເທິງກ່ຽວກັບການຈັດຕັ້ງປະຕິບັດໂຄງການລົງທຶນ ແລະ ອື່ນໆ.

#### ຄະນະກຳມະການຮ່ວມມືລາວ - ຈີນ

- ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຝ່າຍລາວ ແລະ ຝ່າຍຈີນ ກ່ຽວກັບການກຳນົດແຜນ, ການຕິດຕາມ ແລະ ການຊຸກຍູ້ຈັດຕັ້ງປະຕິບັດ;
- ຊີ້ນຳ ແລະ ຊຸກຍູ້ ການຈັດຕັ້ງປະຕິບັດໂຄງການຮ່ວມມື ແລະ ໂຄງການລົງທຶນໃນຂົງເຂດຕ່າງໆ ທີ່ລັດຖະບານທັງສອງຝ່າຍເຫັນດີ ແລະ ຕີລາຄາປະສິດທິຜົນຂອງໂຄງການ.

### ກະຊວງ ກະສິກຳ ແລະ ປ່າໄມ້

#### ກົມປູກຝັງ

- ສະໜອງເຕັກນິກການປູກພືດທີ່ຖືກຕ້ອງຫຼັກການ ແລະ ມາດຕະຖານ;
- ສ້າງນິຕິກຳກ່ຽວກັບມາດຕະຖານກະສິກຳສະອາດ ແລະ ມາດຕະຖານອື່ນ ຂອງ ສປປ ລາວ;
- ຕິດຕາມ, ກວດກາ ບັນດາຟາມການລົງທຶນທີ່ຂໍອະນຸຍາດ ຂຶ້ນທະບຽນຕາມມາດຕະຖານ ກະສິກຳຕາມຈຸດປະສົງ ແລະ ພິຈາລະນາອະນຸມັດໃບຢັ້ງຢືນດັ່ງກ່າວ;
- ການຄວບຄຸມຄຸນນະພາບຂອງການປູກພືດກະສິກຳໃຫ້ໄດ້ຕາມມາດຕະຖານຫຼັງໄດ້ຮັບໃບຢັ້ງຢືນ.

#### ກົມປ່າໄມ້

- ຕິດຕາມ, ກວດກາ ແລະ ປະເມີນຜົນ ການລົງທຶນທີ່ດຳເນີນກິດຈະການກ່ຽວກັບປ່າໄມ້ ແລະ ທີ່ດິນປ່າໄມ້ ການປູກໄມ້, ຟື້ນຟູປ່າໄມ້, ການຂຸດຄົ້ນໄມ້, ເກັບກູ້ເຄື່ອງປ່າຂອງດົງ, ສັດນ້ຳ-ສັດປ່າ, ການທ່ອງທ່ຽວທຳມະຊາດ ແລະ ກິດຈະການອື່ນໆ ຕາມພາລະບົດບາດຂອງຕົນ;
- ທົບທວນ ແລະ ປະເມີນການຈັດຕັ້ງປະຕິບັດ ແນວທາງນະໂຍບາຍ, ຍຸດທະສາດ, ແຜນການ, ແຜນງານໂຄງການຕ່າງໆທີ່ວາງອອກ ແນໃສ່ປັບປຸງໃຫ້ສອດຄ່ອງຕາມແນວທາງນະໂຍບາຍຂອງພັກ ແລະ ລະບຽບການຂອງລັດ ໃນແຕ່ລະໄລຍະ;

- ຄຸ້ມຄອງການຂຸດຄົ້ນໄມ້ ແລະ ເຄື່ອນຍ້າຍໄມ້ທ່ອນ, ໄມ້ເລື່ອຍ, ໄມ້ປະດັບ, ໄມ້ຄໍ້າແບບ, ໄມ້ຫຼັກຮົ້ວ, ໄມ້ເປັນພະລັງງານ ແລະ ເຄື່ອງປ່າຂອງດົງລວມທັງການເຄື່ອນຍ້າຍ ສັດນ້ຳ-ສັດປ່າ ແລະ ຖ່ານ;
- ຊຸກຍູ້, ຕິດຕາມ, ປະເມີນຜົນ, ສະຫຼຸບ ແລະ ລາຍງານປະຈຳອາທິດ, ປະຈຳເດືອນ, ປະຈຳ 3ເດືອນ, ປະຈຳ 6ເດືອນ, ປະຈຳປີ ແລະ 5ປີ;
- ຄົ້ນຄວ້າ ແລະ ປະກອບຄຳເຫັນກ່ຽວກັບການລົງທຶນພາຍໃນ ແລະ ຕ່າງປະເທດ ດ້ານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ບົນພື້ນຖານກົດໝາຍ ແລະ ລະບຽບການກຳນົດໄວ້.

**ກົມຄຸ້ມຄອງ ແລະ ພັດທະນາທີ່ດິນ ກະສິກຳ**

- ສັງລວມ, ຄຸ້ມຄອງ, ສະໜອງ, ບໍລິການຂໍ້ມູນຂ່າວສານກ່ຽວກັບທີ່ດິນ ທີ່ກ່ຽວຂ້ອງກັບວຽກຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳໃຫ້ແກ່ສັງຄົມ;
- ຄົ້ນຄວ້າ, ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອທົບທວນບົດວິພາກເສດຖະກິດ, ປະເມີນຜົນກະທົບ ທີ່ເກີດຂຶ້ນຈາກການສະເໜີລົງທຶນ, ເຊົ່າ ຫຼື ສຳປະທານທີ່ດິນກະສິກຳ ກ່ອນການນຳສະເໜີຂັ້ນເທິງ ຕົກລົງອະນຸມັດ;
- ຕິດຕາມກວດກາການນຳໃຊ້ທີ່ດິນຂອງນັກລົງທຶນ ແລະ ຜູ້ປະກອບການໃຫ້ຖືກຕ້ອງຕາມສັນຍາ ແລະ ກົດໝາຍ;
- ສຳຫຼວດ, ຈັດສັນ, ກຳນົດແບ່ງເຂດທີ່ດິນກະສິກຳ, ຄົ້ນຄວ້ານຳສະເໜີຂຶ້ນທະບຽນທີ່ດິນດັ່ງກ່າວ, ໂດຍສົມທົບກັບພາກສ່ວນທີ່ກ່ຽວຂ້ອງເພື່ອຄຸ້ມຄອງການນຳໃຊ້ຢ່າງຖືກຕ້ອງ ແລະ ແທດເໝາະກັບເງື່ອນໄຂຕົວຈິງ.

**ກົມແຜນການ ແລະ ການເງິນ**

- ລົງລາຍເຊັນເອກະສານປະກອບຄຳເຫັນ ວຽກງານການຮ່ວມມື, ການລົງທຶນພາຍໃນປະເທດ ແລະ ຕ່າງປະເທດສາກົນ ແລະ ພາກສ່ວນຕ່າງໆຂອງຂະແໜງການກ່ຽວຂ້ອງທີ່ຮັບຜິດຊອບວຽກງານຮ່ວມມື ແລະ ລົງທຶນ;
- ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ທັງພາຍໃນ ແລະ ຕ່າງປະເທດ ໃນການຮ່ວມມືດ້ານວິທະຍາສາດ-ເຕັກນິກ, ສະໜອງ ແລະ ແລກປ່ຽນຂໍ້ມູນ ແລະ ສະຖິຕິກະສິກຳ.

## ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ

**ກົມທີ່ດິນ**

- ສົມທົບກັບຂະແໜງການຕ່າງໆ ຂັ້ນສູນກາງ ແລະ ທ້ອງຖິ່ນ ໃນການຄຸ້ມຄອງທີ່ດິນລັດແບບລວມສູນ, ການພັດທະນາທີ່ດິນ, ການຫັນທີ່ດິນເປັນທຶນ, ການອະນຸຍາດໃຫ້ເຊົ່າ ແລະ ສຳປະທານທີ່ດິນລັດ
- ເຂົ້າຮ່ວມໃນຄະນະວິຊາການ ເພື່ອຄົ້ນຄວ້າ ປະກອບຄຳເຫັນ ແລະ ສະໜອງຂໍ້ມູນດ້ານທີ່ດິນ ໃນການພິຈາລະນາອະນຸມັດໂຄງການລົງທຶນ ແລະ ກິດຈະການຕ່າງໆ ໃຫ້ແກ່ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຂັ້ນສູນກາງ
- ສະເໜີຂັ້ນເທິງພິຈາລະນາ ກ່ຽວກັບ ການອອກອະນຸຍາດ, ສັ່ງໂຈະ ຫຼື ຍົກເລີກກິດຈະກຳໃດໜຶ່ງກ່ຽວກັບການຄຸ້ມຄອງ, ການບໍລິຫານທີ່ດິນ, ການຈັດສັນ, ວາງແຜນການນຳໃຊ້ ແລະ ພັດທະນາທີ່ດິນ

**ກົມສິ່ງແວດລ້ອມ**

- ປະເມີນຜົນກະທົບດ້ານສິ່ງແວດລ້ອມຂອງໂຄງການລົງທຶນຕັ້ງແຕ່ເລີ່ມຕົ້ນການເຮັດການປະເມີນຜົນກະທົບດ້ານສິ່ງແວດລ້ອມ, ການຈັດຕັ້ງປະຕິບັດໂຄງການ ແລະ ກ່ອນສິ້ນສຸດໂຄງການ ເປັນແຕ່ລະໄລຍະ;
- ສ້າງນະໂຍບາຍ ແລະ ນິຕິກຳຕ່າງໆ ເພື່ອປົກປ້ອງ, ຫຼຸດຜ່ອນຜົນກະທົບດ້ານສິ່ງແວດລ້ອມ ແລະ ສັງຄົມ ຈາກໂຄງການລົງທຶນ;
- ສັງລວມຜົນການປະເມີນໂຄງການ ແລ້ວສົ່ງຫາພາກສ່ວນທີ່ກ່ຽວຂ້ອງກ່ຽວກັບການລົງທຶນ ເພື່ອຫາວິທີແກ້ໄຂບັນຫາທີ່ພົບເຫັນ;
- ປ້ອງກັນ, ຄວບຄຸມມົນລະພິດທາງອາກາດ, ນ້ຳ, ດິນ, ສຽງ, ແສງ, ສີ ແລະ ກິ່ນ ຈາກແຫຼ່ງປ່ອຍ ແລະ ແຫຼ່ງທົ່ວໄປ;

- ຄຸ້ມຄອງການນຳໃຊ້ສານເຄມີທີ່ເປັນພິດ, ວັດຖຸອັນຕະລາຍ, ສິ່ງເສດເຫຼືອອັນຕະລາຍ ແລະ ສິ່ງເສດເຫຼືອອື່ນໆ, ສຳຫຼວດ ແລະ ເກັບກຳຂໍ້ມູນກ່ຽວກັບມົນລະພິດ, ວາງແຜນ, ປ້ອງກັນ, ສະກັດກັ້ນ ແລະ ແກ້ໄຂເຫດການສຸກເສີນ ທີ່ມີຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ໃນຂອບເຂດທົ່ວປະເທດ.

## ກະຊວງ ອຸດສາຫະກຳ ແລະ ການຄ້າ

**ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ**

- ຄຸ້ມຄອງການລົງທະບຽນທີ່ຖືກຕ້ອງຂອງວິສາຫະກິດ ຫຼື ບໍລິສັດທີ່ລົງທຶນ;
- ບໍລິການຂຶ້ນ ຫຼື ປ່ຽນແປງເນື້ອໃນທະບຽນວິສາຫະກິດ ທີ່ຢູ່ໃນຂັ້ນຄຸ້ມຄອງຂອງກະຊວງ;
- ສົ່ງເສີມບັນຍາກາດການປະກອບທຸລະກິດ ຫຼື ການສ້າງຕັ້ງທຸລະກິດຂອງນັກລົງທຶນພາຍໃນ ຂອງປະຊາຊົນໃຫ້ມີຄວາມສະດວກ;
- ບໍລິການໃຫ້ຄຳປຶກສາດ້ານກົດໝາຍທີ່ກ່ຽວຂ້ອງ ແກ່ຜູ້ໃຊ້ບໍລິການ ໂດຍສະເພາະນັກລົງທຶນ.

## ກະຊວງ ແຮງງານ ແລະ ສະຫວັດດີການສັງຄົມ

- ສ້າງນະໂຍບາຍດ້ານແຮງງານ, ສະຫວັດດີການ ແລະ ຄວາມປອດໄພຂອງແຮງງານລາວ;
- ສົ່ງເສີມໃຫ້ມີການນຳໃຊ້ແຮງງານຂອງປະຊາຊົນເຂົ້າໃນການລົງທຶນ ໂດຍໃຫ້ມີການພັດທະນາສີມືແຮງງານຕາມໜ້າວຽກຂອງໂຄງການລົງທຶນ;
- ຊຸກຍູ້ໃຫ້ທຸກການລົງທຶນນຳໃຊ້ລະບົບປະກັນສັງຄົມ ຕາມກົດໝາຍຂອງ ສປປ ລາວເພື່ອຄຸ້ມຄອງແຮງງານລາວ.

## ພາກສ່ວນອື່ນໆ

**ພາກສ່ວນເອກະຊົນ**

- ເປັນເຈົ້າຂອງໂຄງການລົງທຶນ;
- ສ້າງຄວາມເຂົ້າໃຈໃຫ້ແກ່ປະຊາຊົນທີ່ຖືກຜົນກະທົບ;
- ຮັບປະກັນການຍົກຍ້າຍຈັດສັນ ແລະ ທົດແທນຄ່າເສຍຫາຍໃຫ້ແກ່ປະຊາຊົນ ຕາມກົດໝາຍຂອງ ສປປ ລາວ;
- ປັບປຸງຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີກວ່າເກົ່າ;
- ຮັບປະກັນແບ່ງຜົນປະໂຫຍດທີ່ເປັນທຳ ລະຫວ່າງໂຄງການ ແລະ ປະຊາຊົນ;
- ສ້າງກົນໄກໃຫ້ຊຸມຊົນເພື່ອສະໜອງຄຳຄິດເຫັນຕໍ່ເນື່ອງໃນໂຄງການ.

**ອົງການຈັດຕັ້ງສາກົນ ແລະ ອົງການຈັດຕັ້ງທາງສັງຄົມ**

- ໃຫ້ຄວາມຮູ້ແກ່ປະຊາຊົນ ກ່ຽວກັບການລົງທຶນດ້ານກະສິກຳ;
- ເຜີຍແຜ່ລະບຽບກົດໝາຍທີ່ກ່ຽວຂ້ອງກັບການລົງທຶນໃຫ້ແກ່ປະຊາຊົນ ເພື່ອຮັບປະກັນເລື່ອງສິດ ແລະ ຜົນປະໂຫຍດທີ່ປະຊາຊົນຈະໄດ້ຮັບ;
- ສາມາດເປັນແຫຼ່ງຂໍ້ມູນ ສຳລັບບໍລິສັດທີ່ຈະເຂົ້າໃຈຫຼາຍຂຶ້ນກ່ຽວກັບສະພາບການທ້ອງຖິ່ນຂອງພື້ນທີ່ການລົງທຶນຂອງພວກເຂົາ.

**ອຳນາດການປົກຄອງບ້ານ ແລະ ປະຊາຊົນ**

- ເປັນຜູ້ທີ່ໄດ້ຮັບຜົນກະທົບດ້ານບວກ ແລະ ດ້ານລົບ ຈາກໂຄງການລົງທຶນ;
- ພິຈາລະນາຮັບ ຫຼື ປະຕິເສດ ໂຄງການລົງທຶນດັ່ງກ່າວ ເມື່ອຜ່ານການວິເຄາະຜົນໄດ້, ຜົນເສຍຈາກການລົງທຶນ ແລະ ຕົກລົງເຫັນດີເປັນເອກະພາບ;
- ໃຫ້ຄວາມຮ່ວມມືກັບໂຄງການລົງທຶນທີ່ປະຊາຊົນເອກະພາບຮັບເອົາ ເພື່ອພັດທະນາຊຸມຊົນຂອງຕົນເອງ;
- ສະໜອງຄຳເຫັນໃຫ້ບໍລິສັດ ແລະ ລັດຖະບານກ່ຽວກັບການຈັດຕັ້ງປະຕິບັດໂຄງການ ແລະ ຂໍ້ຂ້ອງໃຈໃດໆ.

